# ຫນ່າວໃຈ



ປາໄບ

ຂອງ

ດວງຈຳປາ

# ຫົວໃຈ

ປາໃບ

ຂອງ

ກອງຈຳປາ

## ໜັງສືພິມ "ໄຜ່ໜາມ" ລາຍເດືອນ

ຜູ່ຈັດພິມ

## ມະຫາສີລາ ວີຣະວົງສ໌

ເຈົ້າຂອງ – ຜູ່ອຳນວຍການ

## ນາງດາຣາ ກັລຍາ

ຜູ່ຈັດການ


ຕູ້ ປ.ນ. **230** ວຽງຈັນ ພຣະຣາຊອານາຈັກລາວ

ພິມເທື່ອທີ່ນຶ່ງ ເດືອນມີນາ **2514**

ຈຳນວນ **1500** ເຫລັ້ມ



– *ສງວນລິຂສິດ* –

# ສາລະບານ


ໜ້າ

ຫົວໃຈຍັງອຸ່ນ - - - - - (ກ)

ຍ້ອນໃຜ ? - - - - 10

● ປາໄມ

ຕາກາຍ - - - - 28

● ດວງຈຳປາ

ຈ່າເກະມີຫົວໃຈ - - - - 42

● ປາໄມ

ລົມເມົາ... ຮັກ - - - - 54

● ທົ່ງອູບມຸງ

ເຣື່ອງນີ້ເພື່ອ ຍອດຊູ້ - - - - 70

● ປາໄມ

ໜ້າ

ຕາເວັນລັບຫລ່ຽມພູ - - - - - 80

● ດວງຈຳປາ

ບົດຣຽນແສນແສບ - - - - - 96

● ປາໄນ

ສ່ຳນັ້ນແຫລະຜູ້ຊາຍ - - - - - 108

● ດວງຈຳປາ

ນ້ຳໃຈ - - - - - 122

● ອິນທິຣາ

ທາງເລືອກຂອງສິດທິເດດ - - - - - 140

● ດອກເກດ

ດວງຈຳປາ ຕອບຈົດໝາຍທ້າຍເຫລັ້ມ - - - 156


ອຸທິນ ບຸນຍາວົງ

ວິທຍາຈົນ.... ຍັງຮູ້ຈັກສົນໃຈໃຄ່ຮູ້ຊີວິດພືດ ແລະສັດທັງປວງ

ສາທຸຈົນ.... ຍັງສົນໃຈໃຄ່ຮູ້ໃນທັມທັງປວງ

ສັນໃດ.... ເມື່ອເກີດເປັ່ນລາວແລ້ວ ຈະບໍ່ສົນໃຈໃຄ່ຮູ້ພາສາ
ລາວກະຫ່ອນດີ...

ອ່ານປຶ້ມລາວ.... ຢ່າຄິດຍ້ານວ່າຈະພາໃຫ້ເປັ່ນຄົນໂງ່... ເບິ່ງ
ແຕ່ບຸກຄົນຊັ້ນສາສຕຣາຈານ ເພິ່ນກໍຍັງອ່ານດີກັນ....



# ຫົວໃຈຍັງອຸ່ນ

ຜອມຄິດອຸກອັ້ງທັ້ງທອງຢູ່ວ່າ ຈະຫາເງິນ ມາໃຊ້ຄ່າພິມທີ່ຍັງຕິດຄາຄ້າງຢູ່.... ຄິດອຸກວ່າ ຈະດົ້ມດ່າວເຣຣົມແບບໃດ ຈຶ່ງຈະໃຫ້ຜົລອອກ ຊຸດຕໍ່ ໆ ໄປ ຜາກົດເປັ້ນຮູບຮ່າງຂຶ້ນມາຕາມ ຫວັງແລະເຈຕນາ...

ຕອນນັ້ນໃຫ້ວ່າ ຫົວໃຈເກີດບໍ່ຮອມຜອຍ ຫວັ້ງເວ ຈົນຮູ້ສຶກມີອາການຈັບສັ້ນ ໜາວສະບັ້ນຮອດໃນ ໆ ມຸ້ມລະ

ເອົາເປັ້ນວ່າຫົວໃຈຜອມໜາວ....

ຫລືຜອມໜາວໃຈ

ຫລືວ່າໜາວໃນ ໆ ຫົວໃຈຈົນສັ້ນ

ຈັ່ງໃດກໍໄດ້....

ກໍພໍດີ....

ມີຈົດໝາຍມາຮອດຕູ້ ປ.ນ. 230 ນັບໄດ້ສິບກວ່າກ້ານ....

ເປັນດັ່ງນັ້ນ ກໍຍັງອຸ່ນຫວງມາວ່າເດ້ ! !

ກຳລັງໃຈບໍ່ຮູ້ວ່າໄຫລຫລັ່ງມາແຕ່ທາງໃດ ຫລຸມາກອງເຮັດເຈັ້ນເຫັ້ນຢູ່ຕໍ່ໜ້າ ຟາດເອົາ ປາໄນ... ດວງຈຳປາ... ຯລຯ... ເກີດປິຕິຍິນດີຂຶ້ນມາບໍ່ແມ່ນຂອງດ່ອຍ...

ເວົ້າພົ້ນຈົດໝາຍຫລາຍກ້ານ ທີ່ມີມາຮອດຕູ້ ປ.ນ. 230 ນີ້ ທີ່ເຮັດໃຫ້ *ຄນະໄຜ່ຫນາມ* ຕື້ນຕັນໃຈຍ້ອນທີ່ສຸດຈົນເຮັດໃຫ້ແຄ້ນໃນອົກກໍແມ່ນ ກ້ານຂອງທ່ານ *ສາສຕຣາຈານ ມ້າກ ເຣນໍ*.... ພວກເຮົາແຄ້ນຍ້ອນອີ່ມໃຈ... ຍ້ອນເປັນສຸກໃຈ ແລະຕື້ນຕັນໃຈ ຍ້ອນໃຈບໍ່ເຄີຍຄິດວ່າ ວາສນາຊາຕາຈະມີປັນຍາຊົນບຸກຄົນສຳຄັນເຖິງຂນາດນີ້ ໃຫ້ຄວາມສົນໃຈອ່ານ ແລະວິຈັຍວິຈານ ຜົນວຽກຂອງພວກເຮົາ....

ເວົ້າແນວນີ້ ບໍ່ແມ່ນກິນແລ້ວລືມພໍ້ ຯ....

ບໍ່ແມ່ນບໍ່ດີໃຈ ບໍ່ອຸ່ນໃຈຍ້ອນຈົດໝາຍກ້ານອື່ນ....

ຈົດໝາຍກ້ານໃດ ໆ ກໍມີຄ່າທີ່ກັມພົດ ສຳຫລັບຊາວ *ຄນະໄຜ່ຫນາມ*

ແຕ່ວ່າເວົ້າເຖິງກ້ານຂອງທ່ານ *ສາສຕຣາຈານ*ຯ ເປັນກໍຣະນີພິເສດ ກໍຍ້ອນວ່າໃນດ້ານພາສາແລະອັນສອນສາດນີ້ ທ່ານເປັນຜູ້ມີພ້ອມບໍ່ວ່າ ຄຸນວຸທິຫລືວັຍວຸທິ ຊ້າຍັງຢູ່ຕ່າງແດນຕື່ມອີກ.... ທ່ານກະຣຸນາຫລຸດກຽດລົງມາ ສົນໃຈຄນະພຸ່ມນ້ອຍຄືເຮົາແລ້ວ ເປັນຫຍັງເຮົາຈຶ່ງໃຫ້ກຽດເທີດທູນທ່ານແດ່ ບໍ່ໄດ້ຊັ້ນເບາະ ?

ກະບໍ່ແມ່ນຢາກເວົ້າສຽດຫາບຊ້າຊາ ສອຍຫຍັງດອກ ດິນລາວເຮົານີ້ ລາງຄົນ (ພວກປັ້ນຍາຊົນ ແລະທີ່ຫລົງເຂັ້ນຕົວເອງວ່ານັກປຣາດ) ເຫັນຊູມເຮົາພິມປື້ມອອກຂາຍຍັງຮູ້ສຶກເຈັບແສບແກ່ນຕາກໍມີ.... "ອ່ານໄຕລາວບໍ່ເຂົ້າໃຈດີ' ວ່າຊັ້ນເພິ່ນວ່າ...

ກະຊ່າງເພິ່ນ....

ວ່າແຕ່ດຽວນີ້ ທາງຄນະພານໃຜ່ ຂໍຖືໂອກາດເອົາຈົດໝາຍຊຶ່ງ *ທ່ານສາສຕຣາຈານ ມ້າກ ເຣນໍ* ມີມາເຖິງຄນະເຮົາມາຕີພິມໄວ້ເປັນບົດນຳເບື້ອງຕົ້ນ ສຳຫລັບຊຸດ "*ຫນາວໃຈ*"

ນີ້ ພ້ອມເທິງຕົ້ນສະບັບແລະສະບັບແປ

ນັບເປັນຄວາມອົບອຸ່ນໃຈສູງສຸດ ທີ່ຄນະເຮົາພໍ່ມີ

ນັບເປັນຄ່າຕອບແທນອັນເລີດລົ້ນ ແລະຫາໄດ້ຍາກ ຈາກຜົນວຽກຂອງນັກຂຽນໜ້າໃໝ່ ດັ່ງພວກເຮົາຈະພໍ່ຫາໄດ້....

ຄນະເຮົາຂໍນ້ອມຮັບເອົາຄຳຊົມເຊີຍ ຂອງທ່ານ ສາສຕຣາຈານ... ແລະຈາກທຸກ ໆ ທ່ານທີ່ຊົມເຊີຍໄປຍັງຄນະ ໜານໄຜ່ ດ້ວຍຄວາມຮູ້ສຶກພາກພູມ

ແລະຂໍຢືນຢັ້ນເປັ່ນແນ່ແທ້ວ່າ ຈະຢືນຢູ່ທົນສູ້ເທິງ ເວທີອັກສອນຂອງລາວນີ້ຕໍ່ໄປ... ຕລອດໄປ...

ຕລອດໄປ... ຈົນກວ່າບັອນະໂລກລາວຈະກ້າວໜ້າ ຖາວອນ....

ນະທີ່ສຳນັກງານໜັງສືພິມ "ໄຜ່ໜາມ"

ວຽງຈັນ, ວັນທີ່ 28 ມັກຣາ 2514

ປາໃນ

M. le Professeur Marc REINHORN
12, rue Durantin
PARIS 18ème

PARIS, le 17 Novembre 1971

Chers ປາໃນ, ດວງຈໍາປາ, ແລະພູພາເງິນ ດາຣາ

Les amis lao, parmi lesquels votre charmante soeur ດວງເດືອນ m'ont fait connaître les productions littéraires [illegible] (ສະບັບ [illegible])

Je les ai lues avec beaucoup de plaisir et de satisfaction. Les [illegible] auteurs ont de la verve, du tempérament, de l'esprit; ce sont de fins observateurs et courageux par dessus le marché, car ils osent dire la vérité, dénoncer les abus, le laisser-aller, la lâcheté, la cupidité de leurs compatriotes. Ils racontent les faits de tous les jours dans un style simple dans un vocabulaire lao courant. Cependant comme je suis un lecteur lointain, je souhaiterais que les mots nouveaux (néologismes et emprunts) fassent l'objet d'une explication en fin de fascicule.

Par leurs écrits, ces auteurs consolident l'idée de la personnalité lao en affirmant ses valeurs intellectuelles et morales; en utilisant la langue, ils contribuent à la répandre, à la faire apprécier donc à la garder. Tout lao doit se réjouir de cela. Pour ma part je ne puis que les applaudir chaleureusement et les encourager à produire davantage, si toutefois ils en avaient besoin, mais je ne le pense pas, car comme je l'ai dit ils ont du tempérament et ils iront loin.

Avant de clore ma lettre, je voudrais ajouter un mot à l'intention de leur valeureux père MAHA SILA VIRAVONG. Que ses enfants soient sans inquiétude quant à sa renommée, car sa valeur a été prouvée par toute sa production. Même s'il n'a pas signé ses écrits, son style signe pour lui, les savants, les spécialistes ne s'y trompent pas.

Pour terminer je demande aux auteurs s'ils m'autorisent à les traduire en français pour le Bulletin de l'Association Amitié franco-lao (avec mention : tous droits réservés).

Avec les sentiments très cordiaux de

M Reinhorn

# ສຳເນົາແປຈົດໝາຍຂອງທ່ານສາສຕຣາຈານ ມ້າກ ເຣນໍ

ສາສຕຣາຈານ ມ້າກ ເຣນໍ

ເຮືອນເລກທີ່ 12 ຖນົນດູຣັງແຕ້ງ

ກຸງປາຣີສ໌—ມົນທົນທີ່ 18

ປະເທດຝຣັ່ງເສດ

ທີ່ກຸງປາຣີສ໌, ວັນທີ່ 19 ພຶສຈິກາ 1971

ປາໄມ—ດວງຈຳປາ ແລະ ແລງ ພູຜາເງິນ ທີ່ຮັກແພງ,

ເພື່ອນຊາວລາວທີ່ຢູ່ປາຣີສ໌ ຮວມທັງ "ດອກເກດ" ຜູ່ເປັ່ນນ້ອງຂອງພວກທ່ານ ໄດ້ຊ່ອຍແນະນຳຜົນງານດ້ານການຂຽນຂອງພວກທ່ານຫລາຍເຫລັ້ມແກ່ຂ້າພະເຈົ້າ ອາທິເຊັ່ນ: ກຸຍກິ່ນສາວ ຄາວຜູ່ຊາຍ, ທະເລຊີວິດ, ກະວີຊາວບ້ານ ແລະ ຜູ່ຍິງນໍ່ຜູ່ຍິງ

ຂ້າພະເຈົ້າອ່ານໜັງສືເຫລົ່ານັ້ນ ດ້ວຍຄວາມບັນເທີງແລະຖືກອົກຖືກໃຈເປັ່ນຢ່າງຍິ່ງ ທ່ານທັງສາມເປັ່ນນັກຂຽນທີ່ມີຄາຣົມລ່ຽນໄຫລ ຂຽນໄດ້ຢ່າງມີອາຣົມແລະແນວຄິດ ນັບວ່າພວກທ່ານເປັ່ນນັກສັງເກດ ທີ່ມີດຸລຍະພິນິດຖີ່ຖ້ວນ ແລະມີຄວາມກ້າຫານໃນການສະແດງຄວາມນຶກຄຶດ ຫລາຍທີ່ສຸດໃນຍຸກນີ້

ດີກ່ໍາເວົ້າຄວາມຈິງ ແລະປະຈານການໂລບລັຽວຂອງຄົນໃນຊາດ ພວກທ່ານເຂົ້າໃຈເລົ່າເຖິງເຫດການຕ່າງ ໆ ດ້ວຍລີລາການຂຽນແບບງ່າຍ ໆ ແລະໃຊ້ພາສາເວົ້າທີ່ທັນສມັຍ ອາດຈະເປັ່ນຍ້ອນຂ້າພະເຈົ້າຢູ່ໄກຈາກສະພາບແທ້ຈິງຂອງເມືອງລາວ ໃນຂນະນີ້ນໍາແດ່ ຂ້າພະເຈົ້າຈຶ່ງຢາກເຫັນການໃຊ້ຄໍາສັພໃໝ່ ໆ ນີ້ໃຫ້ຫລາຍ ໆ

ພວກທ່ານໄດ້ສະທ້ອນແນວຄິດ ທີ່ມີບຸຄລິກພາບແບບລາວ ໆ ອອກທາງພັງສື ໂດຍຍືນຍັ່ນເຖິງຄຸນຄ່າທາງດ້ານອຸທິບັ່ນຍາແລະສິລທັມຂອງຄົນລາວ ການໃຊ້ສໍານວນພາສາແບບນີ້ຈະຍັງຜົນໃຫ້ພາສາລາວໄດ້ຮັບຄວາມນິຍົມ ໃຫ້ສັງຄົມໄດ້ມີໂອກາດລອງຊີມຈົນຕິດອົກຕິດໃຈ ແລະຮັກສາສິ່ງເຫລົ່ານີ້ໄວ້ເປັ່ນສົມບັດສ່ວນຣວມສືບໄປ ເຊື່ອວ່າຄົນລາວທຸກຖ້ວນໜ້າ ຈະຕ້ອງຊື່ນຊົມນໍາຜົນງານຂອງພວກທ່ານ ສໍາຫລັບສ່ວນຕົວຂ້າພະເຈົ້າ ບໍ່ຮູ້ຈະກ່າວຄໍາໃດອອກມາ ນອກຈາກວ່າຢາກຂໍຊົມເຊີຍຢ່າງຈິງໃຈ ແລະຂໍສນັບສນູນໃຫ້ພວກທ່ານດໍາເນີນການສືບຕໍ່ໄປ (ແຕ່ເທົ່າທີ່ຂ້າພະເຈົ້າສັງເກດນີ້ ພວກທ່ານມີກໍາລັງໃຈແລະມີຄວາມກ້າຫານພຽງພໍຢູ່ແລ້ວດັ່ງໄດ້ກ່າວມາແຕ່ຕົ້ນ) ແລະແນ່ນອນວ່າ ພວກທ່ານຈະກ້າວໜ້າໄປໄດ້ອີກໄກ

ກ່ອນຈະມ້ວນທ້າຍສານກ້ານນີ້ ຂ້າພະເຈົ້າຢາກຂໍ

ກ່າວເຖິງທ່ານ ອາຈານມະຫາສິລາ ວິຣະວົງສ໌ ຜູ້ເປັນບິດາຂອງພວກທ່ານຈັກໜ້ອຍ ຢາກຂໍໃຫ້ທ່ານຜູ້ເປັນລູກທຸກ ໆ ຄົນ ຈົ່ງພູມໃຈໃນຄວາມສາມາດອັນລ້າຄ່າຂອງເພິ່ນ ເພາະວ່າຜົນງານຂອງທ່ານອາຈານມະຫາສິລາທີ່ຜາກົດມາແລ້ວນັ້ນ ເປັນສິ່ງພິສູດຄຸນຄ່າແທ້ຈິງດີແລ້ວ ອັນນີ້ນັກປຣາຊຜູ້ຊ່ຽວຊານທັງຫລາຍ ຍ່ອມບອກໄດ້ຄັກແນ່ບໍ່ມີຫລົງ

ພ້ອມນີ້ ຂ້າພະເຈົ້າຂໍອະນຸຍາດຈາກພວກທ່ານ ເພື່ອແປເຣື່ອງສັ້ນຕ່າງ ໆ ເປັນພາສາຝຣັ່ງເລດ ສຳຫລັບລົງພິມໃນຂ່າວສານສະມາຄົມມິຕພາບ–ຝຣັ່ງ–ລາວ ໂດຍສງວນລິຂສິດໄວ້ໃຫ້ພວກທ່ານຕາມເດີມ

ດ້ວຍຄວາມຮັກແພງທີ່ສຸດ

*ມ້າກ ເຣມໍ*

△ ສາສຕຣາຈານ ມ້າກ ເຣມໍ ເປັນນັກອັກສອນສາດຊາວຝຣັ່ງເສສ ທີ່ມີເຊື້ອສາຍລາວ ເດີມເຄີຍຢູ່ເມືອງລາວ ແລະເປັນນັກວິຊາການທ່ານນຶ່ງ ທີ່ສົນໃຈຄົ້ນຄວ້າກ່ຽວກັບສັງຄົມວັທນະທັມລາວ ປະຈຸບັນເປັນຜູ້ບັນຍາຍພາສາລາວ ແລະພາສາພາກພື້ນຕາເວັນອອກ ປະຈຳມະຫາວິທຍາລັຍ ຊອຣ໌ກບອນ,ປາຣີສ໌ △

## ບຸນເທາະແມ້

– ໂດຍ ດວງຈຳປາ –

*ເພິ່ນວ່າ* ຣຽມນີ້ດີແຕ່ຕີແຕ່ເວົ້າ ຈ້ອຍຈົ່ມອົມໃຈ
ເພາະເພື່ອ "ຍາ" ເບືອນບິດ ກອບໂກງກິນບ້ານ
"ນາຍ" ບໍ່ແລຫລິງຊອ້ານ ຊູຕາງປະຊາຣາສ
ຣຽມຫາກດີທີ່ເວົ້າ ຈາບ້ອຍອື່ມເຂົາ ວ່ານາ

*ໂຍ້ວ!* ຄັນແມ່ນຣຽມບໍ່ຄົ້ມ ແທງແຍ່ຮູປູ ດັ່ງນີ້
"ທ່ານ" ກໍນອນຕີກິນ ສອດພຸງຈົ່ນລົ້ນ (ລະຕິ)
ຜ່ອງກໍຄົງຊະອອນອ້າງ ສັກ–ສິ–ຍົສ–ກຽດ
ອັນນີ້ຣຽມຈ່ອງທົ້ນ ນຳຊີ້ກະວ່າບຸນ ເທາະແມ້

# ...ຍ້ອນໃຜ???

*ໂດຍ ປາໄນ*

ຫລັງຈາກສິ່ງທີ່ຂ້ອຍບໍ່ເຄີຍ ຜ່ານໄປແລ້ວ ມັນກໍວຽນຄືນມາຄືເກົ່າອີກ ເປັນຄືນຖ້ວນສາມ ໃນຄືນຖ້ວນສີ່ຂອງບຸນ....

ສິ່ງນີ້ໃໝ່ສຳຫລັບຂ້ອຍ... ເທິງໃໝ່ແລະຕື່ນເຕັ້ນ...

ສິ່ງນັ້ນອາດຈະບໍ່ຜິດປົກຕິ ສຳຫລັບຜູ້ທີ່ເຄີຍຜ່ານມັນມາແລ້ວ ຫລາຍເທື່ອ.... ແລະຫລາຍເທື່ອເຂົ້າ ກໍຄົງເປັນສິ່ງທັມດາສຳຫລັບຂ້ອຍໄດ້ຄືກັນ....

*ກ່ອນບຸນທາດ ຫົວ-ຫົກ ມື້ ນີ້ລະ*
*"ເອື້ອຍສວນ"*

*ພວກຮັບເໝົາ ແບ່ນບານ ນຳບຸນວັດ*
*ໃທບ້ານໃດ ຂ້ອຍບໍ່ຮູ້*

ຮູ້ແຕ່ວ່າ ເພິ່ນລົງກັບເອື້ອຍເພັດລູກບ້ານພອຍ ຄຸ້ມໃກ້ກັນ ຈຶ່ງເປັນຜູ່ສາວແບ່ນບານ *(ໄປຂາຍບານ ໃຫ້ເພິ່ນແບ່ນ)* ຈັ້ນແມວໜ້າໃນຄຸ້ມບ້ານຂ້ອຍ.... ເປັນສາວແບ່ນບານມາດົນ ຈົນມີທອງມີຫຍອງໃສ່ເຫລື້ອມຍຸບ ໆ ທົ່ວດົງ....

"ເອື້ອຍສອນ"

ມາວ່າຈ້າງຂ້ອຍໄປເປັນສາວແບ່ນບານນຳເພິ່ນ

ສັນຍາເຮັດນຳເພິ່ນ ແຕ່ບຸນທາດປາງດຽວ

ເລີກບຸນທາດ ຄັນຢາກຕໍ່ບຸນວັດອື່ນອີກ ເພິ່ນກະບໍ່ວ່າ ເອົາແຕ່ຂ້ອຍຊິວ່າ....

ເພິ່ນວ່າຈ້າງຂ້ອຍໄປ ຄືນເຈັດຮ້ອຍ

ຄິດໄປຄິດມາ ກະດີກວ່າຢູ່ລ້າ....

ແມ່ນຈ້າງກ່ຽວເຂົ້າຢູ່ບ້ານ ກະໄດ້ແຕ່ມື້ສາມຮ້ອຍ

ໝໍ່າບໍ່ພໍ ຍັງຕ້ອງທົນຕາກແດດເອົາແທ້ເອົາວ່າ

ຈ້າງໃສ່ຢາ ກະໄດ້ທໍ່ກັນ

ອັນນີ້ ດົນຕັ້ງເຈັດຮ້ອຍ

ວຽກກະບໍ່ມີຫຍັງຍາກ ແຕ່ງເພດງາມ ໆ ຍົນຍົ້ມ ຖ້າເລືອກບານໃຫ້ອະເຈົ້າແບ່ນ ຜູ່ຕັ້ງປ່ອງມົນເພິ່ນຈ້າງຕ່າງຫາກ

ດີອີກຊ້ຳ ເດີກ ໆ ມາຄົນອ່າງດົນແດ່ ໄປເລາະບຸນ ເພິ່ນກະບໍ່ອ່າ ເລີກມາກະນອນເຮືອນເພິ່ນ ໃຫ້ອ່າກິນເຂົ້າເຊົ້າ ເຮືອນພ້ອມຄົບ ວ່າຊັ້ນເທາະ

ອີແມ່ດີຊຸດິດດີຂ້ອຍ ຈັ່ງວ່າຕົກລົງໃຫ້ຂ້ອຍມາຂາຍ ບານບຸນຫາດນຳເອື້ອຍສອນ

ເອື້ອຍເພັດກະມາ ແຕ່ວ່າຢູ່ດົນຮ້ານ

*ຄືນທຳອິດ*

*ຂ້ອຍເປັ່ນສິເກີ້ ໆ ວາດໃດວາດນຶ່ງ*

ລາງເທື່ອເອີ້ນອະເຈົ້າແບ່ນບານ ອະເຈົ້າຍ່າງກາຍ ເສີຍມັ້ງ ຂ້ອຍອາຍຈົນຮ້ອນກົກຫູອາບ

ກະຂອງວ່າບໍ່ເດີຍເນາະ ໃຜຊິເຮັດດີຜູ່ເພິ່ນເດີຍ ເປັ້ນ....

ເດີກດຶມນັ້ນ

ດົນວ່າງ ເອື້ອຍເພັດເລີຍມາຂ້ອຍໄປເລາະບຸນ

ມີອ້າຍບ່າວເລາະໄປນຳເອື້ອຍເພັດ ສອງສາມຄົນ ຫລຽວເບິ່ງໂສ້ງ ເບິ່ງຊິງ ກະພໍໄປອັດໄປອາດູ່ຄົນ

ຂ້ອຍບໍ່ໄດ້ສົນໃຈໃຜ ແຕ່ວ່າຕອນກັບອອກມາແຕ່ໄຫວ້ທາດ ເອື້ອຍເພັດຊິ່ມໃສ່ຫູຂ້ອຍວ່າ

*"ອ້າຍແອດສົນໃຈນິງ ວ່າຊັ້ນເດ້ ອີ່ແຄວ !"*

"ສົນກະສົນຊັ້ນຕ່ວາ ຊິເປັນຫຍັງ !"

ຂ້ອຍຕອບເອື້ອຍເພັດ ດ້ວຍຄວາມຮູ້ສຶກທີ່ບໍ່ຮູ້ສຶກວ່າມີຫຍັງໃນໃຈເລີຍ ອີ່ຫລີ

ແລ້ວກໍພາກັນຍ່າງເລາະ ເບິ່ງນັ້ນເບິ່ງນີ້ຫລາຍອັນ

ເບິ່ງຄືດູ່ປີ ດົນຝຸ່ນຄືດູ່ປີ

ຂ້ອຍບໍ່ເຫັນມີຫຍັງຕ່າງຕາ

ນອກຈາກວ່າ ປີນີ້ຂ້ອຍເປັນສາວ ແລ້ວກໍມີອ້າຍແອດບອກວ່າສົນໃຈ ແລະລົມຄວາມນັ້ນຄວາມນີ້ນຳຂ້ອຍ....

ຂໍສຳຄັນກໍຄືວ່າ

ຕອນເດິກ ພວກອ້າຍແອດ ຊິແນວກິນເມືອຊຸມຢູ່ເຮືອນເອື້ອຍສວນຕໍ່ ຈົນເກືອບແຈ້ງ....

ເຣື່ອງຢູ່ເດິກຢູ່ດື່ນຂ້ອຍບໍ່ຕົກໃຈ ເພາະວ່າເຖິງຈັ້ງ

ໃດ ໆ ມື້ອື່ນຂ້ອຍກະໄດ້ນອນເຕັມມັກ

ແຕ່ຂ້ອຍຕົກໃຈ ຍ້ອນຂອງກິນທີ່ພວກອ້າຍແອດຊື້ມັນຕ່າງຫາກ.... ບໍ່ຈັກວ່າແມ່ນຫຍັງຕໍ່ຫຍັງ ຫອບກັນບໍ່ຫວາດບໍ່ໄຫວ

ເຣື່ອງຫອບໝັກຂ້ອຍບໍ່ວ່າ ຂອງແມ່ນແຕ່ແນວດີ ໆແຊບ ໆ

ຂ້ອຍວ່າ ເປັນຕາຕົກໃຈນຳຕອນຈ່າຍເງິນຕ່າງຫາກ

ໂຮມແລ້ວ ຟາດເຂົ້າ *ເກືອບສາມພັນ.... ສາມພັນ !!*

ຂ້ອຍພໍ່ຢາກຮ້ອງນຳ ຄວາມເສັຽດາຍເງິນ

ອີແມ່ເຮັດຈັງຫັນເຮືອນ ແຈກເຂົ້າຫາພໍ່ຕູ້ ກໍ່ໝົດຫລາຍກວ່ານີ້ພ້ອຍດຽວທີ່ມັ້ນ

ເອື້ອຍເພັດວ່າ

*"ອ້າຍແອດລາວບໍ່ສເນັ້ນດອກ ! ພໍ່ລາວເປັນກະໂລແນນ ເງິນເປັນທີບ ໆ"*

ຂ້ອຍອັສຈັນງຶດງ້ ແມ່ນເພິ່ນຫາມາແຕ່ຈັ່ງໃດແດ່ ດີວ່າມີຫລາຍເອົາກະດັກກະດ້ ມັ້ນ

*ນ້ຳໜ້າໄທວຽງຈັນ*

ຂ້ອຍມາວຽງຍາມໃດ ບໍ່ເຫັນວ່າເພິ່ນພາກັນເຮັດກັນສ້າງຫຍັງ ເຫັນແຕ່ພາກັນຂີ່ຣົດເລາະໄປເລາະມາລື້ນ ໆ ຊອກກິນມັ້ນກິນນີ້ບໍ່ເຊົາສົບເຊົາປາກ ເຄື່ອງນຸ່ງຂອງຖືກໍ່ຊອກຊື້ ຊອກໃສ່ແຕ່ແນວແພງ ໆ...

"ຂ້ອຍກະມາຢາກຮູ້ເດ໊ !!ວ່າເພິ່ນພາກັນເອົາເງິນມາແຕ່ຊຸມໃດ ?"

ບາດໄທບ້ານຂ້ອຍ ເຮັດເຫິງນາ ເຫິງສວນ ເຫິງໄຮ່ ລາງເຮືອນ *ຫາເກືອຈີບ່າຍເຂົ້າ ຍັງບໍ່ມີ*

✳

## *ລືມຖ້ວນສອງ*

ບາດຕອນເດິກ ພວກອ້າຍແອດມາອຸດພຸ່ມອີກ

ໂຕອ້າຍແອດເອງບໍ່ແບ່ນບານ ມີແຕ່ພູ່ລາວແບ່ນ

"ບັກແອດມັນຊຳນານທາງຈັກຖົງດອກ ພູ່ເຮົາຫາດາແບ່ນລົງໄປ !"

ພູ່ເລົາຜູ່ນຶ່ງວ່າ ແລ້ວກໍ່ຕັ້ງພ້າຕັ້ງຕາແບ່ນ ໄດ້ແດ່ເສັຽແດ່ ເສັຽນັ້ນລະສ່ວນຫລາຍ

ສຸດທ້າຍອ້າຍແອດກໍຕ້ອງຈ່າຍ *ສີ່ພັນແປດ* ແລ້ວກໍຊວນຕູຂ້ອຍກັບເອື້ອຍເພັດໄປເລາະບຸນອີກ

ຄົນກະຫ່າງຕາ

ແຕ່ວ່າ ຢູ່ບໍ່ຢູ່ເອື້ອຍເພັດກະຊ່າງວ່າມາຫລົງຝູງ

ອ້າຍແອດພາຂ້ອຍເລາະຫາຈົນເມື່ອຍ

ຂ້ອຍກະລືມຄາວ ບໍ່ຮູ້ວ່າມັນເດິກຮາວໃດ

ຊ່າວ່າຄືນມາຮອດຮ້ານແບ່ນຂານ ພວກເອື້ອຍສອນ

ກັບຄົນເກັບຂານໝີເມືອກ່ອນໝົດແລ້ວ

ຂ້ອຍຢາກໄຫ້ ຢາກຫົວ ກະຜ່ອງກັນ

*ແລ້ວຂ້ອຍສິເມືອຈັ່ງໃດ ຜູ້ດຽວ?*

ພໍດີຂ້ອຍຄິດບໍ່ເຂົ້າບໍ່ອອກຢູ່ມັ້ນ ອ້າຍແອດຄືຊິອ່ານ

ໃຈຂ້ອຍອອກ ເລີຍຂັນອາສາເມືອສົ່ງ

ຂ້ອຍໂລ່ງໃຈອະນາດນຶ່ງ ມີຄົນຮູ້ຈັກລົ້ງເຄີຍກັນມາ

ເມືອສົ່ງກະຍັງໄດ ເມືອຜູ້ດຽວຂ້ອຍຢ້ານ

ຢ້ານຄືເອື້ອຍເພັດເລົ່າສູ່ຟັງວ່າ ພວກຕັກຊິຂະເຈົ້າ

ເອົາໄປເຮັດໄກ່ຫລົງ...

ແຕ່ແລ້ວຂ້ອຍກະຍັງຊວຍ*ຕົກມາເປັນໄກ່ຫລົງ*

*ໃຫ້ອ້າຍແອດຈົນໄດ້....* ຄັນບໍ່ຫລົງກັບເອື້ອຍເພັດ ກະຄືຊິບໍ່

ມີເຣື່ອງຊົ່ວ ໆ ແນວນີ້ເກີດຂຶ້ນ

ຕອນອາບນ້ຳຄາວແລງ....

ຂ້ອຍເວົ້າມ້ອຍເຣື່ອງມື້ຄືນ ສູ່ເອື້ອຍເພັດຟັ້ງ

"ມຶງຢ່າໂງ່ປາກໄປປາກມາ ຈັກພ້ອຍຮູ້ໄປຮອດຫູໄທບ້ານລະ ອາຍເຂົາ !"

ເອື້ອຍເພັດບອກຂ້ອຍ ວ່າແນວນີ້ແຫລະ

ແລ້ວຊິເຮັດແນວໃດ ໃນເມື່ອມັນເປັນໄປແລ້ວ

*ຄັນບໍ່ອຳໄວ້ຫລືກໍຂາຍໜ້າໂຕເອງ....*

ເຣື່ອງມັນກໍເລີຍຈຳເປັນຕ້ອງອຳ....

ຂ້ອຍຮູ້ສຶກເຈັບເນື້ອເຈັບຄີງ ແຕ່ກໍອົດເອົາບໍ່ປາກຍ້ານເອື້ອຍສອນຮູ້ເຣື່ອງນຳ.... ປວດຂັດໄປທົ່ວໂຕ ຄືຊິແມ່ນຍ້ອນຂ້ອຍຟົດໄປຟົດມາດົນໂພດ....

ຕອນເນື່ອສົ່ງຂ້ອຍ ຫລັງຈາກເຫດການສຳຄັນຜ່ານໄປນັ້ນ....

ອ້າຍແອດຖອດສາຍຄໍຢູ່ຄໍເລົາໃຫ້ຂ້ອຍ....

ຂ້ອຍເຊົາຮ້ອງໄຫ້ ບໍ່ແມ່ນດີໃຈຍ້ອນໄດ້ສາຍຄໍ ແຕ່ວ່າອຸ່ນໃຈທີ່ອ້າຍແອດບອກວ່າ "ແລ້ວບຸນທາດແລ້ວ ຊິນຳເນື່ອບ້ານ ເນື່ອຕົກລົງນຳເຖົ້າແກ່ພໍ່ແມ່"

ຂ້ອຍເຊົາຮ້ອງໄຫ້ ເພາະຄິດໄດ້ວ່າ

"ຈັ່ງໃດ ໆ ກໍຕົກເປັນຂອງເລົາພໍແຮງແລ້ວ ເພາະ

ແມ່ນວ່າເລົາບໍ່ຖືມບໍ່ປະ ກໍຍັງດີກວ່າເສັຽໂຕໄປລ້າ ໆ ຖາມະດອບ ຕົວເລົາກໍຮູ້ງມີ... ຊີວິດຂ້ອຍອາດຈະບໍ່ຕ້ອງເປັນຊາວນາໝ້າແຫລ້ ຕໍ່ໄປອີກກໍເປັນໄດ້ ໃຜຊິຮູ້ !'

✳

*ຄືນຖ້ວນສາມ*
*ຈົນເດິກ ຍັງບໍ່ເຫັນຫນ້າອ້າຍແອດ*

ຫົວໃຈຂ້ອຍຫັກຫວານ ໆ ຫລຽງດຳເບິ່ງແຕ່ສາຍດໍ ຊິ່ງເຊື່ອງຢູ່ໃນເອິກເສື້ອຊ້ອນ....

ສາຍດໍອ້າຍແອດໃຫ້ຂ້ອຍບໍ່ກ້າໃສ່ ຍ້ານພວກເອື້ອຍ ສອນສົງໃສ ແລ້ວເຣື່ອງມັນຊິຮອດຫູຫລາຍຄົນ

ກຳລັງທີ່ຂ້ອຍຄິດວ່າ ຊິບໍ່ໄດ້ພົບກັນອີກແລ້ວ ອ້າຍແອດກໍມາພໍດີ....

ເລົາເມົາຈົນຍ່າງບໍ່ທ່ຽງ ແຕ່ພໍມາໃກ້ຮ້ານບ່ອນຂ້ອຍ ຢູ່ກໍອ່ອນສຽງລົງ ແລ້ວວາງທ່າທາງເປັນຄົນຮູ້ຜູ້ດີເກືອບຄືທຸກຄືນ...

ຂ້ອຍວ່າທ່າທາງອ້າຍແອດເກືອບຄືທຸກຄືນ ເພາະມີ ຕ່າງເກົ່າແດ່ແຕ່ວ່າ ເລົາເມົາແລ້ວກໍກ້າຕຳກ້າຊູມຂ້ອຍເລັກ ໆ ນ້ອຍ ໆ ເມື່ອມີໂອກາດ

ສອງຄືນທີ່ແລ້ວມາ ອ້າຍແອດບໍ່ເປັນແນວນີ້

ຄືຊິແມ່ນຍ້ອນວ່າ ກ່ອນນີ້ຂ້ອຍຍັງບໍ່ທັນເປັນຂອງເລົາເທື່ອ ສ່ວນດຽວນີ້ຂ້ອຍເປັນຂອງເລົາແລ້ວ

ພໍໝົດຄົນທ່ຽວ ມ້ຽນເຄື່ອງຊ່ອຍເພິ່ນແລ້ວ....

ອ້າຍແອດກໍຊວນຂ້ອຍໄປເລາະອິກ

ຂ້ອຍວ່າຊິຫາທາງຫລິກບໍ່ໄປນຳເລົາ ທຳທ່າຊວນເອື້ອຍສອນຫວັງຢາກໃຫ້ເພິ່ນຮ້າຍວ່າ "ເລາະລຽນຄືນ ເມືອນອນແຕ່ເວັນຈັກຄືນແດ່" ກໍຜິດຫວັງ....

ເອື້ອຍສອນອອກປາກອະນຸຍາດໄວປານວ່າ ເພິ່ນຫ້າງທ່າຊິບອກໃຫ້ໄປຢູ່ກ່ອນແລ້ວ

ຂ້ອຍໄປກັບເອື້ອຍເພັດ ກັບໝູ່ອ້າຍແອດອິກຜູ້ນຶ່ງຊຶ່ງເຝົ້າເອື້ອຍເພັດລຽນຄືນບໍ່ເວັ້ນ....

ຕອນຫລົງກັນຄືນນັ້ນ ຂ້ອຍເຊື່ອວ່າເອື້ອຍເພັດກໍເມືອນຳອ້າຍນີ້ແຫລະ.... ຫລືວ່າເອື້ອຍເພັດຊິຕເລີດໄປຄືຂ້ອຍກະບໍ່ຈັກ... ແຕ່ວ່າເບິ່ງຊົງເລົາຄືບໍ່ຕ່າງບໍ່ມາຫຍັງຈັກໜ້ອຍເລີຍ...

ແລ້ວໃນທີ່ສຸດ ພວກຂ້ອຍກໍຫລົງກັນອິກຄືຄືນແລ້ວ

*ຫລົງກັນເປັນຄູ່ ພໍປານວ່າ ການຫລົງກັນກາງເດີ່ນທາດຫລວງ ຈຶ່ງມີຄົນພໍກະໂທ່ງກະທ່າງນີ້ ເປັນເຣື່ອງທີ່ຕ້ອງເກີດຂຶ້ນທຸກຄືນ...*

ຕ່າງແຕ່ວ່າ ຄືນນີ້ຂ້ອຍບໍ່ຈຳເປັນຕ້ອງຊວນອ້າຍແອດ ເລາະຄືນໄປຈອບເບິ່ງທາງຮ້ານແບ່ນບານຄືຄືນກ່ອນ...

ຕ່າງແຕ່ວ່າ ຄືນນີ້ຂ້ອຍເກືອບຊິບໍ່ພິດດົນ ແລະອ້າຍແອດກໍບໍ່ໄດ້ອອກກຳລັງຈົນເຫື່ອໄຫລໄຄຍ້ອຍ ຄືຄືນກ່ອນເລີຍ....

✻

*ຫລັງຈາກສິ່ງທີ່ຂ້ອຍບໍ່ເຄີຍຜ່ານໄປສອງຄືນລຽນກັນແລ້ວ ມັນກໍວຽນຄືນມາຄືເກົ່າອີກເປັນຄືນຖ້ວນສາມ ໃນຄືນຖ້ວນສີ່ຂອງບຸນ....*

*ສິ່ງນັ້ນໃຫມ່ສຳຫລັບຂ້ອຍ... ເທິງໃຫມ່ແລະຕື່ນເຕັ້ນ*

*ສິ່ງນັ້ນອາດຈະບໍ່ຜິດປົກຕິ ສຳຫລັບຜູ້ທີ່ເຄີຍຜ່ານມັນມາແລ້ວຫລາຍເທື່ອ ຄືເອື້ອຍເພັດແລະຫລາຍເທື່ອເຂົ້າ ກໍຄົງເປັນສິ່ງທັມດາສຳຫລັບຂ້ອຍໄດ້ຄືກັນ....*

ເອື້ອຍເພັດເຄີຍໃນສິ່ງນັ້ນມາກ່ອນແລ້ວ....

ອາດຈະເຄີຍແຕ່ຫລາຍປີ ຫລືປີກ່ອນພຸ້ນກະເປັນໄດ້ແລ້ວຄວາມນີ້ ເທິງໂຕເລົາເອງແລະອ້າຍແອດເປັນ

ຜູ່ຢືນຍົ່ມ.... ອ້າຍແອດເອງຍືນຍົ່ມວ່າ ເລົາເຄີຍເຮັດຄືເຮັດກັບຂ້ອຍມາແລ້ວ ກັບເອື້ອຍເພັດ....

ເລົາຢືນຍົ່ມວ່າ ຮັກແລະດູຫມິ່ນຂ້ອຍດ້ວຍໃຈຈິງເພາະວ່າຂ້ອຍບໍ່ຄືເອື້ອຍເພັດ...

ຕອນຕົກເປັ່ນຂອງອ້າຍແອດປີກາຍນີ້ ເອື້ອຍເພັດບໍ່ແມ່ນສາວບໍຣິສຸດ....

ສ່ວນຂ້ອຍຍັງບໍຣິສຸດ ແລະຂ້ອຍກໍເປັ່ນຂອງເລົາແຕ່ຜູ່ດຽວ...

*ຄືນສິບຫ້າຄ່ຳ....*

*ຈົນເທົ້າຜອງເລີກແບ່ນບານ ຂ້ອຍຍັງບໍ່ເຫັນຫນ້າອ້າຍແອດ....*

*ຂ້ອຍ ບໍ່ ຍອມ ເມືອ ພ້ອມ ພວກ ເອື້ອຍສອນ*

*ຂ້ອຍຕ້ອງຊອກຫາອ້າຍແອດໃຫ້ພໍ້*

ເລົາອາດຈະຢາກມາຫາຂ້ອຍ

ເລົາອາດຈະຄິດຮອດຂ້ອຍ

ຄືກັນກັບຂ້ອຍຄິດຮອດເລົາ

ແຕ່ເລົາອາດຈະດາໝູ່—ດາເມົາ

ເຖິງທີ່ສຸດ ຂ້ອຍກໍຜິດຫວັງ

ບໍ່ເຫັນແມ່ນແຕ່ເງົາຂອງອ້າຍແອດ....

ຂ້ອຍຈຳເບັ່ນຕ້ອງເມືອຕັກຊີ ເທິງ ໆ ທີ່ຍ້ານກໍຍ້ານ ຍ້ານວ່າ ຕັກຊີຊິພາໄປເບັ່ນໄກ່ຫລົງ ຄືເອື້ອຍເພັດ ລົມສູ່ຝັ່ງ....

ແລ້ວສິ່ງທີ່ຂ້ອຍຄິດຍ້ານໄວ້ ກໍເກີດຂຶ້ນຄືຄວາມຄິດ ຈົນໄດ້....

ຫລືວ່າ ເອື້ອຍເພັດກໍເຄີຍຜ່ານເຣື່ອງເລົ່ານີ້ມາກ່ອນ ອີກ ຄືເຣື່ອງທີ່ເລົາເຄີຍຜ່ານກັບອ້າຍແອດ...

*ຂ້ອຍບໍ່ຫນີ.... ຂ້ອຍບໍ່ດີ້ນ.... ຂ້ອຍບໍ່ຟົດ.... ບໍ່ຕໍ່ຕ້ານຂັດຂວາງໃດ ໆ ເທິງຫມົດ...* ໃຜຊິເຮັດຫຍັງ *ເຊີນ.... ເຊີນໂລດ* ຂ້ອຍມີແຕ່ຫລັບຕາກັດແຂ້ວ *ຂ້ອຍຢາກຕາຍ.... ຢາກໃຫ້ເກີດເສິກ.... ຢາກໃຫ້ແຜ່ນດິນຍະເອົາຜູ້ຊາຍໄປໃຫ້ຫມົດ....*

ຜູ້ຊາຍ ພາຂ້ອຍໄປ ພາຂ້ອຍເບັ່ນ... ຈົນຂ້ອຍເບື່ອໜ່າຍ ບໍ່ໄປໃສ.... ບໍ່ຢາກເບັ່ນຫຍັງອີກແລ້ວໃນຊາດນີ້

*ຂ້ອຍຢາກຫລັບຕາ.... ຂ້ອຍຢາກນອນ....*

*ຢາກຢູ່ຈື່ ໆ.... ຢາກຫມົດລະຕິ.... ຂ້ອຍຢາກເປັນບ້າ....*

ພໍ່ຂ້ອຍມືນຕາຂຶ້ນ ຫລັງຈາກຫລັບປານຕາຍມາດົນນານປານໃດບໍ່ຮູ້ ກໍພໍ້ໂຕເອງຢູ່ໃນຫ້ອງແຄບ ໆ ຕ່າງຕາ... ມີກົນສາບ ໆ ຈວນປຸ້ນທ້ອງ....

*ຂ້ອຍບໍ່ລຸກຂຶ້ນ*
*ຂ້ອຍບໍ່ອອກໄປໃສ*
*ຂ້ອຍບໍ່ຮ້ອງໄຫ້ຮ່ຳໄຮ*

"ເຮືອນນ້ອງຢູ່ໃສ ອ້າຍຊິເມືອສັ່ງ !"

"ເມືອສັ່ງ ? ຫື ! ຊິເອົາຂ້ອຍເມືອສັ່ງໃຫ້ຍາກໃຫ້ເດືອດເຈົ້າເຮັດຫຍັງ.... *ເຈົ້າມັກຈັ່ງຊີ້ ບໍ່ແມ່ນຫວາ ? ເຈົ້າຕ້ອງການຈັ່ງຊີ້ ບໍ່ແມ່ນຫວາ ? ເຈົ້າບໍ່ຄິດຢາກມ້ຽນໄວ້ກິນຕໍ່ມື້* ອື່ນແດ່ຫວາ ? *ເຈົ້າ ໆ ໆ ໆ ? ? ?*

ຄຳຖາມກັບນ້ຳຕາຂອງຂ້ອຍ ຫລັ່ງໄຫລອອກມາເສັງກັນ ໂດຍທີ່ຂ້ອຍບໍ່ໄດ້ຕັ້ງໃຈຈິກ່າວຄຳໃດ ໃຫ້ເປັນຜຍາເລິກແລບກິນໃຈຜູ້ມີຄວາມຄິດສູງສົ່ງເລີຍ.... ແຕ່ວ່າຜົນຂອງມັນກໍດີ... ດີກວ່າ ແລະດີຈົນຂ້ອຍຄິດວ່າ ບໍ່ມີສິ່ງອື່ນດີກວ່າ ສິ່ງທີ່ຂ້ອຍເຮັດແລະເວົ້າໃນຄືນນັ້ນ....

*

*ອ້າຍແກ້ວ ເອົາຂ້ອຍເປັນເມັຽອອກໜ້າອອກຕາ ແລະຂ້ອຍກໍອອກລູກຊາຍໃຫ້ເລົາໃນເວລາເກົ້າເດືອນຕໍ່ມາ....*

ອ້າຍແກ້ວຄົນຂັບຣົດຕັກຊີຜູ້ພາຂ້ອຍໄປ ໃນຄືນທີ່ອ້າຍແອດລືມຂ້ອຍ ເມື່ອສອງປີກ່ອນພຸ້ນ...

ໂຕຈິງຂອງເລົາຄື *ຣ.ທ. ກອງແກ້ວ*

ເລົາຂັບຕັກຊີເພື່ອຫາຣາຍໄດ້ພິເສດ ແລະເຮັດວຽກພິເສດໄປໃນຕົວ... ວຽກຫຍັງຂອງເລົາຂ້ອຍບໍ່ເຄີຍສົນໃຈ....

ເລົາດີ ຈົນຂ້ອຍຍອມນົບຕົນ ກ່ອນນອນທຸກມື້...

ຍ້ອນຄວາມດີຂອງເລົາ ຂ້ອຍຈຶ່ງກ້າແລະມີໂອກາດໄດ້ເມືອຢຽມບ້ານເກົ່າ ຊຶ່ງຂ້ອຍຄິດວ່າຊາດນີ້ຈະບໍ່ຂືນໄປໃຫ້ໃຜຫຍາມໜ້າອີກແລ້ວ....

ຍ້ອນເລົາ ອີ່ແມ່ຈຶ່ງມືນຕາອ້າປາກຍິ້ມມາໄດ້

ຍ້ອນເລົາ ຂ້ອຍຈຶ່ງມີພີ່ນ້ອງຮັກຫອມ ທົ່ວບ້ານທົ່ວເມືອງ

ຍ້ອນເລົາ ກໍຈຶ່ງວ່າໄດ້ມາຈູງແຂນລູກຊາຍ ເລາະເບິ່ງບຸນທາດສົມເປັນຜູ້ດີມີໜ້າ ໃນຄືນນີ້ອີກ....

ຍ້ອນເລົາ ກໍຈຶ່ງມີທະຫານ ບ້ານເມືອງເອີ້ນຂ້ອຍວ່າ

"ຍາເອື້ອຍ ! ຍານ້ອງ ! ຍານາງ ! ຯລຯ !!!"

ແຕ່ຂ້ອຍກໍຍັງສົນໃຈບໍ່ແລ້ວ ເທົ້າຜອງດຽວນີ້ວ່າ.... ລູກຂອງເຮົາທີ່ພອມຈູງຍ່າງເລາະເບິ່ງບຸນທາດຢູ່ດຽວນີ້....

*"ແມ່ນຂ້ອຍມີຍ້ອນເລົາ ຫລືວ່າຍ້ອນ ໃຜຜູ້ນຶ່ງອີກ ?"*

ຊາດນີ້ຂ້ອຍອາດຈະຕາຍໄປ ກ່ອນທີ່ຈະມີໂອກາດຮູ້ ຈັກຄຳຕອບ ທີ່ຖືກຕ້ອງກະເບັ່ນໄດ້...

ຂ້ອຍອາດຈະຕາຍ ກ່ອນໄດ້ຮູ້ວ່າ....

*"ຂ້ອຍມີລູກ ຍ້ອນໃຜ ?"*



## *ເສິກ–ເສືອ–ເໜືອ–ໃຕ້*

– ໂດຍ ປາໄນ –

● *ເສິກ* ເກີດຂຶ້ນ ຂ້ຽວຂອດເປັ່ນກະດັດ
*ເສືອ* ສິບ–ເສືອຊາວເສືອ ກໍບໍ່ແຮງຮຸນຮ້າຍ
*ເໜືອ* ແຜ່ນດິນແດນດ້າວ ລາວເຮົາຮ້ອນເຮັ້ງ
*ໃຕ້* ຕໍ່າລາມລຸກໄໝ້ ວົນວຸ້ນອຸ່ນມົວ

● ປະຊາຣາສເຮັ້ງຮ້ອນ ອຶດຢາກຕາຍດັບ
ເພາະເພື່ອພັຍສົງຄາມ ຍືດຍາວນານຊ້າ
ສຸດທີ່ໂອຍ ໆ ໂອ້ ໂອນນ້ອງພີ່
ອີກຈັກປີຈິ່ງແລ້ວ ເຂັນຂ້ອງໂລກດົນ ???

# ລາວ ແປເປັ່ນ ລາວ

*

*ບຸນ:* ປະໄວ້ທັ້ນກ່ອນ ໃກ້ ໆ ຊິຕາຍຄ່ອຍໄປຊອກຂົນເອົາຢູ່ນຳ
ວັດວາອາຣາມ ບໍ່ອຶດບໍ່ຢາກດອກ

*ປະຊາຊົນ:* ພວກນີ້ຈະມີກຽດມີຄ່າ ມີເຈົ້ານາຍຜູ່ໃຫຍ່ນັບໜ້າ
ຖືຕາຂຶ້ນມາທັນທີ ເມື່ອຮອດສມັຍໄປຜູ່ແທນ

*ພົລເມືອງດີ:* ອ່ານວ່າ ພົນລະເມືອງ ແລະທີ່ວ່າ ດີ ກໍຍ້ອນ
ຍັງຈັບບໍ່ໄດ້ໄລ່ບໍ່ທັນວ່າ ໄປສ້າງຄວາມຊົ່ວໄວ້ຢູ່ໃສແດ່

*ມໍຣະດົກ:* ຕົກທອດມາຈາກພໍ່ແມ່ທີ່ຕາຍໄປແລ້ວ ຊຶ່ງພີ່ນ້ອງ
ຮ່ວມທ້ອງດຽວກັນ ຈະຕ້ອງຍາດແຍ່ງກັນ ຈົນເຖິງຂັ້ນແລ່ນ
ເຕັ້ນຂາຍໃຫ້ກ້ຽງອາດຫລາດ ເພື່ອເອົາເງິນຄຳທີ່ໄດ້ມາໄປຈ້າງ
ໝໍຄວາມ ໄປວັດກວ້ານວັດສານ....

# ຕາກາຍ...

☆ ໂດຍ ດວງຈຳປາ ☆

● ເອື້ອຍບໍ່ຢາກໃຫ້ໄປມີລູກເຊື່ອງລ້ຽງເກືອເຂົາຈີມ ມີຊື່ວ່າເມັຽນ້ອຍ...., ໃຈຂ້ອຍເດືອດປຸດ ໆ ຂຶ້ນ ມາ... ມັນເປັ້ນເຈຕນາຂອງໃຜ? ຫລືຫາກວ່າ...?

## ສິບໂມງຈຶ່ງມີແຂກມາເຂົ້າຮ້ານ !

ຂ້ອຍຈົມອິດອ່ອນໃຈພໍແຮງ ທຸກ ໆ ມື້ນັ້ນມີຄົນມາອຸດໜຸນແຕ່ເຊົ້າສເມີ ພໍດີພອນຢ່າງເຂົ້າຢ່າງອອກ ຫຽວຍົກແຂນຂຶ້ນເບິ່ງໂມງຢູ່ຢ່າງໝຸດໝິດໃຈນັ້ນ ກໍເລີຍມີຍາແມ່ຊົງຖານະດີສົມຄວນ ເຂົ້າມານຳກັນສອງຄົນ

ຂ້ອຍພ້າວແປງສີໜ້າໃຫ້ເບີກບານ ຍໍມືນົບພວກເພິ່ນແລະເຊີນເຂົ້າໄປນັ່ງຢູ່ບ່ອນຮັບແຂກ ຍາແມ່ຜູ້ຈ່ອຍສູງເຮັດເພດທັນສມັຍນັ້ນຂ້ອຍຮູ້ເພິ່ນດີ ເພາະເປັນແຂກຂາປະຈຳມາຫລາຍເດືອນ ໂດຍການຊັກນຳຂອງຜູ້ລ້ຽງເດີຍອີກຕໍ່ນຶ່ງ ແຕ່ຜູ້ພີຂາວອົມຄຳພາກນັ້ນຂ້ອຍຫາກໍ່ເຫັນເປັນເທື່ອທຳອິດ ເພິ່ນຄົງຈະຫາກໍ່ສົນໃຈນຳການເສີມສວຍນຸ໊ລະຕິ ສັງເກດເບິ່ງເລັບຕີນເລັບມືບໍ່ສະອາດແລະເດືອບສີ ຄືເຮັດຈາກຮ້ານເລີຍ

"ຍາແມ່ ສະຜົມບໍ່ຂນ້ອຍ ?" ຂ້ອຍເວົ້າສຽງອ່ອນສຽງຫວານຕາມມາຣະຍາດ ເພາະຮູ້ດີວ່າ ພວກຍາເອື້ອຍ ຍານາງທີ່ຍ່າງເຂົ້າມາໃນສະຖານທີ່ເຊັ່ນນີ້ ພ້ອມທີ່ຈະຈົກເງິນບໍ່ອັ້ນຕູ້ ຫາກວ່າພໍກັບບັນຍາກາດສຳບາຍໃຈ ແລະຄວາມອ່ອນນ້ອມຖ່ອມຕົນຂອງເຈົ້າຂອງຮ້ານຫລືພວກຊ່າງ ຂ້ອຍຈຶ່ງອົບຮົມລູກນ້ອງສເມີວ່າໃຫ້ມີວາຈາສຸພາບອ່ອນນ້ອມຕໍ່ແຂກທຸກຄົນ ບໍ່ວ່ານາງຈະນຸ່ງສົ້ນ

ຜ້າຍເກົ່າ ໆ ໃສ່ເກີບປາອິຣີ ນຸ່ງສົ້ງຂາບານ ມີໂກຣ—ສເກີຕ ຫລື ໃສ່ເພັດເຕັມຄີງ ນັ່ງຣົດ ເບ.ແອັມ. ຕິດອາຍເຍັ້ນມາກໍດີກັນ

ຍາແມ່ຜູ່ຈ່ອຍ ໆ ບອກວ່າ

"ເອື້ອຍພາຍາເອື້ອຍເພິ່ນມາແປງຜົມທາງໜ້ານຳ ຈິດັດຈັກໜ້ອຍບໍ່ຫລືຈັ້ງໃດກະແລ້ວແຕ່ຊ່າງ ເຮັດເລັບນຳເລີຍນໍ້ຍາເອື້ອຍ ?"

ປະໂຍກທ້າຍ ເພິ່ນອ່າຍໄປລົມກັບຍາແມ່ທີ່ເພິ່ນພາມາ ທາງນັ້ນກໍຍິ້ມອ້າປາກຢູ່ ບໍ່ອອກຄວາມເຫັນວ່າຈັ້ງໃດ

ເອີ້ ! ຂ້ອຍນີ້ກໍລົດຫລົງສົບຫລົງປາກອີກແລ້ວ ບໍ່ຈື່ຈັກເທື່ອວ່າ ພວກເພິ່ນທີ່ທາງຕາເບັ້ນກ້ານກຸບແລ້ວນີ້ ກໍມັກໃຫ້ເອີ້ນຍາເອື້ອຍຢູ່ ບໍ່ໄດ້ດອກຊິຕ້ອງຂັ້ນປຸງລົ້ມຕົວເອງໃໝ່ກ່ອນລະ !

— ໂດຍ ທາງຫລັງເດ໋ຂນ້ອຍ ເກີນວ່າຍາວຕັດຈັກໜ້ອຍນ້ຂນ້ອຍນໍ້ ຈັ້ງເກົ້າແບບສມັຍໃໝ່ງ່າຍ ?

— ຕັດຊ໊ະຍາເອື້ອຍ ແລ້ວຊື້ຊ້ອງປອມຂະເຈົ້າໃສ່ມັນຈັ້ງງາມ

ຜູ່ພາມາອອກຄວາມເຫັນໃຫ້ ເບິ່ງຄືວ່າ ເພິ່ນພວມ *ເອົາສາວນ້ອຍຈາກບ້ານນອກ ມາຂັດລ້າງຮຸກສີເອ້ແຕ່ງໃຫ້ ເພື່ອຊິເອົາໄປຖວາຍເຈົ້າຖວາຍນາຍ* ທາງ

ໃດນີ້ລະ ຫາກແຕ່ເບິ່ງອາຍຸແລະຮູບຮ່າງ ທຸ່ມນັ້ນແລ້ວກະບໍ່ຈິງ ເຮັດໃຫ້ຂ້ອຍຄຶດຢາກຫົວຢູ່ນັຍ ໆ ຂ້ອຍຢາກຮູ້ເດ້ວ່າ ແມ່ນອິດທິພົນອິ່ຫຍັງທີ່ຊຸກຍູ້ໃຫ້ຍາແມ່ຕຸ້ຍຜູ້ນີ້ ລ້ຽວເຂົ້າຮ້ານເສີມສວຍ ເອົາບາດອາຍຸກາຍ 40 ມາແລ້ວແນວນີ້ ?

ມັນຈິຕ້ອງມີເຫດຜົນຢູ່ດີແຫລະ ! ຂ້ອຍຄຶດໃນໃຈ ແລະຍິ້ມຢ່າງມີຊັຍໄວ້ຖ້າ ເພາະຈະໄດ້ກຳໄຣພັນຫ້າ ຈາກຊ້ອງປອມອີກອັນນຶ່ງ

ຂ້ອຍເອີ້ນເດັກນ້ອຍລູກມື ມາຈັດການເຊັດເລັບໃຫ້ພວກຍາແມ່ ໂຕເອງລົງມື ສະ ເກົາ ແລະນວດເອັນຄໍ ໃຫ້ແຂກພ້າໃໝ່ເປັນກໍຣະນີພິເສດ (ເພິ່ນຈະຕ້ອງຕິດໃຈໃນສີມືການນວດຂອງຂ້ອຍນີ້ລະ !) ຕາມທັມດາ ຂ້ອຍເປັນເຈົ້າຂອງຮ້ານແລະເປັນຊ່າງໃຫຍ່ ຖ້າແຕ່ມ້ວນກັບເກົ້າຜົມທີ່ນັ້ນ ວຽກອື່ນ ໆ ຕ້ອງແມ່ນລູກນ້ອງ ແຕ່ນີ້ຂ້ອຍເຮັດເພື່ອໃຫ້ເພິ່ນເຫັນວ່າ ຂ້ອຍໃຫ້ກຽດເພິ່ນຫລາຍ ແລະເພິ່ນກໍຈະມາອຸດໜຸນຕໍ່ໄປ

ຂນະທີ່ຍາແມ່ຕຸ້ຍ ນັ່ງເຮັດຄໍທົດຢູ່ກ້ອງບັງອົບນັ້ນ ພວກຂ້ອຍກໍດຶງແຂນດຶງຂາເພິ່ນ ຈີ່ມຂີ້ເລັບຕີນເລັບມື ຮຸກສີຂີ້ໄຄອອກເປັນແຜ່ນ ໆ ທຳອິດຍາແມ່ຕຸ້ຍຈົ່ງໝັກກະດຽມຄິງ ເປັນຖຶກ ໆ ຍຶກ ໆ ແຕ່ຄາວດຽວເພິ່ນກໍປະຕາມສະບາຍ ຄົງຈະຮູ້ສຶກ

ສະອາດແລະມີແຮງ ທີ່ມີຜູ້ມາຂັດສີສວິງອັນໃຫ້

ທາງຝ່າຍຍາແມ່ຈ່ອຍ ກໍນັ່ງຢູ່ຮຽງຂ້າງຕລອດເວລາ ແລະລົມເອົາໃຈຢູ່ບໍ່ຂາດປາກ

— ຍາເອື້ອຍລົດບ່ອຍປະລະເລີຍ ບໍ່ເອົາໃຈໃສ່ເຈົ້າຂອງເອງຈົນເພິ່ນຫລຽວຂ້າມໄປໄດ້ ເກີນຂນ້ອຍເຫລືອໃຈຕາງ...!

ຍາແມ່ຕຸ້ຍກໍແຍ້ມຫົວຢູ່ ແຕ່ບໍ່ປາກ

— ເງິນຄຳຂອງທາໄດ້ຕວ່າຍາເອື້ອຍ ຈ່າຍມັນໄປໂລດມ່າ ມ້າໝ້າຄ່າແຕ່ງເພດ ທາງເພິ່ນເອົາໄປຈ່າຍຄູນຮ່າງເຂົາ.... ມັນແຫ່ງຊິຫລົ້ມຊິຈົມຍ້ອນຕວາ ! ຂນ້ອຍລົດໄດ້ຍິນມາໝາຫູແລ້ວໃດ໋ ນີ້ຍັງແຕ່ບໍ່ຮູ້ໝ້າມັນຊິ ໆ !

ສຽງຍາແມ່ຈ່ອຍຄືວ່າສູມໃຫ້ໃພຢູ່ພິບ ໆ ແຕ່ຍາແມ່ຕຸ້ຍກໍຍັງຫົວຢຸ້ມເປີຍຢູ່ຄືເກົ່າ

— ມື້ນີ້ຂນ້ອຍຊິພາຍາເອື້ອຍ ຊອກຊື້ກະເປົາກັບເກີບໃໝ່ ຊຸດນີ້ພໍ່ເມືອຢາມບ້ານເກົ່າມັນແລ້ວລະ ເບິ່ງດູ໊ຂນ້ອຍ ໝັງລອກປອກເປີກໝົດແລ້ວ ຊິພາເຂົ້າຮ້ານຕັດເສື້ອສີມືເອກໃນວຽງຈັນນຳ ! ມຸ່ງອັນມັນເຂົ້າຮູບເຂົ້າຮອຍ ກໍຈື່ງບໍ່ເຕບເຊບປານໃດ ເອົາໃຫ້ຍາອ້າຍຫລົງໂລດແຫລະນໍ້ມື້ນີ້ນ່ະ ຂ່າວໂລ ໆ ເລ ໆ ຫັ້ນ ມັນຊິໄດ້ໝົດໄປແດ່ ?

ຍາແມ່ຕຸ້ຍໄດ້ແຕ່ຫົວຂວະ ໆ ເພາະສົບເພິ່ນກວ້າງ ແລະແຂ້ວກໍເຈິງ ຈ້າບໍ່ພໍອົມຄຳໝາກຈົນປາກເບັ່ນເທີບ ແຂ້ວເລັ້ມໃຫຍ່ຊວກລອກຢູ່ທາງໜ້າ ຮິມສົບດຳແຫລ້ເບັ່ນແຜ່ນຕິດກັນ ຂ້ອຍເດົາເອົາວ່າ ການແຕ່ງເພດຄົບຖ້ວນນຳສມັຍ ຄືຍາແມ່ຈ່ອຍແນະນຳມານີ້ ຄົງຈະປັ້ນກັນກັບສະພາບເດີມຂອງເພິ່ນຜູ່ວ່າຢູ່ພໍແຮງ !

ຂ້ອຍຄະເນເອົາວ່າ ຍາແມ່ຕຸ້ຍຄົງຖານະດີເຕີບ ດີກວ່າຍາແມ່ຈ່ອຍອີກ ເພິ່ນອາດເບັ່ນຮອດເມັຽອະທິບໍດີ ຫລືເມັຽນາຍພັນທະຫານຕຳຣວດ ຫລືຊິແມ່ນເມັຽຂຸນນາຍພົນພຸ້ນຈ້າກໍບໍ່ຮູ້ ອັນນີ້ກະວ່າບໍ່ຊ່າງ !

ຂນະທີ່ພວມເກົ້າຜົມໃຫ້ພວກຍາແມ່ ກໍມີແຂກຈຸໃໝ່ຊອນເຂົ້າມາ ສາວນຶ່ງນຸ່ງສົ້ງຂາບານ ອີກສາວນຶ່ງນຸ່ງກະໂປງສັ້ນຈຸກະໂພນກົ້ນ ແຕ່ງໜ້າແຕ່ງຕາສ່ສະແດງວ່າ ບໍ່ໄດ້ມີວິຊາມາກິນແບບລັບ ໆ ລີ້ ໆ ຄືແຕ່ເກົ່າແລ້ວ (ແປວ່າ ເປີດເຜີຍຍີ່ຫໍ້ຕາມສະບາຍ) ພວກນັ້ນມາຮອດກໍຫລຸບເຂົ້າຫ້ອງຫລັງຮ້ານເພື່ອສະຜົມ

ຍາແມ່ຈ່ອຍຫລຽວຊ້າຍຫລຽວຂວາ ແລ້ວກໍຊິ່ມແຮງ ໆ ໃຫ້ຍາແມ່ຕຸ້ຍຟັ່ງວ່າ

— ອີ່ສົ້ງຂາຍາວນັ້ນລະ ເມັຽນ້ອຍຍາສົມສີ ເພິ່ນຫລົງມັນ ຈົນຊິບໍ່ຄືນເມືອເຮືອນແລ້ວວ່າຊັ້ນ ດຽວນີ້ນະ *ເຂົາວ່າມັນ*

ມີຂອງດີໃດ໋ ຢາເອີ້ຍ !

— ເອີ້ຍພ່າຍຢ່າເອົ້າມາ ! (ຢາແມ່ຕຸ້ຍເອົ້າອອກມາເບັ່ນປໂຍກຍາວ ໆ ເບັ່ນເທື່ອທຳອິດ) ມັນຫຍັງບໍ່ຫາກິນນຳແຕ່ຢູ່ບາຣ໌ ຫລືອະເມຣິກາໜັງດຳໜັງຂາວທີ່ມັ້ນບຸ໋ ຊອກຍາດຜົວຜູ່ມັ້ນຜູ່ມີ້ !

— ດັນແມ່ນຂນ້ອຍຊິນຳໄປຕົບມັນເທິງສອງຄົນ ຢູ່ກາງບາຣ໌ ເພິ່ນໄປແຊ່ຢູ່ນຳເຂົາທັງໜ້າຮ້ານຫລັງຮ້ານວ່າຊັ້ມກ໌ ໄທເຮືອນຂນ້ອຍວ່າ" ຢາແມ່ຈ່ອຍຊົງໂມໂຫຂຶ້ນນຳທຸກອິນາທີ

— ຜົວນ້ອງກະໄປບາຣ໌ຢູ່ຫວ໊ະ ?" ສຽງຢາແມ່ຕຸ້ຍຖາມຢອກ

— ໂອ໊ະ ! ເຈົ້ານາຍເພິ່ນຄຸມໄປນຳຊື່ ໆ ດອກ ຂນ້ອຍຂອງວ່າເບັ່ນຜູ້ກຳເງິນກຳຄຳໃຫ້ເພິ່ນ ກະຕ້ອງຕິດຕາມໄປແດ່.... ແຕ່ໄທເຮືອນຂນ້ອຍບໍ່ໄປເຮັດໂລ ໆ ເລ ໆ ແລ້ວກະບໍ່ເຄີຍປິດບັງອີກ ໄປໃສມາໃສກະເອົ້າສູ່ຟັ່ງໝົດກ້ຽງ !

— ແລ້ວເລົາບໍ່ຫລິ້ນບໍ່ມີເຊື່ອງໄວ້ແທ້ຫວ໊ະ ?" ຖາມຄືນ ຊົງບໍ່ຢາກເຊື່ອຫູ

— ບໍ່ມີທາງຂນ້ອຍ!ເພິ່ນພ່າຍຊິຕາຍ ຈຳໃຈໄປດອກຈັ້ງໄປ ເພິ່ນຍັງມາເອົ້າໃຫ້ຂນ້ອຍຟັ່ງວ່າ ເໝັນຂີ້ອື່ນອກໝູ່ມັ້ນ ລາງ

ອື່ຕາຍແຕ່ເອັດຄືເຂົາວ່າ *ງາມແຕ່ຮູບ–ຈູບບໍ່ຫອມ* ຫັ້ນລະ ດອບໂພະແຕ່ເຂົ້າແປ້ງນ້ຳແດງໃສ່ ຜ່ອງກະເປັ້ນຂີ້ເຕົ່າເໝັນຜົ້ງ ໆ!

– ແລ້ວກະເລີຍ *ໂງໄປກິນປາແດກຫມົກເກົ່າ ຢ່າງຄຳຮູ້ຄຳຊຽງ?*" ຍາແມ່ຕຸ້ຍຕໍ່ໃຫ້ຢ່າງຖືກອາຣົມ ເບິ່ງຄື ວ່າ ການລົມຂອງເພິ່ນກໍຫລ່ຽນໄຫລອື້ນ ເພິ່ນກ່າວຕໍ່ໄປວ່າ

– ເອື້ອຍພີ້ກະຜູ້ນຶ່ງ ບໍ່ມັກໃຫ້ໄປມີລູກເຊື່ອງ ຫລີ້ນ ນຳພັກນຳພວກໄປເອື້ອຍກະບໍ່ວ່າ ຢ່າເກີດໄປອຸດໜຸມລ້ຽງເກືອເຂົາ ຈົນມີຊື່ວ່າ *ເມັຽນ້ອຍ* ມັນເສັຽປຽບທາງເຮົາ ເສັຽອາດ ຈັ້ງ ວ່ານີ້ ຄັນຮູ້ຄັກ ໆ ມື້ໃດບໍ່ໃຫ້ມັນມີດອກ ເຫັນເອື້ອຍບໍ່ປາກຊີ້ ເທາະຊິເຮັດມັນຄັກ ໆ ເບິ່ງ ໂອ໊ຍ ! ເວົ້າແຕ່ພື້ນພອດທ່ານີ້ຫລາຍ ນາງມີຊື່ຂີ້ຄ້ານຟັ້ງແລ້ວນໍ້ ເຈົ້າຢູ່ບ່ອນຈັ້ງຊິແຕ່ງຊິພໍ້ ຄົນສູ່ແບບ ມະ ລຳມະລອຍກະມາເນາະ ບໍ່ທົນຫວາຍຕາບໍ່ຫລ້າ ?" ຍາແມ່ຕຸ້ຍ ອວ່າຍໜ້າມາຖາມຂ້ອຍ ຊຶ່ງມິດຟັ້ງຢູ່ຕລອດຣາຍການ

– ຈຳເປັ້ນແລ້ວຂນ້ອຍຢາກໄດ້ເງິນ ໃຜມາກະຕ້ອນ ກະຮັບພົດມັ້ນແລ້ວຂນ້ອຍ" ຂ້ອຍຕອບແບບເຂົ້າທາງເພິ່ນໄວ້ເພື່ອ ໃຫ້ຖືກໃຈພວກຍາແມ່ທີ່ມັກເປັ້ນເອກໂທນ ແລະມັກປຽບທຽບຜົວ ໂຕເອງວ່າ ມີຄ່າສ່ຳຄຳກ້ອນທີ່ທົວ ທີ່ມັ້ນ !

ຫລັງຈາກເກົ້າຜົມແບບທັນສມັຍ ແລະພໍເໝາະພໍງາມ

ໃຫ້ພວກຍາແມ່ທັງສອງແລ້ວ ຂ້ອຍກໍ່ຍົວະຂາຍເຄື່ອງສຳອາງ ປະເພດທາປາກ ທາແກ້ມ ລອກໜ້າໃຫ້ສວຍງາມ ກຳຈັດສິວຝ້າໜ້າດ່າງດຳ ໃຫ້ພວກເພິ່ນຫລາຍຕໍ່ຫລາຍແນວ ໄດ້ໃບໂດລາມີເລກ 20 ຕິດເພີ້ເຈີ້ ເຂົ້າລຶກຊັກຊ໊ະຫວານ ໆ !

— ຈັກບັກຕາມັນໄປຕາຍໃສທາງໃດ໋ ນ້ອງອອກໄປເບິ່ງດູ໊ມັນມາຫືຍັງ ບອກຖ້າຢູ່ພີ້ກະບໍ່ຖ້າ ມັບມື້ລົງມັບມື້ລອນເຂົ້າລະໃດ໋ໂຊເຟີພີ້ກະດາຍ" ຍາແມ່ຕຸ້ຍຈົ່ມສັງເກດເບິ່ງເພິ່ນ "ໃຫຍ່" ແທ້ ໆ ຂນາດຍາແມ່ຈ່ອຍສະແດງອອກມາວ່າ ລູບເລັຽເຕັມຂີດນ້ຳວົກ ໆ ອອກໄປຫົນທາງ ຕາມຄຳ "ສັ່ງ" ຫວານ ໆ ນັ້ນ

ແຕ່ຊື່ "*ບັກຕາ*" ຂ້ອຍເຄີຍໄດ້ຍິນຫລືຮູ້ຈັກບໍ້ ? ຫົວໃຈຂ້ອຍເຕັ້ນຕິກຕັກຂຶ້ນມາ....

— ມາແລ້ວ ຍາເອື້ອຍ

ຂ້ອຍກັ້ນໃຈນຳອອກໄປສົ່ງພວກເພິ່ນຮອດຣົດ ເບັ້ນຈັ້ງໃດກະເບັ້ນກັນລະມື້ນີ້ !

— ແລ້ວມາອີກເດີຂນ້ອຍ ຊິອອກແບບຜົມໃໝ່ ໆ ເກົ້າໃຫ້ຍາເອື້ອຍອີກ" ຂ້ອຍລົມນຳຍາແມ່ຕຸ້ຍ ຂນະທີ່ຍ່າງອອກໄປສົ່ງເພິ່ນທັງສອງຮອດໜ້າຮ້ານ.... ຄັນບໍ່ເວົ້າມັນກະບໍ່ດີ *ຮອດຂັ້ນນີ້ ຂ້ອຍບໍ່ແນ່ໃຈວ່າຊິມີຫຍັງເກີດຂຶ້ນໄດ້ !*

*ທັນໃດ... ເຣື່ອງບັກຕາກໍເປັນຄວາມຈິງ ເມື່ອສາຍຕາຂ້ອຍຟາດໄປເຫັນຣົດໂຟັກ ປ້າຍກາ ດອກຈັນຫມາຍເລກ....?*

*ບັກຕາ* ຫລຽວມາຜ່ານສາຍຕາກັບຂ້ອຍ ຢ່າງມີ ຄວາມໝາຍ.... ສາຍຕາມັນອ້ອນວອນ... ຄືເດັກນ້ອຍຜູ້ຜິດພາດ ໂດຍບໍ່ຕັ້ງໃຈ ແລະຢາກຂໍໃຫ້ຜູ້ໃຫຍ່ອະພັຍ.... ບໍ່ຖືຊາ.... ບໍ່ໃຫ້ ມີຫຍັງເກີດຂຶ້ນ !!!

*ໃຈຂ້ອຍເຕືອດປຸດ ໆ ຂຶ້ນມາ ເມື່ອຄຶດ ພໍ້ຄວາມລົມຂອງສອງຍິງນັ້ນ ນີ້ແມ່ນຫຍັງກັນ....? ມັນເປັນເຈຕນາຂອງໃຜ....? ຫລືຫາກວ່າ.... ຄົນມັນ ເກີດຕາກາຍຂຶ້ນມາເອງ ?*

– ເອີ້ຍລະອໍ່” ສຽງອີລູກນ້ອງຄົນສນິດຜູ້ນຶ່ງ ຊຶ່ງນຳ ອອກມາ ຊິ່ມບອກຂ້ອຍຄ່ອຍ ໆ “ຣົດຍາພໍ່ຕ່ອາຫັ້ນ... ອ້າຍຕາ ເປັນຜູ້ຂັບມາ... ລາວໄປລັດພໍ້ຂ້ອຍຢູ່ຫລັງຮ້ານຫອ່າງກົ້ນ ເລົາ ວ່າຍາແມ່ຈ່ອຍທາກດຶງມາພໍ້ ລາວຊິເອົ້າຫຍັງອອກໄປກະບໍ່ກ້າ...

ຂ້ອຍປຸບແຂນມັນໄວ້ ໂຕເອງຕີພ້າບໍ່ຮູ້ຮ້ອນ ທັງທີ່ ທາງໃນພົດລ່ອງ ໆ ຢູ່ຄືກັນ... ຈົນຣົດທີ່ບັກຕາຂັບ ພາເອົາຍາແມ່ ທັງສອງແລ່ນກຸ່ມ ໆ ໄປແລ້ວ ຈຶ່ງພໍ້າວຊູກຫລັງລູກນ້ອງເຂົ້າມາ

ຮ້ານ ພໍດີທາງໃນກໍພົດສະນັ່ນຂຶ້ນ

– *ອີ່ຕຸ້ຍຫັ້ນລະ ເມັຽຜົວມຶງມ່ະອໍ ?*" ອີ່ພວງທອງ ຜູ່ມຸ່ງສົ້ງຂາບານຣັດກົ້ນ ບອກຂ້ອຍ "ກູຊິບອກມຶງແຕ່ມາເຫັນທຳອິດແລ້ວ ອີ່ທ່າໝູຫາກຫ້າມໄວ້ !

"*ອີ່ຫມູ*" ກໍແມ່ນພັກພວກເກົ່າໃນຄນະຂອງຂ້ອຍຢູ່ບາຣ໌ "*ທູໄນທ໌*" ນຳກັນແຕ່ກີ້ ມື້ນມັນຟາດ ມີໂກຣ–ສເກີດມາ ດຽວນີ້ມັນເບັ້ນນັກເຕັ້ນໂຊ໌ປະຈຳບາຣ໌ *ລີລາ* ໃສ່ຊື່ກະແດະເບີ້ນຝຣັ່ງວ່າ ມີສມີນາ ພຸ້ນລະເພີ່ນ !

ຂ້ອຍຍັງປາກບໍ່ອອກ ມັນຈັງງັງໄປປານຖືກຕົບໜ້າ

ດັກ ໆ

ອີ່ພວງທອງ ສາທະຍາຍຕໍ່ໄປວ່າ

– ກູເສັຽດາຍໃຫ້ມຶງຮູ້ກ່ອນແທ້ ໆ ມຶງຊິກ້າບໍ່ ຟາດຕັດຜົມຫົວໄປກຊ໊ະກາງຫົວ ຫລືບໍ່ກະເອົາຢາທາຂີ້ກາກຂາຍໃຫ້ມັນໄປທາແກ້ມ ໃຫ້ມັນລອກເບີ້ນຂີ້ໝາກເຮັງໄປເລີຍ... *ຮຍ... ອີ່ເຖົ້າຫນັງຫຍານ ເກີນຕາເຈົ້ !!!*

ສຽງພວກໝູ່ແລະລູກນ້ອງໃນຮ້ານ ພາກັນຫົວຮາ

ຕຶ້ງ ໆ

ຂ້ອຍຖາມຢູ່ໃນໃຈຂ້ອຍເອງວ່າ

ເຂົາຊິພາກັນມາອີກບໍ່ ?

ແລະ

ເຮົາຊິເຮັດຫຍັງໃຫ້ເຂົາດີ

ແລ້ວຂ້ອຍກໍ່ບໍ່ຈຳເປັນຫາຄຳຕອບ ແກ່ໂຕເອງເລີຍ ເພາະໃນແລງນັ້ນເອງ "*ຍາພໍ່*" ຕາຕື່ນມາຫາຂ້ອຍ ບອກວ່າ *ບັກຕາ* ຣາຍງານໝົດແລ້ວ ເພິ່ນຈະບໍ່ຍອມປະໃຫ້ *ຣົດໄຟສອງຄັນມາກາຍໃກ້ສຽດສີກັນ* ແບບນີ້ອີກເດັດຂາດ ເພິ່ນວ່າເພິ່ນມັກຄວາມສງົບ

ຂ້ອຍຟັງເພິ່ນ ແຕ່ກໍ່ຫ້າງທ່າກຽມພ້ອມສເມີ ຫາກຖືກໂຈມຕີກ່ອນ ຂ້ອຍຈະບໍ່ໄວ້ໜ້າ *ຄູ່ແຂ່ງຂັນຮູ້ແລ້ວ ກໍຈົ່ງຣະວັງໃຫ້ດີ !*

# ຜີທ່າກິນຄວາມຝັ່ນ !

– ໂດຍ ປາໄມ –

● ຝັ່ນວ່າຊູ້ເກົ່າຍື່ອງ ມາກອດກຸມຫລອນ
ມືຂາຍມົມ ໝ່ອຍຕຶງສອງເຕົ້າ
ຊັກກະເຊັນໃຈເຕັ້ນ ມືນຕາຕົກຂະມ່າ
ເຫັນຜົວນອນຢູ່ລ້າ ກໍເລີຍແກ້ສູ່ຜັ້ງ

● ມື້ນັ້ນແມ່ນເລກຫ້າ ຜົວວ່າແກມຫົວ
ມ. ນົມ ແມວເຂົາຂາຍ ວ່າມຶ່ງສາເຫາະນໍ້ອງ
ແລ້ວເລົ່າຈັດແຈງຊູ້ ທວຍເບີບ່ຊ້າຢູ່
ເສືອກອອກເລກສີ່ເກົ້າ ຝັ່ນບ້າທ່າກິນ (ຝັ່ນ)!!!

## ລາວ ແປເບັ່ນ ລາວ

✻

*ຖຸນົນ* (ແຫ່ງບຸນ): ອ່ານວ່າ ຖະໜົນ ແປວ່າຫົນທາງທີ່ມີສັນຍາ ຮັບເໝົາກໍ່ສ້າງລຶກລັບສັບສົນທີ່ສຸດໃນໂລກ ຄືສັນຍາວ່າຕ້ອງ ເຮັດໃຫ້ແລ້ວພາຍໃນ 90 ມື້ ໂດຍບໍ່ມີກຳໜົດ

*ທໍຣະມານ:* ເສດຖີທ່ານໃດຢາກລອງຊີມຣົດຊາດ ຂອງຄວາມ ທໍຣະມານຢ່າງແສນສາຫັດ ກໍລອງ ໆ ໄປຈ້າງຣົດມາຂົນເງິນ ໄປຖົ້ມລົງນ້ຳຂອງເບິ່ງ ເມື່ອຖົ້ມໝົດຈົນບໍ່ມີເງິນໃຫ້ຄ່າຣົດ ເຂົາແລ້ວ ມັນຊິເບັ່ນອາດໃດ ?

*ນານສກຸນ:* ຕາມກົດໝາຍແລ້ວເມັຽຕ້ອງໃຊ້ຂອງຜົວ ແຕ່ຜົວ ໃຊ້ຂອງເມັຽກໍໄດ້ ໃນກໍຣະນີທີ່ພໍ່ເຖົ້າເບັ່ນເຈົ້າໃຫຍ່ນາຍໂຕ

*ບາບ:* ສ້າງໄວ້ຫລາຍ ໆ ກໍບໍ່ເບັ່ນຫຍັງ ໃກ້ ໆ ຊິຕາຍແລ້ວ ຄ່ອຍຂ້ຽວເຮັດກອງບວດ ກອງກະຖິນ ສ້າງວັດສ້າງສິມ

# ຈ່າກະນິຫົວໃຈ

■ ໂດຍ ປາໄນ ■

* ຜູ່ສາວແຖວພຸ້ນ ຫລຽວເບິ່ງຕີນປານຕີນຣົດຊາ....

ຫລຽວເບິ່ງໜ້າປານໜ້າຣົດ ອາ.ແອັມ.... ຊ້າບໍ່ໝໍາດັນ

ບໍ່ມີດາວ ເພີ່ນຮອດບໍ່ຢາກໃຫ້ກິນມ້າຮ່ອນບອຍຊ້າ....

*ເຣື່ອງນີ້ ເປັນເຣື່ອງໃນໃຈຂອງຂ້ານ້ອຍ ຂ້ານ້ອຍຂຽນມັນຂຶ້ນມາເອງ ດ້ວຍຄວາມຮູ້ແລະ ຄວາມຄຶດຝັນທີ່ພໍມີ* ຂ້ານ້ອຍນັ່ງຂຽນຢູ່ເທິງລັງໄມ້ ທີ່ໄດ້ດັດແປງມາເປັນໂຕະເຮັດການຂອງກອງພັນ ນັ່ງເບິ່ງການບັນຍາຍອັນແສນທີ່ຈະໂຫດຮ້າຍນີ້ເບິ່ງດູ "ໃນມະໂນກາງພະນາໄພ ເທິງຍອດດ້ແດ້ຂອງໜ່ວຍພູສູງຊັນ ທາງພາກຕາເວັນຕົກສຽງເໜືອຂອງຣາຊອານາຈັກລາວ

"*ເຫົ້ງ !*" (ສຽງປືນໃຫຍ່ທີ່ພວກແມວລາວ ຍິງມາໃນຂນະທີ່ຂ້ານ້ອຍກຳລັງຂຽນຢູ່)

ສຽງກ້ອງອາກາດແລ່ນເລາະສັນພູ ຊຶ່ງລາງຈອມສອດແຫລມປານນົມນາງຍັກໃນຈິນຕະນິຍາຍ ແລະລາງເທື່ອລົມທີ່ພັດຜ່ານມາຢ່າງແຮງກໍໂຕນລົງຕ່ຳ ຕາມແນວປ່າຂຽວຊ້ຳ ແລະທົ່ງຫຍ້າແປນເປົ່າ ປານວ່າມີມະນຸດຜູ້ຍິ່ງໃຫຍ່ ເອົາຜ້າໜົມສີຂຽວມາປູລາດໄວ້ໃຫ້ສອາດຕາ ເວລາຫລິງແລເຫັນທັມຊາດຊ່າງງາມຈັບໃຈອີ່ຫຍັງຈັ່ງຊີ້ ທົ່ງນາປ່າໄມ້ແລະພູເຂົາທີ່ຊ້ອງສອນລອນລຽນກັນຊ່າງເປັນຣະບຽບໃນສາຍຕາ ແລະກະຕຸ້ນເຕືອນມັນສມອງອັນສົມລະອົນຂອງຂ້ານ້ອຍ ໃຫ້ໃຝ່ຝັນເຖິງສິ່ງອັນຫອມຫວານໃນຊີວິດນີ້ແທ້ ແມ່ນລະຂ້ານ້ອຍຂໍໃຊ້ຄຳວ່າສິ່ງອັນຫອມຫວານ ຫລືຈະເອີ້ນ

ມັນວ່ານ້ຳເຜີ້ງຊີວິດກະບໍ່ຜິດ ເພາະສິ່ງນັ້ນເປັນສິ່ງທີ່ຫອມຫວານອີ່ຫລີ ແລະນ້ຳເຜີ້ງກໍເປັນສິ່ງຫອມຫວານ ຈຶ່ງສົມແລ້ວທີ່ຈະເອີ້ນວ່າ "ນ້ຳເຜີ້ງຊີວິດ" ຂ້ານ້ອຍກຳລັງນັ່ງຝັນເຖິງນ້ຳເຜີ້ງຊີວິດ ແຕ່ຄວາມຝັນຍ່ອມເປັນຄວາມຝັນ ຄວາມຈິງຍ່ອມເປັນຄວາມຈິງ ມັນຈະບໍ່ມີມື້ປ່ຽນສພາບ ມັນຈະບໍ່ມີມື້ປ່ຽນແປງຈາກຄວາມຝັນມາເປັນຄວາມຈິງໄດ້ເລີຍ ແລະໃນເມື່ອຄວາມຈິງນັ້ນ ຂ້ານ້ອຍເປັນພຽງນາຍທະຫານນ້ອຍ ໆ ທີ່ຄືບຄານຂຶ້ນມາຈາກຊັ້ນພົນທະຫານ ກ້າວຂຶ້ນມາເທື່ອລະຂັ້ນ ໆ ເວລາສິບປີປາຍ ແລະມື້ນີ້ຄຳສັ່ງເລື່ອນຊັ້ນກໍຕົກມາເຖິງ ມັນມີຊື່ຂ້ານ້ອຍນຳ ຂ້ານ້ອຍໄດ້ເປັນ *ຈ່າເຕີ* ແລ້ວຕັ້ງແຕ່ມື້ອອກຄຳສັ່ງນັ້ນເປັນຕົ້ນມາ ຂ້ານ້ອຍດີໃຈແລະຕື່ນເຕັ້ນເປັນພິເສດໃນໂຊກວາສນາອັນທີ່ຕົນເອງມີ

ຊັ້ນຈ່າຂອງຂ້ານ້ອຍ ໄດ້ມາຍ້ອນຄວາມດີຄວາມ

ຊອບ

ໄດ້ມາຍ້ອນຄວາມອົດທົນ ອົດສູ້ເອົາເລືອດທາແຜ່ນດິນ ອາບເຫື່ອຕາງນ້ຳ ແລະນອນດິນກິນເຂົ້າແຫ້ງມາແລ້ວພໍແຮງ *ບໍ່ແມ່ນໄດ້ມາຍ້ອນເລັຽແຂ້ງເລັຽຂາ ເຈົ້ານາຍໃຫຍ່ນ້ອຍທາງໃດເລີຍ* ຂ້ານ້ອຍຄຶດຊົມເຊີຍຕົນເອງຢູ່ເຕັມກະດອງໃຈ ເຈົ້ານາຍຜູ້ນຶ່ງເຄີຍເວົ້ານຳຂ້ານ້ອຍວ່າ

"ເຮີຍ ໂຕຕ້ອງເສັຽເບັຽແກັດນຶ່ງເດີ ຄ່າເຮົາຂໍຊຸ້ມໃຫ້ !"

ຂ້ານ້ອຍຄຶດຖຽງໃນໃຈວ່າ "*ມັນເຣື່ອງອິຫຍັງ ໄປຕີເສິກລອດຕາຍມາໄດ້ຊຸ້ມ ຍັງຫາວ່າໂຕຂໍຊຸ້ມໃຫ້ ຜູ່ເພິ່ນເປັ່ນຣັຖມົນຕຣີປ້ອງກັນປະເທດ ເພິ່ນແຮ່ງເປັ່ນຜູ່ເຊັນໃຫ້ ແຮ່ງຊິບໍ່ຄາມກິນໄດ້ກວ່າຜູ່ຂໍຊ້ຳເປາະ ?*" ແຕ່ວ່າຂ້ານ້ອຍກໍພຽງແຕ່ຄິດໃນໃຈທໍ່ນັ້ນ ສ່ວນປາກອັນສລາດຫລັກແຫລມ ຮ່ວມກັບລີ້ນທີ່ປາສຈາກກະດູກອັນແຂງກະດ້າງຂອງຂ້ານ້ອຍ ເປັ່ງສຽງສາທຸການອອກມາວ່າ "ໂດຍຂ້ານ້ອຍຂາດເບີກເງິນເດືອນຂົ້ມຊຸ້ມແລ້ວຂ້ານ້ອຍຊິປາຍເປດອກ" ຄິດຢາກເບັ້ປາກໃສ່ເພິ່ນຢູ່ແຕ່ມັນເຮັດບໍ່ໄດ້ ເຖິງເພິ່ນບໍ່ເຫັນແຕ່ໝູ່ຝູງລາງຄົນອາດຊິເຫັນ

ແລ້ວເທື່ອນັ້ນຢາກໄດ້ຊຸ້ມໄວ ຂ້ານ້ອຍຍ້ານມັນຖືໂອກາດເອົາການສະແດງຄວາມບໍ່ພໍໃຈຂອງຂ້ານ້ອຍ ໄປໃຊ້ເປັ່ນເຄື່ອງມືຊ່ອຍເຫລືອໃນການຂໍຊຸ້ມ ຂ້ານ້ອຍວ່າຊິເບັ້ກົ້ນຂ.... ແຕ່ຄິດວ່າມັນບໍ່ເປັ່ນມົງຄົນ ເລີຍບໍ່ຮູນເປັ່ນ "ເບັ້ຢູ່ໃນໃຈ" ອັນນີ້ແມ່ນເວົ້າເຣື່ອງຈ່າຕຣີທີ່ຂ້ານ້ອຍໄດ້ມາໂດຍຍາກລຳບາກ ຊຶ່ງເຈົ້ານາຍເພິ່ນອ້າງວ່າເພິ່ນຂໍໃຫ້ຂ້ານ້ອຍ ຂ້ານ້ອຍວ່າມັນເປັ່ນໜ້າທີ່ໂດຍ

ກົງຂອງເພິ່ນທີ່ຈັກສເນີຂໍໃຫ້ ດັ່ນເພິ່ນບໍ່ຂໍໃຫ້ແລ້ວຊິໃຫ້ ໝ... ທາງ ໃດຂໍໃຫ້ ຂ້ານ້ອຍຄຶດໃນໃຈວ່າຈັ່ງຊີ້....

ຂາດທີນີ້ຂ້ານ້ອຍກໍເປັ່ນຈ່າແລ້ວ ເງິນເດືອນກໍອົ້ນ ອີກ ຖານະມັນກໍກ້າວຂຶ້ນຕາມຂັ້ນໃນທຸກ ໆ ທາງ ແລະໂດຍທົ່ວໆ ໄປ ເປັ່ນຕົ້ນວ່າ ດວາມເປັ່ນຢູ່ ການສັງຄົມ ການດອງຊີບ ເປັ່ນ ຈ່າແລ້ວ ຂ້ານ້ອຍຊິມົວໄປສະປາຊິວນໍາຮ່ອງເພືອງຢູ່ມັນກໍບໍ່ດີ ເຖິງຍາມເອົາກ່ຽວເຂົ້າ ຊິໄປງົມກົ້ນໝູພຸກໝູແຝງອີກ ມັນກໍບໍ່ ສົມສັກສີຂອງຈ່າ ທະຫານມັນຊິດູຖູກທຸ່ມຮໍໄດ້ ແຕ່ວ່າບໍ່ຈັກເຮັດ ຈັ່ງໃດດີ ດັນຊິເຮັດໂຕດີ *ຈ່າແກ້ວ* ຊຶ່ງເພິ່ນເປັ່ນຈ່າມາກ່ອນກໍ ລໍາບາກໃຈຕອນປາຍເດືອນ ຕອນ *ໂອເດ* ເພິ່ນມາເບີກເງິນ ຂາດເທື່ອໂອເດກັບໄປແລ້ວ ໂລດໄດ້ແຕ່ຮ້ອງວ່າ "ໂອ່ເດ້" ຢູ່ ແນວນັ້ນລະ ຂ້ານ້ອຍຈຶ່ງວ່າ ເຮັດດີຈ່າແກ້ວກໍບໍ່ດີ ເຖິງແມ່ນວ່າ ມັນຊິມ່ວນໃຈອອນຊອນໃຈກະຕາມ ແຕ່ວ່າຈ່າແກ້ວກໍບໍ່ເດີຍອຶດ ເງິນໃຊ້ ວ່າແຕ່ດຽວນີ້ ຈ່າແກ້ວກໍບໍ່ໄດ້ຢູ່ໃຫ້ໃຜ ໆ ມາຕັດເງິນ ເດືອນນໍາໂອເດອີກແລ້ວ ເຫັນພວກໄທບ້ານວ່າເພິ່ນໂຕນໄປນໍາ ພວກອ້າຍນ້ອງແນວແກວວ່າຊັ້ນ ບໍ່ໂຕນກະບໍ່ທັນຂ້ານ້ອຍວ່າ ເງິນ ເດືອນດ້ານສິບປາຍພັນເຮັດແບບມີທ້າກິນສິບ ຂ້ານ້ອຍວ່າມັນຢູ່ບໍ່ ໄດ້ດົນດອກ ມີຫລາຍຄົນພວກທະຫານກອງທັບໂຕນໄປ ກໍດີວ່າ

ຫັ້ນລະ  ພວກມັນໂຕນໄປກໍ່ມີແຕ່ພວກໜີໜີ້  ຫລືບໍ່ກໍ່ໜີຄຸກໜີໂທດ ຣວມຄວາມວ່າພວກໂລກບໍ່ຕ້ອງການທີ່ມັ້ນທີ່ໂຕນໄປ  ສ່ວນພວກຢູ່ ມຸ ໆ ສິ ໆ ບໍ່ເຫັນເຂົາທຸກຮ້ອນສັງເລີຍ  ຂ້ານ້ອຍຍັງບໍ່ຢາກໄດ້ຊື່ ວ່າເປັ່ນຄົນຂາຍຊາດດອກ  ຍັງບໍ່ຢາກໂຕນໄປນຳຈ່າແກ້ວ  ເລີຍບໍ່ ຄິດທຳນອງມັ້ນ

ຂ້ານ້ອຍຫັນມາຄິດນຳເຣື່ອງກິນເຣື່ອງນອນ  ເອື້ອັນ ແນວກິນນີ້ກໍພໍໄດ້ກິນດອກ  ແຕ່ວ່າເຣື່ອງນອນນັ້ນກະນອນໄດ້ຢູ່ ໂດຍທີ່ຄົນສມັຍນີ້ມັກເວົ້າວ່າ *ນອນຫນາວ*  ບໍ່ແມ່ນຂ້ານ້ອຍ ຮຽນຄູຊາຍນອນດຽວດອກ  ແຕ່ມັນບໍ່ມີປັ່ນຍາຫາຜູ້ມານອນຄູ່ຕ່າງ ຫາກ  ຂ້ານ້ອຍກະສອດຊ່ອງຫາຢູ່  ຄັນວ່າອາຍຸອານາມກໍບໍ່ຫລາຍ ຫລວງພິສັງ  ເພາະຂ້ານ້ອຍເຂົ້າທະຫານແຕ່ນ້ອຍ  ເຂົ້າຕັ້ງແຕ່ອາຍຸ ໄດ້ 16 ປີ  ເຂົ້າມາສິບປາຍປີໄດ້ຈ່າແລ້ວ  ແຕ່ວ່າຂ້ານ້ອຍກໍຢາກ ເລືອກຢູ່ແດ່  ແບບສອງຟາກຂ້າງເປັ່ນປຸ່ມໝາກບອກລອຍນັ້ນ  ກະ ບໍ່ກ້າຕ້ອງປານໃດລະ  ຂ້ານ້ອຍກໍບໍ່ໄດ້ວ່າຊິເອົາລູກເຈົ້າຮ່າງຕ່າງມີ ດອກ  ແຕ່ວ່າກະໃຫ້ມັນພໍສົມຄວນແດ່  ຫາແລ້ວກະຫາຢູ່  ຜົນແລ້ວ ໝາວ—ໝາວແລ້ວແລ້ງ—ແລ້ງແລ້ວຜົນຢູ່ນີ້ລະ  ອີຫຍັງກະຍັງບໍ່ເປັ່ນ ຫຍັງເທື່ອ  ຄືວ່າ ອັນ *ຜູ້ສາວແຖວພຸ້ນ.* ພວກທະຫານລາງຄົນ ມັນວ່າ  *ຫລຽວເບິ່ງຕີນໂລດປານຕີນຣົດຊາ (ຫຸ້ນ*

*ເກາະ) ຫລຽວເບິ່ງໜ້າປານໜ້າຣົດ ອາ.ແອັມ. (ຣົດຕິດປືນກົນ) ຊ້ຳບໍ່ໜຳລັມບໍ່ມີດາວ ເພິ່ນຣອດບໍ່ຢາກໃຫ້ກິນນ້ຳຣ່ວມບວຍຊ້ຳ* ຖ້າຄອງເອົາໝັ້ນເທາະ ຊາດນີ້ນ້ອງສາວເອີ້ຍ !

ເອີ້ ! ມີເທື່ອນຶ່ງ ຂ້ານ້ອຍເກືອບໄດ້ເມັຽແລ້ວຕອ່າ ເທື່ອນັ້ນ ເມັຽຢ່າງດີຊ້ຳຕອ່າ ນ້ອງເມັຽກອມມັງດັງເຈົ້ານາຍຂ້ານ້ອຍພຸ້ນຕອ່າ ວ່າແລ້ວກະຍ່ຳໃຫ້ເບີ້ນບາບເທາະ ຊາທຸ ! ບໍ່ແມ່ນວ່າເອົ້າຂວັນເພິ່ນດອກ ແຕ່ວ່າມັນກ່ຽວຂ້ອງກັນກະຈັ້ງໄດ້ເອົ້າ ມື້ທຳອິດຂ້ານ້ອຍເຫັນຍາເອື້ອຍ (ເມັຽກອມມັງດັງ) ເພິ່ນກັບມາແຕ່ໄປຢາມບ້ານເພິ່ນຢູ່ທາງໃຕ້ພຸ້ນລະ ມີສາວອັນນຶ່ງມານຳ

ງາມກໍ່ງາມເຕີບຢູ່ດອກ ແຕ່ວ່າຫູຕາ ອຸ໋ຍເອົ້າແລ້ວຂົນຄິງລຸກ ແມ່ຍິງແນວໃດກໍ່ບໍ່ຮູ້ ຫລຽວເບິ່ງຂ້ານ້ອຍເທື່ອໃດເກືອບລືມຄິງໄປພຸ້ນລະ ແທ່ງເບີ້ນຫ່າວມາຫລາຍປີ ຈົນບໍ່ກ້າກິນໄຂ່ຍ້ານກຳລັງມັນແຮງໂພດ ແນວໂຕມັນເບັ້ຽນ້ອຍຫອຍນ້ອຍ ໄດ້ຫລາຍມື້ມາຂ້ານ້ອຍກໍອົມອຽມຫາທາງເຂົ້າໃກ້ ຍາແມ່ເພິ່ນກໍ່ລິ້ງກັນດີກັບຂ້ານ້ອຍ ເພິ່ນເອີ້ນໄປລົມນຳ ໂທ້ ! ຕົກໃຈເກືອບຈັ້ງບໍ່ຢູ່ວ່າແມ່ນເພິ່ນຊິເອີ້ນໄປວ່າຫຍັງຊັ້ນດອກ ບາດທ່າແທ້ແລ້ວລະແມ່ນເພິ່ນລົມນຳເຣື່ອງນ້ອງສາວເພິ່ນ ຍາແມ່ເພິ່ນວ່າ

– ອີ່ແສງມັນກະໃຫຍ່ແລ້ວ ແຕ່ວ່າເຮັດຫຍັງເສັຽຫາຍ

ພໍ່ແມ່ເອົາໄວ້ບໍ່ພັ້ງ ເອື້ອຍເລີຍເອົາມາຂມາບລອງເບິ່ງ !

– ໂດຍຂ້ານ້ອຍ ກະຄືເຫັນເລົາຈົບດີຢູ່ !

– ແມ່ນລະແມ້ມັນຍັງໃໝ່ຢູ່ເດ້ ເວົ້າກະຄົນໂຕນໍມັນຊື່ວ ກະຂາຍພ້າເຈົ້າຂອງ ຄັນແມ່ນມີໃຜຢາກໄດ້ຊິແຕ່ງໃຫ້ຊ້ານ່າ ວ່າ ແຕ່ໃຫ້ລ້ຽງເກືອກັນໃຫ້ຕລອດ !

– ໂອ໊ຍ !" ຂ້ານ້ອຍວ່າ "ຍາເອື້ອຍຢ່າເວົ້າຄືຂອງ ເຫລັ້ນຫລາຍ ໃຜ ໆ ມັນກໍຢາກໄດ້ຢູ່ຫັ້ນລະ ມັນຫາກບໍ່ກ້າ !

– ເຈົ້າເດ້ຢາກໄດ້ບໍ່ ?" ຍາເອື້ອຍຍິ້ມພ້າເຂົ້າມາ ຖາມຢ່າງບໍ່ມີອ້ແອ້ ຂ້ານ້ອຍເກືອບເສັຽທ່າ

– ເອື້ອຄ່ວ່າ ຂ້ານ້ອຍບໍ່ຄິດວ່າໂຕເອງຊິມີວາສນາເຖິງ ປານນັ້ນດອກ !

– ບໍ່ ຄັນແມ່ນຜູ້ຊາຍດີ ໆ ຄືເຈົ້າເອື້ອຍຢາກໃຫ້ໄດ້ຢູ່ ແຕ່ວ່າເຈົ້າຊິກ້າເອົາບໍ່ ?

– ອັນກ້າຫັ້ນມັນກ້າຢູ່ດອກ ແຕ່ວ່າ ອຸ໋ຍ ຢ່າໃຫ້ເວົ້າ ດີກວ່າ ບຸນໂຕມັນບໍ່ສົມເພີ້ນດອກ !

– ບໍ່ນ່າ ! ເຈົ້າພັ້ງເອື້ອຍເວົ້າກ່ອນແມ້ ! ມັນມີແມວ ພາໃຫ້ເອົາລະຕິເອື້ອຍຈິ່ງເວົ້ານີ້ ຄັນເອື້ອຍເວົ້າຫຍັງໃຫ້ພັ້ງແລ້ວ ໂຕຊິຮັບຮອງໄດ້ບໍ່ ວ່າຊິບໍ່ປາກໄປປາກມາ ?

– ໂດຍຂ້ານ້ອຍ ຍາເອື້ອຍມີຄວາມລັບຫຍັງເວົ້າໂລດ ຂ້ານ້ອຍບໍ່ປາກໝໍ່ດອກ !

– ຄືວ່າມັນເຮັດຂາຍໜ້າເຊັ່ນໄດ້ ! ແລ້ວດຽວນີ້ຖາມມັນບໍ່ຍອມບອກ ແລ້ວເອື້ອຍສົງໃສວ່າມັນຊິມີລູກນຳແລ້ວ ຄັນແມ່ນເຈົ້າຊິເອົາມັ້ນເອື້ອຍຊິບໍ່ລືມບຸນຄຸນດອກ ;

– ໂດຍຂ້ານ້ອຍ ຊິຄິດວ່າເຫັນແກ່ຍາເອື້ອຍ ຂ້ານ້ອຍຂໍຮັບຮອງວ່າຊິບໍ່ໃຫ້ໃຜຮູ້ນຳ !

– ເອີ້ ! ນີ້ໝາຍຄວາມວ່າເຈົ້າຍິນດີຊ່ອຍເຫລືອຂ້ອຍໝາຍຄວາມວ່າເຈົ້າຊິເອົາກັບອີ່ແສງມັນ ?

– ໂດຍຂ້ານ້ອຍ ຄືວ່າ...!" ຂ້ານ້ອຍບໍ່ທັນໄດ້ເວົ້າຫຍັງຕໍ່ຍາເອື້ອຍເພິ່ນກໍເວົ້າເອົາໝົດ ຂ້ານ້ອຍແຫ່ງເປັນຄົນບໍ່ມັກເວົ້າເພິ່ນວ່າແລ້ວກະເລີຍແລ້ວ ເພິ່ນວ່າໃຫ້ເອົາ ຄັນຊິຄັດຄ້ານເພິ່ນກະບໍ່ທັນມີເມັຽ ຈັກນ່ອຍເພິ່ນຊິຫາວ່າເພິ່ງບໍ່ໄດ້ ຕົກລົງເປັນອັນວ່າຍາເອື້ອຍເພິ່ນຊິໃຫ້ເປັນນ້ອງເຂີຍເພິ່ນ ເອົາລະເປັນກະເປັນຊ່າງເທາະໂບຣານລາວເພິ່ນຍັງວ່າ *"ຕຶກແຫໄດ້ປາໄຂ່ ເອົາເມັຽໃຫມ່ໄດ້ລູກພ້ອມ ບຸນສ້າງແຕ່ຫລັງ"* ກະຍັງວ່າມັ້ນເນ ແຕ່ມາຄຶດອຸກຕອນວ່າ ບາດເອົາກັນບໍ່ພໍຮອດເດືອນຄອງ

ກະຊິອອກລູກກ່ອນນີ້ມາ ຈ້າວ່າແມ່ນລູກຂ້າທີ່....ໃດ ເກີດມາຊິເອີ້ນໂຕເປັນພໍ່ ຊາຕຸ ! ບຸນບາບ ຄັນແມ່ນອອກມາແລ້ວມັນທີ່... ມັນກໍແຄນແດ່ ຂໍຢ່າໃຫ້ເວນນຳກັນໄລ່ເທາະ ວ່າແລ້ວກະດາຍຮັບປາກກັບຍາເອື້ອຍເພິ່ນແລ້ວ ເພິ່ນກະວ່າເພິ່ນຊິຈັດການໃຫ້ໄອອາຟ້າວຟັ້ງລະ ໂຕກະເຫິງດີໃຈເຫິງເສັຽໃຈອຸກອັ້ງຢູ່ພໍຕາຍ

ຄິດບໍ່ເຂົ້າບໍ່ອອກບາດຊິເອົາແທ້ ໆ ໂລດມາຢ້ານໄດ້ເມັຽ ກະຄືວ່ານັ້ນແຫລະພະຍາຍາມຫາຂໍ້ອ້າງທາງດີປານໃດ ມາເອົາອອຍໃຈເຈົ້າຂອງມັນກໍຍັງອົດອຸກອັ້ງໃຈບໍ່ໄດ້ ໂອ້ຍ ! ຢ່າໃຫ້ເອົາເທາະເກີດເປັນລູກຜູ້ຊາຍ ຫ....ແຂນກົ້ນ ຊິສລະໂສດເຫິງເທື່ອກໍມາຖືກຂອງເນົ່າ ໆ ເອົາໂລດ ໃຜຊິບໍ່ຄຶດຍາກ !

ແຕ່ວ່າຫລັງຈາກນັ້ນມາ 4–5 ມື້ ຂ່າວອັນບໍ່ຄຶດຝັນກໍເກີດຂຶ້ນໃນຄ້າຍ

ເຂົາເວົ້າກັນວ່າ ສາວແສງໂຕນນຳຍາມັງສຸກໄປແລ້ວ ຍາມັງສຸກບັງຄັບກອງຮ້ອຍຢູ່ທາງແນວໜ້າພຸ້ນ ແຕ່ວ່າເພິ່ນກໍຢາກໄດ້ເມັຽຄືກັນ ຂ້ານ້ອຍໂລ່ງໃຈອະບາດນຶ່ງ ແຕ່ເມື່ອພໍ້ກັນກັບຍາເອື້ອຍກໍທຳທ່າເສັຽໃຈແດ່ ຍາເອື້ອຍອອຍໃຈວ່າ

– ບໍ່ເປັນຫຍັງດອກ ນ້ອງສາວເອື້ອຍດີ ໆ ກວ່ານີ້ກະຍັງມີ ເມື່ອເທື່ອໜ້າຊິພາມາໃຫ້ເບິ່ງ

– ໂດຍຂ້ານ້ອຍ ຂ້ານ້ອຍບໍ່ເສັຽໃຈດອກ ຄືວ່ານັ້ນລະ ບຸນວາສນາຊາຕາຊ່ຳຈ່າ ມັນບໍ່ສົມເພິ່ນດອກ !

– ຣຶ ! ຢ່າພໍ່າວຄິດນ້ອຍໃຈ ເຮົາສ່ອງອະນາຄົດບໍ່ ຊອດຈັກຄົນດອກ ບາບໃຜບຸນມັນ ແຕ່ເອື້ອຍ ໆ ກໍຍັງບໍ່ແນ່ໃຈ ບ້ານເສິກເມືອງເສືອແນວນີ້ ເທື່ອເພິ່ນລົ້ມຫາຍຕາຍຈາກໄປມື້ນຶ່ງ ເອື້ອຍອາດຊິຕ່ຳກວ່າກໍໄດ້

ຍາເອື້ອຍເພິ່ນເວົ້າຍິ້ມແຍ້ມແຈ່ມໃສ ສາຍຕາວາວ ວາບ ໆ ຈົນຂ້ານ້ອຍໃຈບໍ່ຢູ່ກັບເນື້ອກັບໂຕ ຄວາມຈິງແລ້ວເພິ່ນ ກໍຄືຊິເວົ້າໄປຊັ້ນລະຄວາມມັນຫລົ່ນປາກ ແຕ່ວ່າສັນດານບໍ່ດີຂອງ ໂຕຕີລະ ເສືອກເກັບເອົາມາຄິດ ຈົນຝັນວ່າມີອີຫຍັງ ໆ ກັບເພິ່ນ ຕັ້ງຫລາຍເທື່ອ ມາລອງຄິດເບິ່ງອີກເທື່ອ ມັນຄືຊິເປັນໄປບໍ່ໄດ້ດອກ ເພາະຄິດເບິ່ງແຕ່ຂນາດນ້ອງສາວເພິ່ນ ບໍ່ຈັກໃຫ້ເຂົາຫລິ້ນມາແຕ່ ໃສ ເພິ່ນກໍຍັງບໍ່ຢາກໄດ້ຈ່າຄືໂຕນີ້ ຂນາດປາໄຂ່ເພິ່ນຍັງຄວ້າຂັ້ນ ດາວນຶ່ງ ຈ່າຊ່ຳໂຕມັນຊິໄດ້ຊ່ຳໃດ ?

ເຫັນພວກຈ່າທາງວຽງຈັນເຂົາພາກັນຈົ່ມວ່າ “ຊິ *ວ່າຫຍັງແຕ່ເຣື່ອງຫາລູກຫາເມັຽດີ ໆ ຊັ້ນຊ່ຳຈ່າ ແມ່ນແຕ່ຊິຫາທາງເປັນແນງດາ ມັນກໍຍັງເປັນບໍ່ໄດ້ ນ່າ ລູ້ມື້ນີ້ນ່າ !!!”*

# ລືມເຂົາ-ເຂົາລືມ

● ຫາວ່າ ຜີບໍ່ພ້ອມ ເທພບໍ່ຊ່ອຍອາຣັກ
ຊາດທີ່ ແນວຄົນລວງ ຫລອກປະຊາຕາເຊື້
ຕົວະອ່ອຍ ອອຍພໍໄດ້ ດະແມນສຽງແຕ່ຍາມເລືອກ
ກາຍຣະ–ດູເລືອກຕັ້ງ ເຍັ້ນຈ້ອຍລາບລີງ

● ຮອດຊູດ ໜ້າບໍ່ໄດ້ ເຈົ້າຢ່າຈົ່ມເສັຽດາຍ
ຢ່າຄິດ ຊັງຕຽນຕິ ວ່າບໍ່ດູຕົນເຈົ້າ
ທ່ານລືມເຂົາ ມາຫລາຍພໍ້າ ຈອນຍາມຈິ່ງຮ້ອງຂ່າວ
ເຂົາກໍ່ ລືມທ່ານໄດ້ ໃນມື້ອອກສຽງ ແທ້ແລ້ວ

– ໂດຍ ປາໄມ –

24/VII
ห้ามจำหน่าย

# ກິນເມົາ--ຣັກ

★ *ໂດຍ....ທົ່ງອູປມຸງ* ★

⁕ ... ແສງເງິນມາບມາເຫັນເຮົາຢືນເກາະປະຕູຢູ່ ຍັງທຳທ່າບໍ່ຮູ້ຈັກເຮົາອີກ.... ແສງເງິນຈິບໍ່ຮມ ໄປຫລາຍປານນີ້ພຸ້ນບໍ ?

*ອັນຄວາມຮັກຂອງເຮົາ ທີ່ຍົກມອບໃຫ້ນາງຫັ້ນ ຄັນຈິເອົາໄປແລ້ວມັນຫລາຍຈົນພັນລະນານັບບໍ່ໄດ້ພຸ້ນລະ* ຄວາມຮັກອັນນີ້ມັນເລີດລ້ຳ ຫອມ ຫວານ ນົວ ມັນ ແບບຈົດລົງເບັ້ນລາຍລັກອັກສອນບໍ່ໄດ້ຖນັດດີ ຄວາມຮັກຂອງເຮົາທີ່ມີຕໍ່ນາງ ສ້າງຂຶ້ນບໍ່ໄດ້ດ້ວຍເຄື່ອງຈັກຈະນິດໃດ ໆ ພົດເຖິງແມ່ນຈິຫັນສມັຍປານໃດກໍຕາມ ເພາະມັນສ້າງຂຶ້ນດ້ວຍຫົວຈິດຫົວໃຈຂອງເຮົາແລະຂອງນາງ ສ້າງຂຶ້ນດ້ວຍນ້ຳຈິດນ້ຳໃຈຊຶ່ງໃຜ ໆ ກະຫລຽວບໍ່ເຫັນ ແຕ່ຮູ້ເຖິງຄຸນຄ່າຂອງມັນວ່າສຳຄັນພຽງໃດ ຄວາມຮັກຂອງພວກເຮົາຖືກສ້າງຂຶ້ນດ້ວຍຄວາມພຽນຂອງສອງຄົນ...ສອງຄົນທີ່ເຂົ້າອົກເຂົ້າໃຈກັນດີ ສອງຄົນທີ່ຮ່ວມຫົວຈົນທ້າຍນຳກັນແທ້ໆ ສອງຄົນເຮົາຮ່ວມກັນແທ້ ໆ ບໍ່ແມ່ນເຫັນຜູ້ນຶ່ງຍົກມືແລ້ວຍົກມືນຳຕາມອາດຊີ່ ໆ ຄວາມຮັກຂອງພວກເຮົາຖືກສ້າງຂຶ້ນມາໄດ້ຫລາຍປີແລ້ວ ມັນກໍຂຶ້ນມານ້ອຍ ໆ ຄືໂຕປວກກໍ່ຮັງຂອງມັນ ມັນກໍ່ໃຫຍ່ຂຶ້ນ....ໃຫຍ່ຂຶ້ນ ຈົນຜົນສຸດທ້າຍມັນກໍໄດ້ໂພນພ່ອຍບັກໃຫຍ່ພ່ອຍນຶ່ງຊຶ່ງທົນທານຕໍ່ດິນຟ້າອາກາດ ລົມພາຍຸທຸກສິ່ງທຸກຢ່າງທີ່ເບັ້ນພັຍຕໍ່ມັນ ຄວາມຮັກຂອງພວກເຮົາປຽບແລ້ວກໍຄືຮັງປວກ ແລະພວກເຮົາສອງຄົນບ່າວສາວຄືໂຕປວກ ພວກເຮົາກໍ່ຮັງຮັກຕັ້ງແຕ່ປີ ໑໙໖໕ ເຮົາພົ້ນາງຕອນເລີກຫລິ້ນຢູ່ໂຮງຮຽນ ລູກສິດລຽນແຖວ

ຍາດເຂົ້າຊື້ຂອງກິນກັນມະນຶງມະນຶດ  ເຮົາແຫຍ້ ໆ ເຂົ້າໄປໃກ້ຈະໄດ້ຊື້ກິນແລ້ວ  ພໍດີຮູ້ສຶກມີຄົນຍູ້ ໆ ຢູ່ທາງຫລັງຕລອດ  ຄືຈັ່ງຍ້ຳນຫຍັງກິນຈະໝົດກ່ອນນີ້ລະ   ແຫຍ້ ໆ ຢູ່ຈັ່ງຊັ້ນຄົນເຕີບຈົນຮູ້ສຶກໃຈຮ້າຍ ເຮົາງອາກໜ້າກັບຄືນ  ວ່າຊິເອົາໃຫ້ເຈັບ ໆ ຊະຊັ້ນດອກແມ່ນໃຜກະດາຍ  ຫລຽວເຫັນໜ້າສາວນ້ອຍຕາຫວານ ໆ ສາແລ້ວໂລດປາກບໍ່ອອກພໍຄວາມ  ອາຍຸນາງຕ້ອງບໍ່ເກີນສິບຫ້າຄືຊິຢູ່ຫ້ອງ "*ແຊງຄ໌*" ຫລື "*ກາຕຣ໌*" ນີ້ລະເຮົາຄິດ  ຄວາມຈິງເຮົາກະເຄີຍຮັກສາວມາຫລາຍຄົນແລ້ວ  ແຮກຕັ້ງແຕ່ຢູ່ "*ກາຕຣຽມ*" ພຸ້ນລະ  ແຕ່ບໍ່ມີຕລອດປອດພັຍຈັກລາຍ   ຈົນດຽວນີ້ເຮົາຢູ່ "*ປເຣີມີແອຣ໌ ລີເຊ*" ແລ້ວ  ເຫັນສາວຄົນນີ້ຄືເປັນຕາຕິດອົກຕິດໃຈເອົາແທ້ ໆ ຄືບໍ່ເຄີຍເຫັນຈັກເທື່ອຄົງຫາກໍ່ເສັງເຂົ້າໃໝ່ປີນີ້  ນາງຍິ້ມອາຍ ໆ ເມື່ອເຫັນເຮົາຫລຽວເບິ່ງໜ້າ  ເຮົາກະເລີຍຕິຖາມ

"ຊິຊື້ຫຍັງກິນເນາະນີ້ເຈົ້າ ?"

"ເຂົ້າຈີ່ໃສ່ຢໍດອກຕິເບາະ"

ນາງເວົ້າສິອາຍ ໆ

ໄດ້ຂອງກິນແລ້ວ ເຮົາກະເລີຍນຳເວົ້ານຳລົມກັບນາງເພາະເກັນທ່າວ່ານາງບໍ່ມີຄົນມະ ຢືນຈຸ້ມຢູ່ຄືພວກອື່ນ.

"ເຈົ້າຄືບໍ່ເຫັນມີໝູ່ພວກເທີ່ໝຸ້ນເທີ້ໝີ້ຄືພວກອື່ນເນາະ?

ເຮົາອົດຖາມບໍ່ໄດ້ເພາະມັນຕ່າງຫັນດາອີ່ຫລີ

"ຂ້ອຍເວົ້າຝຣັ່ງບໍ່ເກັ່ງປານໃດ ຄຸຍນຳເຂົາແລ້ວພ້າອາຍນະ ເວົ້າຜິດເວົ້າຖືກ"

*ກະຂອງແມ່ມລະຕິ ມາງຢູ່ "ມ. ໔ ແອມ. ອີ" ມີແຕ່ແກວກັບລູກເຈົ້ານາຍລາວເຂົາຈຶ່ງຮູ້ຈັກເວົ້າຄວາມລາວກັນຈັກເທື່ອ ຫລືຮູ້ເຂົາກະບໍ່ເວົ້າດອກມັນເສັຽປ່ຽບ ຮອດໂມງລາວກະລັກໜີໄປຫລິ້ນຈ້ຳ ບໍ່ເຫັນຖືກໂຫດຈັກເທື່ອໃດລະ !*

ນາງເບີ່ນໄທເພື່ອມາຢູ່ເຮືອນນຳລຸງ ພໍ່ກັບແມ່ກະຢູ່ດິນບ່ອນແມວລາວປົດບ່ອຍພຸ້ນ ຕິດຕໍ່ກັນບໍ່ໄດ້ເລີຍຈັກເບີ່ນຈັກຕາຍກະບໍ່ຮູ້ ມາຢູ່ນຳລຸງນາງກໍ່ອົບອຸ່ນດີພໍໃຊ້ ການສຶກສາເພິ່ນກະໃຫ້ເຕັມເມັດເຕັມໜ່ວຍ ຍາມບໍ່ມີວຽກກະເຮັດນັ້ນເຮັດນີ້ຊ່ອຍເພິ່ນຕາມແຕ່ແຮງມີ ເພິ່ນກະຮັກເອົາແທ້ເອົາວ່າ....ວ່າຊັ້ນ ເພາະເພິ່ນມີລູກແຕ່ສອງຄົນ ຊາຍນ້ອຍທັງສອງ ແຕ່ເຮົາໄປຫລິ້ນເຮືອນນາງຍາມໃດເຫັນຄົນເຕັມບ້ານ ເຮືອນກະຫລັງບັກໃຫຍ່ຖາມໄດ້ຄວາມວ່າພີ່ນ້ອງໃກ້ທັງໝົດຫັ້ນແຫລະ ເພິ່ນເອົາມາລ້ຽງເອົາບຸນເອົາຄຸນ ເຮົາກະເລີຍອົດສັນຣະເສີນນ້ຳໃຈລຸງນາງບໍ່ໄດ້ ເພິ່ນຄືຈະເປັ່ນຄົນມີໃຈບຸນສຸນທານ ມີເມດຕາຈິດເຜື່ອແຜ່ຄົນເອົາແທ້ເອົາວ່ານໍ ແຕ່ເພິ່ນ

ຄົງຈະຕ້ອງເຮັດວຽກໜັກຂນາດແຫລະ ເຮົາຄິດ ຊົ່ວຊິລ້ຽງຄົນຕັ້ງຊາວ–ສາມສິບກຸ້ມ !

ຕໍ່ມາຈຶ່ງຮູ້ວ່ານາງຊື່ແສງເງິນ ຮູບຮ່າງໜ້າຕາກະແບບຄົນລາວຮ້ອຍເປີເຊັນ ຄື ບໍ່ສູງບໍ່ຕ່ຳແລະບໍ່ອ່າວຈ່ອຍແບບນາງເອກຊິເນ ແຕ່ອ້ວນໜ້ອຍ ໜ້າຕາເປັ່ນຕາຮັກ ຜິວຂາວແບບສາວໄທເໜືອ ແຕ່ຕານາງຄົນຊິເວົ້າແບບສົມນິຍົມກະຄົມແບບບາດໃຈຊາຍ ແລະເຮົາກະສນັບສນຸນຄຳນີ້ຢ່າງເຕັມໃຈເລີຍ ເພາະຕານາງໄດ້ບາດໃຈເຮົາເຂົ້າໄປແລ້ວຕັ້ງເຄິ່ງໝາກຫົວໃຈ ຊ້ຳບໍ່ພໍຕາສອງໜ່ອຍນັ້ນຍັງຝັ້ງຢູ່ໃນຫັ້ນອີກຊ້ຳ ຄັນແມ່ນລູກປືນປານນີ້ເຮົາກະຄືຊິໄດ້ຂໍຮ້ອງດອກເຕີຣ໌ "ບາຣ໌ນາຣດ໌" ໃຫ້ບ່ຽນຫົວໃຈໃໝ່ໃຫ້ເຮົາແລ້ວແຫລະ

ອັນທີ່ຈິງ ແສງເງິນກັບເຮົານີ້ສົມກັນປານດິນກັບຟ້າເອົາໂລດ ຄັນຊິປູກດອກຮັກດອກຫຍັງກະຊ່າງເທາະ ມິແຕ່ດິນບໍ່ຫົດຟ້າ ເຊົາມັນຊິເກີດໃຫ້....ກະຄິດເບິ່ງ ບ້ານແສງເງິນຢູ່ຄຸ້ມໜອງດ້ວງບ້ານເຮົາຢູ່ອູບມຸງທັ້ງຍ່າງລັດໄວ່ ໆ ບຶດດຽວກໍຮອດແລ້ວ ຖາ-ມະນາງກະບໍ່ແມ່ນວ່າສູງຈົນຊິ "ເອື້ອມບໍ່ເຖິງ" ຄືສິລາວົງ ພໍ່ວ່າຄວາມຫລັກຄວາມຮູ້ກະພໍພັ້ດພໍທ່ຽງກັນ ຄັນເອົາກັນຊ່ອຍກັນຫ້ອມຊ່ອຍກັນຫອມ ໂພດແຕ່ມັນຊິເຫລືອກິນພຸ້ນແລ້ວ ຕັ້ງແຕ່ເກີດມາເຮົາກະບໍ່ເຄີຍວ່າຊິຫລົງຮັກຫລົງມັກໃຜປານນີ້ຈັກເທື່ອ ກິນເຂົ້າ

ຄາບໃດມີຖ້ອຍແກງນ້ຳໃສ ໆ ມັນໂລດເຫັນເປັນໜ້າແສງເງິນເອົາ
ໂລດ...ຮຽນໜັງສືໜັງຫາກະບຸກ ບັນພັນຜ່າເອົາແທ້ເອົາວ່າ ຍ້ານ
ບາດທ່າແສງເງິນຖາມບໍ່ໄດ້ຊິໜ້າອາຍລາວ ເງິນທອງເສດເລັກເຫລືອ
ນ້ອຍເຮົາກະອົດສາຫ້ອມທອມໄວ້ ບໍ່ເອົາໄປໃຊ້ໄປຈ່າຍໃສ ຄິດວ່າ
ຖ້າແສງເງິນຈຳເປັນຕ້ອງໃຊ້ເງິນຈຳນວນນີ້ງຂຶ້ນມາຈັ່ງຊີ້ ເຮົາກະຊິ
ໄດ້ສະແດງນ້ຳໃຈໃຫ້ແສງເງິນເຫັນໂລດວ່າ ເຮົາຮັກນາງພຽງໃດ....
ຫລືບໍ່ຊັ້ນ ດັ່ນນີ້ໃດໂອກາດມັນດີເອົາແທ້ເອົາວ່າຈັ່ງນີ້ເສັງໄດ້ຈັ່ງ
ຊີ້ກະຊິຖືໂອກາດຊວນນາງໄປເບິ່ງຊິເນກິນນ້ຳຫວານ ຄວງແສງ
ເງິນເຍີຍໄຫວຽງຈັນໃຫ້ສົມໃຈເບິ່ງ ທີ່ຈິງເຮົາກະເຄີຍຊວນນາງໄປ
ຫລິ້ນຈັ່ງຊັ້ນຫລາຍເທື່ອ ແຕ່ຖືກນາງປະຕິເສດແບບນຸ້ມນວນວ່າ....
"ເຮົາຍັງເປັນເດັກນ້ອຍຫາເງິນເອງກະຍັງບໍ່ເປັນເທື່ອ ອາໄສເງິນພໍ່-
ແມ່ກິນຢູ່ສູ່ມື້ເພີ່ມກະຍາກນຳເຮົາພໍ່ແຮງແລ້ວ ຍັງຊິຫາເຣື່ອງຈ່າຍ
ພິເສດໃຫ້ເພີ່ມອີກລ້າ ໆ ດີບໍ່ດີດັ່ນທ່ຽວເລື້ອຍຊິຕິດທ່ຽວຊ້າ ແຮ່ງ
ໄປໃຫຍ່...." ເຮົາກະເລີຍປາກບໍ່ອອກ

ຄວາມຮັກຣະຫວ່າງເຮົາກັບແສງເງິນຮາບຮຽບແລ່ນ
ລື້ວໄປນຳແຮງດຶງແກ່ຂອງວັນເວລາມາຕາມຣະບຽບ ດັ່ນປຽບໃສ່
ຣົດກະແມ່ນຣົດທີ່ແລ່ນຢູ່ເທິງຖນົນໄຮດ໌ເວຍ໌ຊັ້ນດີ ຊຶ່ງຊົນຊາວລາວ
ເຮົາທັງຫລາຍໄຝ່ຝັນຫາ ຢາກເຫັນພຸ້ນລະເພາະຜາກົດວ່າເຮົາກັບແສງ

ເງິນບໍ່ເຄີຍມີປາກມີສຽງກັນຈັກເທື່ອ ເຮົາຜິດເລັກນາງກະອະພັຍໃຫ້ ແສງເງິນຜິດນ້ອຍເຮົາກະອະພັຍໃຫ້ ມີໜ້ອຍກະກິນໜ້ອຍນຳກັນ ນາງມີເຣື່ອງຮ້ອນຫຍັງກະຮ້ອງຫາເຮົາໂລດ ຈົນວ່ານາງກັບເຮົາເຊື່ອໃຈກັນປານຄົນຜູ້ດຽວກັນ ແລະຜູ້ອື່ນພີ່ນ້ອງໂຄດເຊື້ອວົງສາກະຮູ້ຈັກເຂົ້າອົກເຂົ້າໃຈພວກເຮົາດີ ແລະສນັບສນູນພວກເຮົາອີກຊ້ຳ ເພາະວ່າເວົ້າແລ້ວກະເວົ້າອີກເທາະວ່າ ຄວາມຮັກຂອງພວກເຮົາບໍ່ໄດ້ເຮັດໃຫ້ເຮົາເສັຽຫາຍຫຍັງ ມັນບໍ່ທຳລາຍການຮຽນ ຫລືເວລາທຳມາຫາກິນ ແຕ່ມັນຊ່ອຍສ້າງກຳລັງໃຈໃຫ້ໝັ້ນໜຽວຂຶ້ນຫລາຍຕໍ່ ຄວາມຮັກຂອງພວກເຮົາເຮັດໃຫ້ໂລກເບັ່ນຕາຢູ່ຂຶ້ນອີກເບິ່ງຕົ້ນໄມ້ໃບຫຍ້າກະຄືຈັ່ງຍິ້ມເບັ່ນໝົດນີ້ລະ ແຕ່ວ່າພວກເຮົາກໍ່ກ້າສາບານຕໍ່ໜ້າທຸກຄົນໄດ້ເລີຍວ່າ ພວກເຮົາບໍ່ເຄີຍລ່ວງເກີນຫຍັງກັນເລີຍ....

ທ້າຍປີແສງເງິນເສັງໄດ້ ພວກເຮົາສລອງຊັຍຊນະດ້ວຍການໄປເບິ່ງຊີເນມາກັນນຶ່ງຮອບ ພັກໂຮງຮຽນພວກເຮົາໄປຫາເຮັດການ ຫ້ອມເງິນຝາກພໍ່ຝາກແມ່ໄວ້ ຕອນນີ້ພວກເຮົາຕັ້ງຕົ້ນໝັ້ນກັນແລ້ວວ່າ ຖ້າອາຍຸຫລາຍຂຶ້ນເງິນກະພຽງພໍພວກເຮົາຊິຈັດການກັບຊີວິດແບບໃດ ແຕ່ເບິ່ງຊົງມັນຍັງອີກດົນ ພວນເຮົາກະເລີຍເຮັດເບັ້ນເວົ້າຫລິ້ນແກມອີຫລີໄປແດ່

ເຂົ້າໂຮງຮຽນປີໃໝ່ຈຶ່ງເຮົາກະຢູ່ຫ້ອງສູງສຸດໃນໂຮງຮຽນແລ້ວ ຄົນຈົບກະມີແຕ່ຈິໄປຕໍ່ຕ່າງປະເທດຫລືອອກໄປຫາເຮັດການ ຄວາມຄຶດຄວາມຫວັງຂອງເຮົາກໍ່ບໍ່ຕ່ຳບໍ່ຕ້ອຍ ພໍພຽງແຕ່ຈິຄຶດອອກຈາກໂຮງຮຽນໄປຫາເຮັດການກິນ ຄົນເຮັດແບບນັ້ນກະມີຫວັງຫາທ້າຍເດືອນກິນຕົ້ນເດືອນຄັກໆ ແຕ່ເຮົາກະຮູ້ຄວາມສາມາດຂອງມັນສມອງຂອງເຮົາ ເຮົາຮູ້ວ່າສມອງເຮົາບໍ່ໃສພໍຈິໄປຮຽນຕໍ່ເປັ່ນທ່ານໝໍຫລືອະທິບໍດີຫລືຜູ້ແທນຣາສດອນ ຫລືໃຜກະແລ້ວແຕ່ທີ່ຊັ້ນໃຫຍ່ໆ ຄວາມຮູ້ສູງໆ ເຮົາຮູ້ໂຕເຮົາເອງດີວ່າເຮົາໄປບໍ່ເຖິງຂັ້ນນັ້ນແຕ່ເຮົາບໍ່ທໍ້ຖອຍ ເຮົາກະເລີຍໄປປຶກສາແສງເງິນ ພວກເຮົາຕົກລົງກັນແບບທີ່ເຫັນວ່າດີທີ່ສຸດ ຄືເຮົາຈິໄປຫາເຮັດການແຕ່ທີ່ມີທາງກ້າວໜ້າ ຄືອາດຈິໄດ້ໄປຝຶກຝົນຕໍ່ຕ່າງປະເທດ ໄດ້ໄປຂນາດປະເທດໄທກະຍັງດີ ພວກເຮົາຄຶດ

ຄວາມຫວັງພວກເຮົາສົມຫວັງ...ເຮົາອອກຮຽນສມັກເຂົ້າເຮັດການກົມ........ ແລ້ວເຍື້ອນຖ້າຈົນກວ່າຈິໄດ້ໄປສຶກສາງານຢູ່ເມືອງໄທ ແລະເວລາຮຽນກະໄດ້ກິນເງິນອ່າວສູງພ້ອມ ສ່ວນແສງເງິນຮຽນຕໍ່ ນາງຈິຮຽນຈົນສຸດຄວາມສາມາດພຸ້ນລະ

ຮອດທ້າຍປີໃໝ່ໃຜໆກະວ່າເຮົາໂຊກດີ ເພາະເຮົາຈິໄດ້ໄປຝຶກຝົນງານຢູ່ປະເທດໄທເປັ່ນເວລາຫົກເດືອນ ແຕ່ໃຈເຮົາ

ເອງແລ້ວມັນເປັ້ນປຸບ ໆ ປັ້ບ ໆ ຈັ່ງໃດກະບໍ່ຮູ້ ຄືມີລາງສັງຫອນແນວບໍ່ດີນີ້ລະ ແຕ່ເຮົາກະດີໃຈເພາະການງານເຮົາກຳລັງກ້າວໜ້າ ເວົ້າກະເວົ້າເທາະ...ແສງເງິນກັບເຮົາຮັກກັນນີ້ມັນຮັກຫລາຍ ຮັກແທ້ອີ່ຫລີ ຊິຮ້ອງເປັ້ນຮັກອັມຕະຫລືຮັກດົງຟ້າດົງດິນກະໄດ້ ພວກເຮົາຮັກກັນແບບເອົາຄວາມຮູ້ຄວາມສລາດ ເອົາຊີວິດຈິດໃຈ ເອົາຂັນຍາກາດສິ່ງແວດລ້ອມ ປົນກັນເຂົ້າໝົດແລ້ວ ຄ່ອຍເລືອກເອົາອັນດີອອກມາວ່າຊັ້ນເທາະ....ໃຫ້ມີເທວະດາໂຕຂຽວ ໆ ອູ້ມເອົາແສງເງິນກັບຊາຍຜູ້ໃດຜູ້ນຶ່ງມາວາງລົງຕໍ່ໜ້າເຮົາແລ້ວບອກວ່າ ຄູ່ນີ້ເຂົາຫາກໍ່ແຕ່ງດອງກັນມາທີແລ້ວນີ້ຫັ້ນ ເຮົາເຊື່ອວ່າເຮົາຕ້ອງບໍ່ເຊື່ອຄັກ ໆ ຄຶດເບິ່ງວ່າເຮົາເຊື່ອແສງເງິນ ເຊື່ອໂຕເຮົາເອງ ເຊື່ອຄວາມຮັກຣະ-ຫວ່າງແສງເງິນກັບເຮົາ ເຊື່ອທຸກສິ່ງທຸກຢ່າງ ແຕ່ປານນັ້ນເຮົາກະມີລາງສັງຫອນ....ຄວາມຮັກມັນຊິເຂົ້າໃຈຍາກປານນີ້ພຸ້ນບໍ....?

ເຮົາຈາກແສງເງິນມາຮອດບ່ອນຝຶກງານ ເຮົາກະຟ້າວຂຽນຈົດໝາຍສົ່ງຂ່າວນາງໂລດ....ນາງກະຕອບເຮົາທັນໃຈ ບໍ່ໃຫ້ເຮົາໄດ້ຖ້າທໍຣະມານຈັກດີ້ ພວກເຮົາຂຽນຈົດໝາຍສົ່ງຫາກັນຢູ່ຈັ້ງຊັ້ນຈົນໃກ້ຊິຮອດຕອນເຮົາຊິຕ່າວ

ຄືນນັ້ນຝົນຕົກແຮງຕລອດຄືນ ຕື່ນເຊົ້າຂຶ້ນເຜືອກະຍັງມືດຄຶ້ມຕລອດດິກ ສຽງຟ້າຮ້ອງກະມີຕລອດເວລາ ອັນນີ້ບໍ່ແມ່ນ

ລາງຮ້າຍບອກການແຕກສລາຍຂອງຄວາມຮັກຣະຫວ່າງເຮົາກັບແສງເງິນດອກ ແຕ່ຍ້ອນມັນເປັນເດືອນແປດ–ເດືອນເກົ້າ ຣະດູຝົນບ້ານເຮົາຝົນຕົກຕລອດເວລາ ແລ້ວກະແມ່ນຍາມລູກສິດຕຽມເສັງທ້າຍປີກ່ອນພັກປະຈຳປີອີກ ຍ້ອນເຫດນີ້ລະແສງເງິນເລີຍຂຽນບອກເຮົາວ່າ ຊິຕຽມເນື້ອຕຽມໂຕເສັງ ໃຫ້ເຮົາງົດຂຽນຈົດໝາຍຫານາງກ່ອນ ເສັງແລ້ວຄ່ອຍຕິດຕໍ່ກັນໃໝ່ ພໍເຮົາຮູ້ວ່າບໍ່ໄດ້ຮັບຈົດໝາຍຈາກແສງເງິນ ເຮົາກະເລີຍນັ່ງເບິ່ງຟ້າເບິ່ງດວງຈັນ ລາງເທື່ອຊິເຫັນໜ້ານາງ ແຕ່ຍ້ອນເປັນຍາມຝົນ ເຮົາກະເລີຍຕ້ອງນັ່ງເບິ່ງຂະເຝື້ອກັບສາຍນ້ຳແມ່ນແທນ.

ທິດນັ້ນເຮົາຖືກສົ່ງກັບຕ່າວຄືນເມືອງລາວພໍດີເຮົາຄິດຢາກຂຽນຈົດໝາຍບອກແສງເງິນໃຫ້ມາຮັບຢູ່ທ່າເດື່ອເກືອບຕາຍ ແຕ່ຍ້ານມັນຍາກນາງເຮົາກະເລີຍບໍ່ເຮັດ ອີກຢ່າງນຶ່ງເຮົາກະຢາກເຮັດກັນຫລອນຈົ໊ະເອ່ນາງນຳ ເມືອຮອດບ້ານຄືນນັ້ນເປັນຕອນເດິກເຮົາກະເລີຍຫລັບປານຕາຍ ຄິດວ່າຕື່ນເຊົ້າຈັ່ງໃດກະຊິເອົາຂອງໄປຕ້ອນແສງເງິນໃຫ້ໄດ້ ແຕ່ຮອດຄາວຊວຍແດ່ ຍ້ອນເຮົາເມື່ອຍແດ່ ເຮົາຕື່ນຂຶ້ນກະເກືອບສິບໂມງແລ້ວ ພໍມຸ່ງເຄື່ອງແລ້ວບໍ່ແລ້ວຄັກເທື່ອ ໝູ່ມັກເສືອກສອງສາມຄົນມາແຕ່ທາງໃດບໍ່ຮູ້ ມາດຶງເຮົາໄປກິນເຫລົ້າເຮືອນດອງ ເຂົາວ່າຊັ້ນ ທຳອິດເຮົາຄັດຄ້ານ ແຕ່ເຫັນໝູ່ທຳທ່າຄຽດ

ເຮົາກະເລີຍຈຳໃຈ ຕອນນັ້ນເຮົາຄິດຮອດແສງເງິນໃຈເກືອບຂາດ

ຮອດເຮືອນດອງ......ກ່ອນອື່ນເຮົາຖືກບັງຄັບໃຫ້ກິນ ເຫລົ້າ ຍ້ອນບໍ່ເຄີຍເຮົາກະເລີຍຂັດຂືນ ໝູ່ດ່າເອົາຊ໊ະ...ເຂົາວ່າມັນມີ ມື້ບຸນ ກິນຊິເປັ່ນຫຍັງ ເຮົາອົດສາຫລັບຕາຖອກເຫລົ້າເຂົ້າປາກ ໃນ ໃຈຄິດວ່າ "ມັນມີຂາບແລະເຮືອນນີ້ກະເຮືອນຂາບຄັກໆ" ກິນຈອກທຳ ອິດທັງຮຶມທັງຮ້ອນຄໍຈົນຢາກຈົກຄໍຮາກ ພໍຈອກທີ່ສອງກິ່ນເຫລົ້າກໍ ຄືບໍ່ເໝັນປານໃດ ຈອກທີ່ສາມທີ່ສີ່ ທີ່....ຈຶ່ງຮູ້ຈັກຄວາມແຊບຂອງ ເຫລົ້າ ຕອນນັ້ນຄວາມຂົມຫລົ້ມຂອງເຮົາໝົດໄປ ຄວາມຄິດຮອດ ແສງເງິນກະບໍ່ມີຢູ່ໃນຫົວໃຈອີກແລ້ວ ເຮົາຄຸຍເຮົາໂມ້ກັບໝົດທຸກ ຄົນ ຫາກໍ່ໄດ້ເຫັນໜ້າຫ້ານາທີກະເປັ່ນສ່ຽວກັນໄປໝົດ

ສູ່ຂວັນແລ້ວດົນເຕີບ ມີໝູ່ມາດຶງແຂນເຂົ້າໄປທາງ ເຮືອນຄົວເຂົາບອກວ່າມີຜູ້ສາວຫລ໊າຍຫລາຍວ່າຊັ້ນ......ແລະກໍຍ້ອນ ເທວະດາຫລືຜີທ່າໂຕໃດກະບໍ່ຮູ້ໃຕ້ຫຽນແອ໊ບຂຶ້ນໃນຫົວໃຈເຮົາວ່າ... ຄັນມີແສງເງິນຢູ່ໃນຫັ້ນນຳ ມື້ນີ້ຄືຊິເປັ່ນມື້ຂອງເຮົາແທ້ ໆ ແຫລະ

ພໍຕີນຂວາຍຽບເຂົ້າປະຕູຄົວເຮືອນບຸນ ຕາເຮົາ ຫລຽວເສືອດເຂົ້າໄປເບິ່ງທຸກຄົນໃນຄົວໝົດແລ້ວ *ຄັນບໍ່ຄາຫມູ່ ໂຊມແດ່ ມີຈ່ອງປະຕູຢູ່ແດ່ແມ່ນເຮົາເປັ່ນລົມແລ້ວ ເຫິງຍືມ ຈັ້ງໃດວ່າແສງເງິນນັ້ງຊູດຫມາກພ້າວຢູ່ກາງ*

*ຜູ່ບ່າວຜູ່ສາວຕັ້ງຊາວ ປາກແສງເງິນກະເວົ້າແບັບໆ ບໍ່ເຊົາ ລາງເທື່ອຍັງເຮັດຕາສົ້ມຕາຫວານໃສ່ໃຜຕໍ່ໃຜ ອີກ ແສງເງິນມາບມາເຫັນເຮົາຢືນເກາະປະຕູຢູ່ຍັງ ທຳທ່າບໍ່ຮູ້ຈັກເຮົາອີກ* ບ໊ະ! ເຮົາຄິດ ແສງເງິນຊິບໍ່ຮູມໄປ ຫລາຍປານນີ້ພຸ້ນບໍ່....ເຮົາບໍ່ຢູ່ນຳແຕ່ ໔—໖ ເດືອນນາງບໍ່ຮູມໄປ ຮອດປານນີ້ມັນກະເຫລືອເຊື່ອຊາດອກເວີຍ....ຍ້ອນເມົາແດ່ ເຮົາ ໂລດພົດຄວາມອາຍ ເຮົາຍ່າງເຊຊ້າຍເຊຂວາເຂົ້າໄປຈົມດຸງໂຕແສງ ເງິນ ບໍ່ມີມາຣະຍາດຕາມແບບສບັບຄົນເມົາ ເຮົານັ່ງລົງຂ້າງໆ ນາງໂລດ ຕັດພ້າຜູ້ອື່ນຊ່າງມັນ ຄວາຈັບໄດ້ມືແສງເງິນເຮົາກໍມັນ ລະນາເຖິງຄວາມຄິດຮອດຕ່າງໆ ນານາຕອນທີ່ຕ້ອງຈາກກັນ ເວົ້າ ເຖິງຂອງຝາກຂອງຕ້ອນທີ່ເຮົາຂົນມາແຕ່ເມືອງໄທຍ໌ ເຮົາເວົ້າໄປ ເວົ້າມາຄົນຂຽນລົງເຈ້ຽກະຄືຊິໄດ້ເບັ້ນປົ້ມແລ້ວແຫລະ ແຕ່ຈື່ໄດ້ ດັກຕອນທີ່ເຮົາຖາມນາງວ່າ

"ແສງເງິນ ນ້ອງມາບໍ່ຮູມໄປຫລາຍແທ້ດຽວນີ້ ຮູ້ຈັກ...."

‘ໂອຍ....ອ້າຍອັນນີ້ນະ !" ແສງເງິນຮ້ອງຕອບ "ບອກຕັ້ງພັນເທື່ອແລ້ວວ່າຂ້ອຍຊິດຳພັ້ນ...ດຳພັ້ນ ໆ ໆ ກະຍັງມາ ຮ້ອງຂ້ອຍແສງເງິນໆຢູ່ ຊິໄປຕາຍໃສລະໄປຊະ" ແລ້ວກະມີສຽງ

ຄົນໂຮຕັ້ງຂຶ້ນອ້ອມທິບ ເຮົາໂມໂຫສຸດຂີດ....ເຮົາຮູ້ສຶກເສັຽກຽດຂອງຄວາມເປັນລູກຜູ້ຊາຍ ເຮົາເຄີຍອ້າງແລະຮັກສາຄວາມດີຂອງເຮົາມາແຕ່ນ້ອຍຈົນໃຫຍ່ ແມ່ແທ້ ໆ ກະຍັງບໍ່ເຄີຍດ່າປະຈານໜ້າເຮົາຕໍ່ໜ້າຊຸມນຸມຊົນຫລາຍປານນີ້ຈັກເທື່ອ ອັນນີ້ນ້ຳໜ້າແຟນ ຊິມາດ່າກັນປານນີ້ບັກໃດມັນຊິຍອມ ເຖິງຊິຮັກແສນຮັກເຮົາກະຂໍຕອກໜ້າດ່າຄືນກ່ອນລະ ເຮົາຄາດລາດລຸກຂຶ້ນຢືນກາງເຮືອນຄົວໂຊຊັດໄຊເຊຮ້ອງຂຶ້ນໝົດແຮງ ຈົນຄົນຢູ່ໃນຫັ້ນຫລຽວມາເບິ່ງເຮົາເປັນຈຸດດຽວ ເຮົາຊີ້ມືໃສ່ແສງເງິນແລ້ວປະກາດກ້ອງວ່າ

"ມຶງ...ອີ່ແສງເງິນ...ມຶງບໍ່ແມ່ນແມ່ກູ ແມ່ກູມີຜູ້ດຽວມຶງເປັນພຽງແຕ່ຄົນຮັກຂອງກູ....ມຶງລືມກູ...ກູກະຫາຜູ້ໃໝ່ໄດ້ ມຶງຢາກບ່ຽນໄປຫາບັກໃດມຶງບ່ຽນໄປໂລດ....ເຊີນ! ແຕ່ຢ່າມາດ່າກູຢ່າມາປະຈານກູເອີ້ຍ....ມຶງມັນຄົນຊົ່ວ ບ່ຽນແຕ່ໃຈຍັງບໍ່ພໍ ບ່ຽນຮອດກາຍ....ກູກະບໍ່ເຄີຍເຫັນ....ບ່ຽນຮອດຊີ່ພຸ້ນນະ ບໍ່ໄດ້ຊີ່ແສງເງິນ....ຂ້ອຍຊີ່ດ່ຳໜັ້ນ....ກູຢາກຫົວຕ່ຳ...ເວົ້າພໍປານກູບໍ່ຮູ້ຫລາຍ...ກູ....!"

ເຂັນມາທີ່ແລ່ນອ້ອມຫລັກມັນໄດ້ຈັກຮອບກະບໍ່ຮູ້ ເຮົາພໍເງີຍ ໆ ຫົວຂຶ້ນໄດ້ຕາຍັງມືນບໍ່ຂຶ້ນ ແຕ່ກະພໍຮູ້ວ່າໂຕນອນຢູ່ພື້ນ

ເຮືອນຫລືນອກເຮືອນຄັກໆ ໄດ້ຍິນສຽງນຶ່ງເປັນສຽງເດັກນ້ອຍ ອາຍຸບໍ່ເກີນສິບປີເວົ້າວ່າ

"ສູໆໆ ມາເບິ່ງອີ່ຕາອັນນີ້ແມ້ ໄທບ້ານໃດບໍ່ກິນເຫລົ້າເມົາແລ້ວລຸກຂຶ້ນດ່າເອື້ອຍຫມັ້ນ ຫາວ່າລາວເປັນໃຜບໍ່ຈື່ແສງໆເງິນນີ້ລະ ເອື້ອຍຫມັ້ນລາວຈູກເອົາສລົບໄປເລີຍລະບໍ້...ຈົ່ວບໍ່ຈົ່ວນະ !"

ສຽງນັ້ນ ຍັງຄົງຜັງຢູ່ໃນສຳນຶກຄວາມຈື່ຈຳຂອງເຮົາຕລອດມາ... ແລະມັນຈະຜັງຢູ່ຈັ້ງຈຸ້ມຕລອດໄປ ບໍ່ມີມື້ລືບຈາງລ້າງລູບອອກໄດ້ຕລອດເຈົ້ນຈີວິດນີ້ຂອງເຮົາ...

△ △ ▽

# "ລາວກະເທີນ"

(ເກົ່າໝາງ)

● ຍາມໃດ ຊົລທີມ້າ ໄຫລມອງຖ້ວມທົ່ງ
ມົດບ່ ມີບ່ອນຊຸ້ມ ປາກັ້ງອະເຣີ່ຍທົວ
ຍາມເມື່ອ ຊົລທີມ້າ ໃນໝອງເຂີນຂາດ
ມົດງ່າມ ມັກກະເຈາະກະຈອດເອົ້າ ທົວລ້ຕ່ປາ

● ຍາມມ້າ ມາກຫລາກລົ້ນ ຕໍຕ່ຳມົວມຸດ
ມ້າລົດ ລົງຕໍຜຸດ ໃຜ່ໝະລັນເຫັນແຈ້ງ
ຍາມເມື່ອ ເຕໂຊຄຸ້ມ ຄອງເມືອງໂຫດບ່ເດັ່ນ
ຄັນເມື່ອ ຕົກຕັ້ງອີ໊ ມີແບ້ອທົ່ວຄີງ ແທ້ແລ້ວ

*– ປາໃນ –*

# ລາວ ແປເປັນ ລາວ

✳

*ກັມການ:* ອ່ານວ່າ: ກຳມະການ ແປວ່າ ໃຜກໍໄດ້ ຊຶ່ງເຈົ້ານາຍເຫັນວ່າເຫລືອອຽກ ຈຶ່ງແຕ່ງຕັ້ງຂຶ້ນໄວ້ເພື່ອໃຫ້ມີເຫດຜົນໄປອ້າງກັບເມັຽວ່າ... "ອ້າຍຕິດປະຊຸມ" ໃນມື້ທີ່ບໍ່ຕ້ອງໄປປະຊຸມ

*ຂັນຕິ:* ອອກສຽງຕາມສະກົດ ແປວ່າ ສະພາບທີ່ຜູ່ບໍ່ມີອຳນາດໜ້າທີ່ຕ້ອງຈຳຍອມ ເມື່ອຜູ່ມີອຳນາດໜ້າທີ່ຂາດຂັນຕິ

*ຄະລຳ:* (ມ້າກິນຕ່ອນ): ອ່ານຕາມໃຈມັກ ແປວ່າ ຫ້າມສວຍໂອກາດຂຶ້ນຣາຄາສິນຄ້າເດັດຂາດ ແຕ່ໃຫ້ຄ່ອຍ ໆ ຂຶ້ນໄປມື້ລະເລັກລະໜ້ອຍ ເທື່ອລະອັນສອງອັນ

*ຄວາມຮັກ:* ຕ້ອງເຫັນແກ່ຊາດ ເພາະວ່າສິ່ງອື່ນໃດທັງໝົດແລະໃນເມື່ອໂຕເຮົາເອງກໍເປັນສ່ວນນຶ່ງຂອງຊາດ ຈຶ່ງບໍ່ຄວນພາດໃນການເຫັນແກ່ໂຕເຮົາ

*ງານ:* ຮູບສົມບັດຂອງສັດຣີໃດກໍໄດ້ ທີ່ເຮົາຍັງບໍ່ແນ່ (ພໍ່ທີ່ຊິຫາວິທີເຮັດໃຫ້ນາງມາ) ນອນນຳ

ໄກອອກໄປໃນກາລເວລາ

ມີແສງແດດອຸ່ມ ໆ ຄອຍຖ້າຢູ່

ເຈຕນາ–ຄວາມຄິດ–ຄວາມຫວັງ–ຢາກປະກາດກ້ອງ

ໃຫ້ມາຣີໄດ້ຍິນແລະຮັບຮູ້ວ່າ ເຮົາຂຽນນິຍາຍຮັກ....

# ເຣື່ອງບໍ່ເພື່ອຍອດຊູ້

** ໂດຍ ປາໄນ **

*ເຮົາຕື່ນຂຶ້ນ ໃນຍາມຂ້ອນແຈ້ງ*

*ຕື່ນຂຶ້ນ ດ້ວຍຄວາມຕັ້ງໃຈອັນຫນັກແຫນ້ນແລະເດັດດ່ຽວ ກາງແສງພຸ່ມພູ່ກ່ອນອະຣຸນຮຸ່ງ* ຊຶ່ງແນ່ນອນວ່າ ຕໍ່ຈາກນັ້ນມັນຄືມື້ໃໝ່...

ຖືກແລ້ວ....

"ອະຣຸນ" ທີ່ກຳລັງບ່ອນໜ້າຂຶ້ນມາຢາມແຜ່ນດິນ ຄືມື້ໃໝ່ຂອງໂລກ.... ແລະການລຸກຕື່ນມືນຕາຂອງເຮົາ ຄືມື້ໃໝ່ຂອງຊີວິດ.... ຊີວິດຊຶ່ງແຂວນໄວ້ກັບຄວາມຫວັງ ສີຈາງ ໆ ດັ່ງດຽວກັນກັບແສງພຸ່ມພູ່ກ່ອນຮຸ່ງອະຣຸນ

ເຮົາລຸກຕື່ນມືນຕາຂຶ້ນມາ ໃນຊີວິດພ້ອມດ້ວຍຄວາມຫວັງພຽງລາງ ໆ.... ທີ່ວ່າໃນສີຈືດຈາງທ່າງໄກຂອງຄວາມຫວັງນັ້ນຍັງມີຄວາມປະເສີດເລີດລ້ຳບັນເຈືອຢູ່ອີກສ່ວນນຶ່ງ... ສ່ວນນັ້ນເຖິງຈະນ້ອຍພ້ອຍດຽວ ແຕ່ກໍເປັນແກ່ນສານແກ່ນໃຈ ຂອງຄວາມຫວັງທັງປວງ....

ສ່ວນນັ້ນ ຄືຄວາມຕັ້ງໃຈອັນໜັກແໜ້ນ ແນ່ນອນ

*"ຄວາມຮັກ"*

"ຄວາມທີ່ຮັກໃນຄົນຮັກ"

"ຄົນຮັກ ຜູ້ເປັນ *ຍອດຊູ້ຄູ່ໃຈ*"

ເຖິງພົດເປັນບົດຈັຍຣາກຖານອັນຖາວອນ ຂອງ ຄວາມຕັ້ງໃຈ...

*ຄວາມຕັ້ງໃຈຈິດຈໍ່ທີ່ຈະຂຽນນິຍາຍຣັກ*

ຈາກຣົດຣັກອັນຫອມຫວານ.... ຈາກຄວາມຣັກອັນປະຈັກເດັ່ນແລະ ສົດໃສ ແລະຈາກຫົວໃຈທີ່ເຕັມລົ້ນ ດ້ວຍຄວາມຣັກໃນຍິງດຽວ

ຍິງນັ້ນ ຄື *ຍອດຊູ້*

ຍອດຊູ້ຜູ່ເປັນຄູ່ຊື່ນໃນຈິນຕະນາ... ໃນອິນຍານ... ໃນທາງຊີວິດ.... ໃນຄວາມຫວັງ ແລະ... ໃນຄວາມຝັນ...

*ເຮົາຈະຂຽນນິຍາຍຣັກເພື່ອຍອດຊູ້*

ບົດນິຍາຍພິສວາດຂອງເຮົາ ຈະຕັ້ງຕົ້ນດ້ວຍຄວາມ ຫອມຫວານຂອງຣົດຣັກ.... ຈະດຳເນີນໄປໃນບັນຍາກາດຂອງຄວາມ ຣັກ ເພື່ອສຸດສ້ຽງລົງດ້ວຍຊີວິດຣັກອັນສົດໃສຊື່ນບານ ສົມຫວັງ ສົມປຣາຖນາ

ບົດນິຍາຍຣັກຂອງເຮົາ ຈະຕັ້ງຕົ້ນຂຶ້ນພ້ອມກັບ ອະຣຸນນີ້...

ຈະຕັ້ງຕົ້ນພ້ອມກັບການຕື່ນນິນຕາຂຶ້ນມາ ໃນມື້ໃໝ່ ກາງເຫມັນຣະດູອັນໜາວເຢັນ ມີໝອກເໝືອຍຂົວມົວມົວໝອງ ເປັນ ບັນຍາກາດທີ່ຫຸ້ມ.... ແຕ່ວ່າ....

*ໄກອອກໄປພຸ້ນ....* ເມື່ອດວງສຸຣິຍ໌ອ່ອນໜ້າ ຂຶ້ນມາຍາມໂລກ ຈົນສູງພົ້ນຍອດໄມ້ດົງຣົກ.... *ມີແສງແດດອັນອົບອຸ່ນ* ແຫ່ງອະຣຸນການ *ຄອງຢູ່ດ້ວຍຄວາມໂອບອ້ອມອາຣີ....* ແສງນັ້ນຄືຄວາມຫວັງ...

ແສງນັ້ນເປັນຄວາມຫວັງ ແຫ່ງຄວາມສຸກໃນມື້ໃໝ່ ມື້ໃໝ່ ຈຶ່ງເຮົາຕື່ນມືນຕາພ້ອມກັບຄວາມຕັ້ງໃຈ ອັນຈິດຈໍ່ ແລະແນ່ນອນ

*"ນິຍາຍຮັກຂອງເຮົາ ເພື່ອຍອດຊູ້"*

ເຮົາຈະບັນທຶກມັນ ລົງເທິງແຜ່ນເຈັ້ຽສີຊົມພູ....

*ຊົມພູອ່ອນທີ່ເປັນສີແຫ່ງຄວາມຮັກແທ້*

"ນິຍາຍຮັກເຣື່ອງນີ້ ເພື່ອຍອດຊູ້"

ເຮົາຈະຈາຣຶກຖ້ອຍຄຳອັກສອນລົງໄປ ດ້ວຍນ້ຳມຶກສີຟ້າ...

*ສີຟ້າທີ່ເປັນສີຄວາມຫວັງໃນຊີວິດ*

ທຸກຢ່າງ.... ພ້ອມພຽງໝົດແລ້ວ....

ແຜ່ນເຈັ້ຽສີຊົມພູ ນອນແຜ່ແບວາງຢູ່ເທິງໂຕະຄອຍຖ້າຊົມຊັບຣອຍປາກກາ....

ປາກກາອົມນ້ຳມຶກສີຟ້າ ນອນຣຽງຄຽງຄອຍຢູ່ໃກ້ໆ

ກັບເຈັ້ຽແຜ່ນສິຊົມພູ ຖ້າແຕ່ການປະທັບຮອຍ ເບັ່ນຕົວອັກສອນລົງເທິງໜ້າເຈັ້ຽ....

ອະຣຸນການກຳລັງເຄາະປະຕູໂລກ ເພື່ອຂໍການຮັບຕ້ອນ ດ້ວຍຄວາມຍິນດີຂອງພື້ນແຜ່ນດິນ

ໝອກເໝືອຍຂົວມົວ ກຳລັງປົກຄຸມຕຸ້ມຫົ່ມ ໃຫ້ຄວາມຊຸ່ມເຢັ່ນຊື່ນບານແກ່ມວນໝູ່ພຶກສາກ່ອນອຳລາຈາກ ເພື່ອຄອຍຖ້າຕ່າວມາພານພັກັນອີກໃນມື້ຕໍ່ໄປ

ສຸຣິຣັສມີກຳລັງຕັ້ງໜ້າບ່າຍມາ ເພື່ອໃຫ້ບັນດາສັພສິ່ງແລະສັພສັດ ໄດ້ສຳພັດກັບຄວາມອົບອຸ່ນໃນມື້ໃໝ່

ບັນຍາກາດແຫ່ງຄວາມຮັກ ເດີ່ມາເຄາະເອີ້ນຢູ່ນອກບ່ອງຍັ້ຽມ... ແລ້ວບ່ອງຍັ້ຽມກໍແຍ້ມໄຂອອກຕ້ອນຮັບດ້ວຍໄມຕຣີ

ສາຍຕາແຫ່ງຄວາມຫວັງຂອງເຮົາ ສອດສ່ອງແລຫາດວງດອກມາລີ ທີ່ກຳລັງແຍ້ມບານຮັບຕ້ອນຮຸ່ງແຈ້ງແສງອະຣຸນ

ແລະມາຣີໃນດວງໃຈທີ່ເຮົາໃຝ່ຝັ້ນສແວງຫາ ອາດຈະຍັງບໍ່ຕື່ນມືນຕາຈາກຄວາມຫລັບຝັ້ນ ແຫ່ງນິທຣາຣົມ

*ມາຣີ.... ຍອດຊູ້*

ຫລືຈະຕື່ນມືນຕາຂຶ້ນມາແລ້ວ ເພື່ອປະສົງສຳພັດກັບ

ບັນຍາກາດແຫ່ງຄວາມຮັກ ຂອງອະຣຸນນີ້...

*ມາຣິ.... ຍອດຮັກ*

ຮູ້ວ່າຕື່ນຍືນກາຍຂຶ້ນມາແລ້ວ ເພື່ອຄອຍຖ້າປະສານສາຍຕາແຫ່ງຄວາມຮັກຕໍ່ກັນແລະກັນດັ່ງທີ່ເຄີຍ ແລະເຄີຍປະຕິບັດມາເປັ່ນປົກຕິ ໃນທຸກໆອະຣຸນ

ຄວາມໜາວແຫ່ງເໝັນ

ຄວາມເຍັ້ນຈາກໝອກເໝືອຍມົວມືດ

ໄກອອກໄປໃນກາລເວລາ ມີແສງແດດອ່ອນ ໆ ຄອຍຖ້າຢູ່

*ໄກອອກໄປໃນທາງອາຍໝອກ ເຫັນເງົານິ່ງພໍລາງ ໆ....*

ເງົານັ້ນ....

ແນ່ນອນ ບໍ່ມີໃຜອື່ນ ນອກຈາກມາຣິ

ແນ່ນອນ ຕ້ອງມີສາຍຕາສອດສ່ອງຫາສາຍຕາ ຢູ່ກາງຄວາມມົວພົ້ນຂອງໝູ່ໝອກ...

ສຽງອັນນຶ່ງຂອງຄວາມສຸກ ແລ່ນມາຕຶງເຈຕນາ ໃຫ້ລາກແກ່ຮ່າງດິງ ດ້ວຍບາດຍ່າງ ຍ່ອງ ຍ່ອງ ຍ່ອງ ຈອບລົງໄປແລະດຳເນີນໄປສູ່ເງົາທີ່ເຫັນ.

*ເຈຕນາ....*

ຢາກເຫັນນາຣີຍອດຊູ້ໃກ້ ໆ ນໍ່ ໆ ໃນຍາມກ່ອນ

ແຈ້ງ...

*ຄວາມຄິດ....*

ຢາກສຳຜັດກັບຄວາມສຸກໃນຄວາມຮັກ ກ່ອນຈາຣິກ

ນິຍາຍຮັກດ້ວຍນ້ຳນຶກສີຟ້ຳ ລົງເທີງແຜ່ນເຈັຽສີຊົມພູ

*ຄວາມຫວັງ...*

*ຢາກປະກາດກ້ອງ ໃຫ້ນາຣີໄດ້ຍິນແລະ ຮັບຮູ້ແຕ່ຜູ້ດຽວວ່າ ເຮົາຂຽນນິຍາຍຮັກເຣື່ອງນີ້ ເພື່ອຍອດຊູ້ຄູ່ໃຈ*

ຍັງອີກສອງກ້າວ ກໍເຖິງແດນຮົ້ວ

ຍັງອີກອຶກໃຈດຽວ ກໍຕ້ອງໄດ້... ສົມເຈຕນາຕາມ

ຄວາມຄິດດັ່ງຫວັງ

ແຕ່ອະນິຈາ ຄວາມຮັກ....

ທຸກຢ່າງພັງທລາຍສລາຍລົງ ໃນທັນໃດ

ໝອກເໝືອຍທີ່ມີປະກະຕິຊຸ່ມເຢັ່ນ ເກີດເຂັ້ມຄວັນ

ຣົມອົບບົ່ມເອົ້າ...

ເຫມັນທີ່ໜາວແສນໜາວ ກຳລັງແຜດເຜົາອຸປາທານ ໃຫ້ທໍຣະມານໝົ່ນໄໝ້....

ແສງສຸຣິຍັນອົບອຸ່ນສົດໃສ ທີ່ຢືນຄອຍຢູ່ໄກອອກໄປ ພຸ້ນ ແລ່ນພ່າຍພະລັນໜີ ເຫລືອໄວ້ແຕ່ຄວາມຄິດດຳມືດໝອງມົວ

ຄວາມຫວັງ ຖືກມໍຣະສຸມຣັກປັ່ນອິຈົນແຕກມຸ່ນເປັ່ນ ຜົງທຸລີ...

ຄວາມຕັ້ງໃຈຈຸ່ມຈົມ ແລະລຶບຈາງລົງກາງຄວາມເສົ້າ ສຸດ ໂສກາດູນອ່າວໂອ້...

ແຜ່ນເຈັ້ຽບໍ່ມີສີຊົມພູແຫ່ງຄວາມຣັກແທ້ ເຫລືອ ຄ້າງຢູ່ເປັ່ນຮອຍໃຫ້ເຫັນເລີຍ

ນ້ຳມຶກສີຟ້າ ກໍ່ຖືກສູບຊຶບຊຶມຊອດໄປໝົດແລ້ວ ຈາກປາກກາທີ່ໄຮ້ຄ່າ... ຣາຄາແລະຄວາມໝາຍ...

ທຸກຢ່າງພັງທະລາຍສລາຍລົງ ໃນທັນໃດ...

ຕໍ່ໄປບໍ່ມີເຫລືອອີກແລ້ວຄວາມຣັກ... ຄວາມຫວັງ... ແລະຄວາມຕັ້ງໃຈ...

ຕໍ່ໄປຈະບໍ່ພາກົດນິຍາຍຮັກ ຢູ່ໃນພ້າເຈົ້ຽແຜ່ນນັ້ນ

ເລີຍ....

ຕໍ່ໄປ ເຈົ້ຽແຜ່ນນັ້ນ ຈະບໍ່ເປັ້ນສີຊົມພູ...

ນ້ຳມຶກ ຈະບໍ່ເປັ້ນສີຟ້ຳ...

ຕໍ່ໄປ ຈະບໍ່ມີນິຍາຍຮັກເຣື່ອງໃດ ເພື່ອໃຜອີກ

ທຸກຢ່າງພັງທະລາຍສລາຍລົງ ໃນເມື່ອ...

ພາບທາງພ້າທີ່ຜາກົດນັ້ນ... ອະນິຈາ....

*"ມາຣີ !"*

*ໃນອ້ອມກອດ ຂອງບັກທ່າໃດ່ບຸ໊ !!!*

△ △ △

# " ລາວເກົ່າ "

ດູດັ່ງຫີນແຜ່ນລ້ານ ກ້ອນໃຫຍ່ຄືຊິພັກ
ບາດວ່າ ເອົາສະໂມຕິດ ຊັ່ງຊາສັງມາໄດ້
ຜີວ່າ ຕາມຕາຄ໊ອ ຄືສະໂມຊິພັກກວ່າ
ຄົນແມ່ນ ຕາບ່ຄ໊ອ ຊິເບົາເບ໊ອງຜ່າຍສະໂມ ແທ້ແລ້ວ

ສ. ວິຣະວົງສ໌

# ຕາເວັນລັບຫລ່ຽມພູ

★ *ໂດຍ ດວງຈຳປາ* ★

△ ບໍ່ວ່ານາຍຊ່າງມູທິບ ຫລືພຣະອິນທາງໃດ ກໍບໍ່ມີອຳນາດສັ່ງໃຫ້ສົ່ງໄຟໄປເຂົ້າບ້ານໄດ້ດອກ ຫາກວ່າບໍ່ແມ່ນໂຄງການຢູ່ໃນໂຄງການ ຂອງຣັຖບານເພິ່ນ !

*ດວງຕາເວັນລັບຫລ່ຽມພູໄປແລ້ວ ທັງທີ່ແສງຍັງກ້າ*

ໜ້ານ້າຣາບສງົບ ເຕັມແຕ່ເງົາອຶມຄຶມຂອງໝູ່ໄມ້ ລົມແຮງພັດມາວູບວາບ ຍອດໄມ້ລູ່ຫລູບໂອນໄກວ ອາຍອຸ່ນຈາກໂຄມໄຟຍັກຂອງໂລກ ຍັງປະຣອຍແຜ່ຄຸມຢູ່ສອງຝັ່ງນ້າ ບ່ອນທີ່ເດັກແລະຜູ້ໃຫຍ່ລອຍຫລິ້ນບໍ່ເບີດໜ່າຍ ບໍ່ພະວົງວ່າຈະຄ່ຳມືດ ເພາະຊີວິດໃນຊົນນະບົດບໍ່ມີໂມງຍາມຈຳກັດ ເຮັດວຽກເມື່ອສົມຄວນຈະເຮັດ ກິນເມື່ອຫິວ ແລະລົ້ມໂຕລົງນອນເມື່ອເມື່ອຍລ້າອິດອ່ອນໂຮຍແຮງ ດັ່ງນັ້ນພາບທີ່ຂ້າພະເຈົ້ານັ່ງແຍງໃນຂນະນີ້ ຈຶ່ງເປັນພາບທັມດາຂອງຊີວິດບ້ານປ່າ ເປັນພາບທີ່ຂ້າພະເຈົ້າພິສເພັ່ງມາຫລາຍປີເດືອນ ແຕ່ປາງຫົນທາງເສັ້ນທີ່ພາມາສູ່ໝູ່ບ້ານແຫ່ງນີ້ຍັງເປັນທາງກວຽນຣົກ ໆ ແລະບຸນຕາຍັງພາຍແອບເຂົ້າຍ່າງລັດທົ່ງຫຽວໄປໂຮງຮຽນບ້ານຟາກກັນ ຈົນຕີນຖືກຕໍເຟືອງບາດເປັນຣອຍແຕກເຫີບ... ຂ້າພະເຈົ້າຊ່ອຍປົວບາດເຫລົ່ານັ້ນດ້ວຍຢາທີ່ເອົາມານຳແຕ່ວຽງຈັນຈົນເຊົາດີ

ບັດນີ້ບຸນຕາຜູ້ລອຍລ່ອງຢູ່ໃນກະແສທານ ຕໍ່ໜ້າຂ້າພະເຈົ້າໃນເວລານີ້ ເປັນສາວວັຍກຳດັດ ພອນເຕັມອິ່ມແລະເປັນຕາຮັກທົ່ວຕົວຕົນ

ແມ່ນອນພາບອັນເຄີຍຕານີ້ບໍ່ບໍ່ຽມແປງ ບໍ່ເຄີຍບໍ່ຽມຈາກສາຍນ້ຳໄຫລໃສເຢັ່ນ ໂງ່ນຫີນ ເງົາໄມ້ ສັນພູ ທີ່ເດ່ັນບັງດວງຕາເວັນແຕ່ຍັງບໍ່ທັນເຖິງເວລາຕົກ... ແລະແມ່ນແຕ່ການລົງຫລື້ມອາບສົງຂອງຊາວບ້ານ ຕລອດຮອດບຸນຕາຜູ່ບໍ່ເຄີຍຂາດຈາກຣາຍການສຸດທ້າຍ ຂອງຊີວິດປະຈຳວັນເຫລົ່ານີ້

ແຕ່... ຍັງມີທັມຊາດອັນງົດງາມອື່ນ ໆ ຢູ່ບໍ່ຫ່າງໄກຈາກນີ້ໄດ້ບໍ່ຽນສະພາບໄປແລ້ວ ! ຫົນທາງກວ້ຽນມາສູ່ໝູ່ບ້ານກາຍເປັ້ນຖນົນດິນແດງບົນຫີນ ດູນສູງກັນນ້ຳແຊ່ໃນຣະດູຝົນ ຫົນທາງເສັ້ນນີ້ຕັດອ້ອມໝູ່ບ້ານລຽບຂອບພູ ຄົດໂຄ້ງອົກອົນ ໄປສູ່ໂຄງການສ້າງສາອັນຍິ່ງໃຫຍ່ຂອງປະເທດ ເຮືອນໄທບ້ານທີ່ມີທາງ ໄດ້ບໍ່ຽນສະພາບຈາກເຮືອນສູງແບບໂບຮານ ມາເປັ້ນຕຶກດິນຕ່ຳ ໆ ມີຮ້ານນ້ອຍຂາຍຂອງກິນ ເຫລົ້າຢາແມວແກ້ມ ຫລືເຄື່ອງປູກຈາກໄຮ່ສວນ ເຮືອນຕຶກກໍດີນຈີມີຢູ່ຫລັງນຶ່ງສອງຫ້ອງສອງຊັ້ນ ເຈົ້າຂອງບ້ານໄທວຽງພົວເຈັກເມັຽລາວ ມາທຳການຄ້າຂາຍພ້ອມ ໆ ກັບທີ່ຫົນທາງເສັ້ນໃໝ່ຕັດເຂົ້າສູ່ບ້ານ ພວກຊາວບ້ານທຸກຄົວເຮືອນຕ່າງກໍອາສັຍຮ້ານຄ້ານ້ອຍ ໆນີ້ ເປັ້ນບ່ອນແລກບໍ່ຽນຊື້ຂາຍບໍ່ດຈັຍຍັງຊີບປະຈຳວັນ ໃຜມີເປັດໄກ່ຜັກຫຍ້າເຜືອກມັນ ກໍເອົາໄປຂາຍຍົກໃຫ້ຮ້ານໄວ້ ແລ້ວຊື້ຂອງປະດິດສມັຍໃໝ່ ອັນຈຳເປັ້ນກໍມີ ບໍ່

ຈຳເປັນກໍມີ ເປັນຕົ້ນ ຜົງສະບູ ນ້ຳປາ ນ້ຳຕານ ຂນົມແຫ້ງ ທຸກມື້ໃດກໍມີຣົດໂດຍສານຈາກໃນເມືອງ ມາແວ່ຮັບຊື້ສິນຄ້າຈາກຮ້ານຕໍ່ ບຸນຕາເອງກໍເຄີຍຈົ່ມກັບຂ້າພະເຈົ້າວ່າ:

"ຂອງເຮົາເປັນທາບ ໄປແລກຂອງໄທວຽງໄດ້ດ້າມໜ້ອຍ !" ທັງທີ່ບໍ່ພໍໃຈແລະຮູ້ວ່າເປັນການຂູດຮີດ *ແຕ່ໄທບ້ານກໍຄຶກແສງສີຂອງວິທຍາສາດຊູບຍ້ອມໃຈ* ບໍ່ເຄີຍກິນນ້ຳປາກໍແອບກິນ ບໍ່ເຄີຍກິນເຂົ້າຈີ່ກໍຢາກຊີມ ຂອງອັນໃດທີ່ພໍ່ຄ້າໄທວຽງເສາະສແວງຫາມາອ່ອຍລໍ້ ພວກໄທບ້ານກໍຂົນຂວາຍໄປຊື້ໄປແລກມາລອງ ຊຶ່ງກໍເປັນທັມດາທີ່ພໍ່ຄ້າຜູ້ດົນດັ້ນອອກມາຕັ້ງຮ້ານຢູ່ບ່າດົງຍ່ອມຊອກເອົາປຽບໄທບ້ານ ສແວງຫາກຳໄຣເອົາເຕັມມັກ *ຈີ້ດຶກ ໆ ຂາຍແພງ ໆ!*

ຍິ່ງໄປກວ່ານັ້ນ ທົນທາງທີ່ວ່າເປັນລັກສະນະຂອງຄວາມຈເຣີນ ທີ່ໄດ້ແຜ່ຄຸມມາຮອດໝູ່ບ້ານນ້ອຍ ໆ ຍັງນຳເອົາສິ່ງທີ່ມະນຸດບໍ່ປາຖນາມາຢຶ່ນໃຫ້ຢ່າງຫລີກບໍ່ໄດ້ *ຂີ້ໄງ່!* ອະນິຈາຂີ້ໄງ່ ຊຶ່ງຄົນໃນເມືອງເອງກໍຜາງໜ່າຍ ແລະວິຈານກັນພໍແຮງວ່າເສັຽເງິນສ້າງແປງຖນົນຫົນທາງປີລະເປັນຮ້ອຍລ້ານ ກໍຍັງຕ້ອງດົມຂີ້ໄງ່ຈົນຊິນາກັນເຈັບປອດຕາຍໝົດແລ້ວ.... ເຫດໃດຈຶ່ງຕິດຕາມຄວາມຈເຣີນອອກໄປ ຮອກໝູ່ບ້ານບ່ອນສງົບສະອາດນັ້ນ ດຽວ

24/VII
ຫ້າມຈຳໜ່າຍ

ນີ້ຜາກົດວ່າຫລັງຄາເຮືອນຖືກປົກຄຸມດ້ວຍສີແດງພື່ນ ໆ ເມື່ອຣົດແລ່ນກາຍແຕ່ລະຄົນກໍມືດກຸ້ມອຶ້ມ ຣົດ ! ຖືກແລ້ວຣົດຊຶ່ງບໍ່ແມ່ນຂອງໄທບ້ານພໍຄົນດອກ ຫາກແຕ່ມາຈາກວຽງຈັນ ແລະໄປສູ່ໂຄງການອັນຍິ່ງໃຫຍ່ ແລ່ນດ້ວຍຄວາມໄວຕາມໃຈ ຜູ່ຂັບບໍ່ມີຈະຄໍານຶງວ່າ ເປັດ–ໄກ່–ໝູ–ໝາ ຂອງຊາວບ້ານ ອາດຈະແລ່ນກະເລີກະລາດອອກມາຄະມະຄະມັງ ແລະຖືກຢຽບຕາຍ ຫລືຂີ້ໄງ່ຊຶ່ງຈອບແຕ່ຈະໄງ່ກຸ່ມ ໆ ຂຶ້ນຢູ່ແລ້ວ ເມື່ອຣົດແລ່ນໄວກໍຈະຍິ່ງກຸບກ້ອຂຶ້ນຈົນມືດມຸງໄປທົ່ວບ້ານ

ຜູ່ເຖົ້າເຈົ້າບ້ານລາງຄົນ ຍັງເຄີຍຈົ່ມແຮງ ໆ ນໍາຫລັງຣົດວ່າ:

ພໍ່າວໄປ ໂ....ດ ແມ່ ມັນທາງໃດ ?

ເຈົ້າຂອງເຮືອນແຄມທາງ ຜູ່ອ່າວມັກສງົບແດ່ກໍຈະຫາຄຸນ້ໍາມາຫົດຣາດດ້ວຍກະບອຍນ້ອຍ.... ພາໃຫ້ຫຸເລົາຄວາມກຸບກ້ອຂອງໝອກສີແດງນັ້ນ !

ຍັງມີອີກຫລາຍສິ່ງຫລາຍແນວທີ່ປ່ຽນໄປ ເດັກນ້ອຍບ່າວແວງແລະສາວຣາມນໍາບ້ານ ພາກັນໄປປະກອບອາຊີບເປັນກຸລີກໍ່ສ້າງນໍາພວກທີ່ມາແຕ່ວຽງ ໄດ້ເງິນເບ້ຽນທີ່ພວກເຂົາເຈົ້າພໍໃຈ ຂ້າພະເຈົ້າເຄີຍສ້ຖາມເດັກເຫລົ່ານັ້ນວ່າ ເຫດໃດເຂົາຈຶ່ງປະລະວຽກ

ໄຮ່ການມາ ອັນເຄີຍປະກອບມາແຕ່ປູ່ແຕ່ຍ່າ ສຽງສ່ວນຫລາຍກໍຈະຕອບວ່າ

"ເຮັດແລ້ວເຂົ້າເປືອກກໍຖືກກົດຣາຄາ ໂຮງສີບຸບເອົາກຳໄຣຫລາຍໂພດ ທັງ ໆ ທີ່ຄົນໃນເມືອງຕ້ອງຊື້ເຂົ້າສານແພງຢູ່ຄືເກົ່າ !

ເຮັດສວນກໍເສັຽປຽບໃຫ້ພວກເພິ່ນ ທີ່ມີຣົດມາຂົນເອົາກັບໄຮ່ ຄັນເຮົາບໍ່ຂາຍເຂົາກະບໍ່ງ້ ຂອງເຮົາກໍເນົ່າຖິ້ມ !

ເຜົາຖ່ານກະບໍ່ໄດ້ສົມແຮງ ມີບໍຣິສັດພູກຂາດມາຊື້ໄປຂາຍຕໍ່ ເຮົາຊິໄປຂາຍໃນວຽງເອງກະບໍ່ໄດ້ ຍ້ອນບໍ່ມີປາຕັງ!"

ພວກເດັກນ້ອຍແມ່ຍິງບໍ່ມັກຕ່ຳຫູກອີກເລີຍ ຖາມຄວາມເຫັນຈາກບຸນຕາເອງຊຶ່ງຍັງເຮັດຢູ່ແດ່ ນາງກໍວ່າ

"ຊິສົນຝ້າຍສິບໍ່ຕົກເຈັກເອົາມາຂາຍ ດີກວ່າຊິມາທົນທຸກທໍຣະມານຈົກໃພ່ຈົກຝ້າຍຢູ່ ຄັນແນວເຮົາຢາກເຮັດຂາຍວ່າຊັ້ນຜູ້ເພິ່ນຊິໄວ້ຂາຍຕໍ່ຢູ່ຕລາດກໍຢາກໄດ້ຂອງເຮົາຖືກ ໆ ເຮົາຜູ້ຫລັງອົດຫລັງແຂງເຮັດນີ້ ໄລ່ເບິ່ງບໍ່ໄດ້ກຳໄຣທໍ່ຜູ້ເພິ່ນຖ້ານັບເງິນຢູ່ຕລາດຊ້ຳນະ !"

ຄວາມບໍ່ຽມແປງເຫລົ່ານີ້ ເມື່ອຄຳນຶງເບິ່ງແລ້ວຂ້າພະເຈົ້າບໍ່ຮູ້ສຶກອອນຊອນນຳເລີຍ ຂ້າພະເຈົ້າບໍ່ແມ່ນເຈົ້າຂອງ

ບ້ານ ບໍ່ແມ່ນຄົນຫົວເກົ່າທີ່ປະຕິເສດການບ່ຽນແປງ ແຕ່ຂ້າພະເຈົ້າອອກຄວາມເຫັນຢ່າງເບັ່ນກາງ ຢ່າງຄົນທີ່ບໍ່ມີສ່ວນໄດ້ສ່ວນເສັຽກັບບ້ານນີ້ວ່າ ອາການດັ່ງກ່າວມາແລ້ວ ບໍ່ແມ່ນວິວັທນາການອັນເກີດຈາກການສ້າງສາເພື່ອຄວາມຈເຣີນ ຫາກເບັ່ນ *ແຕ່ພຽງເສດຂອງໂຄງການ...* ເສດທີ່ຕົກເຮັ້ຽອອກມາຈາກແຜ່ນເຈັ້ຽໂດຍບໍ່ມີໃຜຫົວກັບນັບຊາ.... *ເສດຂອງຄວາມຈເຣີນ ຈຶ່ງຕົກເຮັ້ຽເຂົ້າໄປໃນຈອກແຈຂອງຄວາມຫລ້າຫລັງ* ບໍ່ມີຫຍັງກ້າເກິ່ງກັນທໍ່ເມັດງາ !

△ △

ເງົາພູຄ່ຳມືດເຂົ້າ... ອາຍອຸ່ນຫອ່າງກໍ່ນີ້ຈາງຫາຍໄປໃນທັນໃດ

“ອ້າຍອັນນີ້ມ່າ ມາຊິງເຮັດຂີ້ຄ້ານຢູ່ແທ້ ປານໃດຊິອາບ ໝອດຂ້ອຍຊິອົ້ນແລ້ວນີ້ ໝາວແລ້ວໄປ໊ສອນ !” ບຸນຕາຫວິດມ້າປອກຂ້າພະເຈົ້າແລະລຸຍຂຶ້ນຝັ່ງພ້ອມກັບເພື່ອນຍິງຜູ້ຊື່ສອນ ຂ້າພະເຈົ້າຂີດຂີ້ຄ້ານຢ່າງທໍ້ຖອຍໃຈ ບໍ່ແມ່ນແຕ່ບໍ່ຊື່ນຊົມກັບສະພາບອັນບ່ຽນແລ້ວຂອງບ້ານແຫ່ງນີ້ດອກ ຫາກແຕ່ໃນໃຈຂ້າພະເຈົ້າກໍ່ມີອີກບັນຫານຶ່ງ ທີ່ໜັກໜ່ວງພໍໃຊ້

ຂ້າພະເຈົ້າລຸກຍ່າງໜີຈາກທີ່ນັ້ນ ເລາະຝັ່ງລົງໄປທາງ

ໃຕ້ທັງໃຊ້ສມອງໝັກ ຂ້າພະເຈົ້າຮູ້ຈັກໃຈໂຕເອງດີແລ້ວ ຍັງແຕ່ໃຈຜູ້ອື່ນ.... ສາມປີ.... ສາມປີ.... ຈະເບິ່ງກັນບໍ່ອອກກໍຄົງຜິດໄປລະ!

ເມື່ອຂ້າພະເຈົ້າຍ່າງໂງດົມ ແບບຄົນທີ່ຕັດສິນໃຈແລ້ວ ບຸນຕາແລະສາວສອນກໍບໍ່ຽນເຄື່ອງຮຽບຮ້ອຍ ຂະເຈົ້າລຸຍນ້ຳລົງໄປຍ່ອງໄລສິ້ນທີ່ນຸ່ງອາບ ຄາວດຽວກໍນຳຂ້າພະເຈົ້າຂຶ້ນຝັ່ງ

"ບໍ່ອາບຊ້ຳດອກ" ຂ້າພະເຈົ້າບອກບຸນຕາ ນາງບໍ່ປາກ ຄົງບໍ່ປລາດໃຈຫຍັງ ເພາະການອາບນ້ຳຂອງຜູ້ຊາຍ ຈະກະທຳໃນເວລາໃດກໍໄດ້ ລາງມື້ເດິກ ໆ ພວກກຸລີ່ຢູ່ຄຸ້ມພັກ ກໍພາກັນຂຶ້ນຣົດຈີບບຶ່ງໄປໂຕນກັນຍ່າງມັນແຊວ ສາວໄທບ້ານເອງກໍມັກລົງອາບຍາມເດືອນຫງາຍ ທີ່ພາກັນມີອຽກວານເບັ້ນໝູ່ ບໍ່ວ່າເດິກດື່ນປານໃດກໍລົງອາບໄດ້

ໝູ່ຂອງບຸນຕາແຍກເນື່ອນ ໆ ທ່າ ຂ້າພະເຈົ້າຍ່າງເບັ້ນເພື່ອນນາງຕໍ່ໄປ ເພາະເຮືອນຢູ່ໄກຮອດຫົວບ້ານ ບັດນີ້ຄວາມມືດມົວພວມແຜ່ຕົວອອກມາເທື່ອໜ້ອຍ ແສງໄຟນຳເຮືອນທຸກໆຫລັງວອນແວມຂຶ້ນ ຜ່ອງຕະກຽງນ້ຳມັນ ຜ່ອງໂຄມພະຍຸ...

"ອີກຈັກເດືອນເຂື່ອນຊິແລ້ວອ້າຍແຫວງ ?" ບຸນຕາຖາມຂຶ້ນລອຍ ໆ

"ສາມເດືອນທີ່ມີນລະບຸນຕາ" ຂ້າພະເຈົ້າຕອບແລ້ວ

ກໍຂ່ມ່າຄາຄ້າງຢູ່ຫັ້ນ.... ເບິ່ງດູ້... ຕັ້ງສາມປີມາແລ້ວ... ແລະຍັງອີກແຕ່ສາມເດືອນ... ຂ້າພະເຈົ້າກໍຍັງບໍ່ກ້າອອກປາກໃບ້ງ ໆ ຄວາມແນ່ໃຈນັ້ນແນ່ເກືອບຮ້ອຍເປີເຊັນແລ້ວ ບຸນຕາຮັກແພງແລະນັບເອົາຂ້າພະເຈົ້າເປັນອ້າຍມາແຕ່ຮູ້ຈັກກັນໃໝ່ ໆ ພຸ້ນ ແມ່ບຸນຕາເອງກໍ່ຮັບເອົາຂ້າພະເຈົ້າເປັນລູກຮັກ ເພາະຂ້າພະເຈົ້າມາຜູກກິນເຂົ້າກິນນ້ຳ ຊອ້ານຊູຄອບຄົວນີ້ມາຢ່າງຈິງໃຈ ທະແນນວ່າຂ້າພະເຈົ້າອອກປາກໄປເທາະ....

“ແລ້ວບ້ານເຮົາຊິໄດ້ໃຕ້ໄຟຟ້າກ່ອນໝູ່ບໍ່ລ່ະອ້າຍ”

ເປັນຄຳຖາມງ່າຍ ໆ ແນ່ນອນບຸນຕາຄິດຕາມພາສາຍິງໄທບ້ານຊົນນະບົດທັມດາ ທີ່ຄິດວ່າເຂື່ອນຊິມັ່ງທີ່ສ້າງຂຶ້ນມະຫິມາໃຫຍ່ໂຕປານຜາສາດຫີນໃນເທພນິຍາຍ ສາມາດກັ້ນເອົາແມ່ນ້ຳທັງແມ່ໃຫ້ຂັງຢູ່ໃນຮ່ອມພູເປັນທະເລສາບໄດ້ນັ້ນ ເມື່ອໂຄງການມາກໍ່ຕັ້ງຂຶ້ນຊາວບ້ານຂອງນາງ ໄດ້ມີສ່ວນຮ່ວມໄມ້ຮ່ວມມືມາຕລອດຣາຍການກຸລີທີ່ເສັຽຊີວິດກໍ່ມີໄທບ້ານນີ້ຢູ່ນຳສອງຄົນ ຍາດພີ່ນ້ອງຢູ່ບ້ານຟາກເຂື່ອນບ່ອນກາຍເປັນອ່າງຂັງນ້ຳ ກໍ່ຖືກອົພຍົບນຳໝູ່ໄປຫລາຍຄອບຄົວ ແຕ່ດິນບ້ານຂອງບຸນຕາເອງກໍ່ຍັງກາຍເປັນເສັ້ນທາງຫລວງຂອງຂະບວນຣົດທີ່ຂົນສົ່ງສິ່ງປູກສ້າງມາທັງເວັນທັງຄືນ ໂຮມແລ້ວໝູ່ບ້ານນ້ອຍ ໆ ແຫ່ງນີ້ ໄດ້ມີສ່ວນຢູ່ໃນການສ້າງສາອັນສຳຄັນ

ອັນດັບຊາດນີ້ສົມຄວນ.

ສະນັ້ນເມື່ອເຂື່ອນແລ້ວ ນ້ຳໄດ້ປັ່ນຈັກໃຫ້ເປັນພະລັງໄຟ ບຸນຕາກໍຫວັງວ່າຈະໄດ້ເຫັນບ້ານນ້ອຍ ໆ ຂອງນາງ ຮຸ່ງເຮືອງດ້ວຍແສງວິທຍາສາດ !

ຂ້າພະເຈົ້າບໍ່ຢາກຕອບບຸນຕາໃຫ້ຜິດຫວັງ ແຕ່ກໍບໍ່ສາມາດຈະຕົວະນາງໄວ້ຕໍ່ໄປ ຂ້າພະເຈົ້າຢາກໃຫ້ນາງໄດ້ລີ້ງກັບຄວາມຜິດຫວັງໄວ້ຈັກໜ່ອຍ ແທນທີ່ຈະຫລົງໄຫລໄຝ່ຝັນນຳຄວາມຈເຣີນຮຸ່ງເຮືອງຂອງວັດຖຸຈົນເກີນໄປ

"ມັນບໍ່ງ່າຍດີເຮົາຄຶດດອກບຸນຕາ" ຂ້າພະເຈົ້າອະທິບາຍຢ່າງສຸຂຸມ "ການທີ່ບ້ານນ້ອງຢູ່ໃກ້ເຂື່ອນ ບໍ່ໄດ້ແປວ່າຈະໄດ້ໄຟໄຕ້ກ່ອນໝູ່ ອ້າຍຊິເວົ້າໃຫ້ຟັງ ພະລັງໄຟທີ່ສົ່ງອອກໄປຈາກເຂື່ອນນັ້ນຍັງເປັນໄຟຟ້າແຮງສູງ ກ່ອນຈະນຳອອກໃຊ້ທັມດາຕ້ອງຕິດຕັ້ງໝໍ້ແປງໄຟກ່ອນ ປະການນຶ່ງອີກ ບຸນຕາຮູ້ບໍ່ວ່າ ການເອົາໄຟຟ້າເຂົ້າໃຊ້ໃນເຮືອນນີ້ ເປັນຣາຍຈ່າຍທີ່ແພງແທ້ ໆ ໄດ໋ ກ່ອນຈະວາງສາຍຕິດຕັ້ງໝໍ້ໄຟດອກໄຟ ອ້າຍເຫັນຢູ່ວຽງພຸ້ນພົດເຮືອນລະແສນສອງແສນກໍມີ ຕໍ່ຈາກນັ້ນກໍຕ້ອງເສັຽເປັນເດືອນ ໆ ຕໍ່ໄປສະນັ້ນເຮົາຕ້ອງມີໂຄງການສ້າງສາອັນໃດອັນນຶ່ງ ຈຶ່ງຈະສົມຄວນຕໍ່ໄຟມາ ເປັນຕົ້ນ *ມີການອຸສາຫະກັມ ແນວໃດແນວ*

*ນິ່ງໃຫ້ມີທາງໄດ້ກຸ້ມກັບຄ່າໄຟທີ່ຕ້ອງຈ່າຍໄປ* ຈັ້ງແມ່ນບໍ່ແມ່ນວ່າຊິສ້າງເຂື່ອນຣາຄາຕັ້ງທໍ່ໃດພັນລ້ານມຶ້ຂົນ ເພື່ອສົ່ງເຂົ້າໄຕ້ນຳໝູ່ບ້ານທີ່ມີດ້ານສິບ—ຊາວຫລັງຄາເຮືອນຈັ້ງຊຶ່ຊື່ ໆ...

ບຸນຕານັ່ງຢູ່ມິດ ໆ ທັງຂາຂອງເຮົາກໍກ້າວຕໍ່ໄປໃນຄວາມມືດມົວຊົວຂອງຍາມຄ່ຳສົນທະຍາ ໝາແສນຮູ້ຂອງບຸນຕາຊື່ບັກໝອກແລ່ນເຕົ້າຕ້ອນສະແດງຄວາມດີໃຈ ຂ້າພະເຈົ້າເຊົາຢູ່ແຄມຮົ້ວໄມ້ໄຜ່ລຽນລຳ ບຸນຕາງວາກມາຫົວໃສ່ເບັ້ນເທື່ອສຸດທ້າຍ ດວງຕາຂອງນາງສຸກໃສຢູ່ໃນຄວາມມືດຂມຸກຂມົວຂອງບັນຍາກາດ ຕື່ມຄວາມອາລັຍອາວອນແກ່ຂ້າພະເຈົ້າ ຜູ່ຍັງພັກຣິມສົບຢູ່ຕາມເຄີຍ... ຂ້າພະເຈົ້າຢາກຈະບອກນາງ *ຢາກບອກບຸນຕາວ່າ ສາມປີແລ້ວທີ່ມາຢູ່ໃກ້ຫມູ່ບ້ານ ສາມປີແລ້ວທີ່ເຝົ້າແຍງນາງມາ* ຂ້າພະເຈົ້າໄດ້ເຫັນຄວາມບ່ຽນແປງ ທຸກເມັດທຸກອະນູທີ່ເກີດແກ່ໝູ່ບ້ານ ຄົນໃນບ້ານແລະໂດຍຈຳເພາະແມ່ນແກ່ບຸນຕາເອງ ຂ້າພະເຈົ້າຢາກບອກນາງວ່າ "ມັກແລະຮັກສຸດຫົວໃຈ" ຈະຂໍເອົາຊີວິດຊາຍພອຍອາຊີບຫົວໜ້າກຸລີ ເງິນເດືອນຊາວພັນກີບນີ້ລະເບັ່ນເດີມພັນມອບຫົວໃຈໃຫ້ນາງເບັ່ນເຈົ້າຂອງ ບໍ່ວ່ານາງຈະບັນຊາໃຫ້ຢູ່ໃຫ້ຕາຍຄາໝູ່ບ້ານແຫ່ງນີ້ ຫລືເຂົ້າໄປທຳມາຫາກິນຢູ່ໃນວຽງຈັນແກ່ວເກົ່າຂອງຂ້າພະເຈົ້າກໍຍິນດີ !

ແຕ່... ຂ້າພະເຈົ້າກໍຍັງບໍ່ມີຄວາມກ້າຫານພໍຕາມເຄີຍ

ຂ້າພະເຈົ້າຕັດສິນໃຈໃໝ່ອີກ... ແລງນີ້ກ່ອນ... ແລງນີ້ກິນເຂົ້າແລ້ວຈະໝໍ້າວມາໃໝ່ ຈະບອກນາງຕໍ່ໜ້າແສງຕະກຽງ ນ້ຳມັນອັນຣິບຣີ່ ເທິງເປິງເຊັຽ...

ທັນໃດບຸມຕາກໍຈົ່ມປຸກພະວັງຂອງຂ້າພະເຈົ້າ ໃຫ້ຕື່ນວ່າ:

"ເຣື່ອງໄຟໜີ້ ອ້າຍແທວງຊິວ່າແນວໃດກະຕາມ ແຕ່ *ນາຍຊ່າງພູທິບ* ເພິ່ນບອກວ່າ ແມ່ນຈັ່ງໃດເພິ່ນກະຊິເອົາເຂົ້າໃຫ້ບ້ານເຮົາຢູ່ດອກ ເອົາເຂົ້າເຮືອນຂ້ອຍກ່ອນໝູ່ ນາຍຊ່າງມາລົມອີ່ແມ່ຫລາຍມື້ແລ້ວເດ້ ເຣື່ອງຂ້ອຍທັ້ນກໍ້ ຂ້ອຍຄືບໍ່ທັນເອົ້າໃຫ້ເຈົ້າໝັ້ງບໍ່ ? ຈັກໜ້ອຍເພິ່ນກະຊິມາເອົາຄຳຕອບ..."

ຂ້າພະເຈົ້າມິດຊ້ອຍມ້ອຍໄປ... ເຮັດແນວໃດຂ້າພະເຈົ້າຈະມີຄວາມກ້າຫານພໍທີ່ຈະບອກນາງວ່າ "ອ້າຍແທວງຂອງນາງກໍຕ້ອງການຄຳຕອບເຊັ່ນກັນ..."

ແລະເຮັດໃດຂ້າພະເຈົ້າຈະກ້າຫານ ພໍທີ່ຈະບອກນາງວ່າ *ບໍ່ວ່າແຕ່ນາຍຊ່າງພູທິບຫລືພຣະອິນທາງໃດ ກໍບໍ່ມີອຳນາດສັ່ງໃຫ້ສົ່ງໄຟເຂົ້າບ້ານໄດ້ດອກ ຫາກວ່າບໍ່*

*ແມ່ນໂຄງການຢູ່ໃນໂຄງການຂອງຣັຖບານເພິ່ນ !*

× × ×

ຂ້າພະເຈົ້າບໍ່ແນ່ໃຈວ່າ ໄຟຟ້າຈະຮຸ່ງແຈ້ງຢູ່ໃນໝູ່ບ້ານເມື່ອໃດ ແລະຍ້ອນເຫດຜົນກົນໃດກັນແທ້ ແຕ່ທີ່ແນ່ນອນກໍ່ຄື ຄືນນັ້ນຂ້າພະເຈົ້າບໍ່ໄດ້ຄືນໄປເຮືອນບຸນຕາອີກ... ຂ້າພະເຈົ້າເຂົ້າໃຈດີວ່າ ສິ່ງໃດທີ່ນາຍຊ່າງພູທິບຈະເຮັດແລ້ວ ຂ້າພະເຈົ້າບໍ່ຄວນໄປສົນ... ຂ້າພະເຈົ້າແລະນາຍຊ່າງໃຫຍ່ຍ່ອມຢູ່ຄົນລະຈຸດ ຂອງຫ້ອງຟ້າ ນາຍຊ່າງຢູ່ເທິງກາງຫ້ອງຟ້າ ຕົວຂ້າພະເຈົ້າຢູ່ບ່ອນຂອບຈຸດິນ...

ຈາກນັ້ນຂ້າພະເຈົ້າບໍ່ໄດ້ເຫັນອີກເລີຍ ພາບໜ້ານ້ຳອັນຮາບສງົບ ເງົາໄມ້ອຶນຄຶນຍອດໂອນໄກວ ແລະແສງສີທອງຂອງດວງຕາເວັນ ທີ່ໂຄຈອນລັບເຂົ້າໄປໃນສັນພູຟາກພຸ້ນ !

ຂ້າພະເຈົ້າບໍ່ໄດ້ເຫັນອີກ ບຸນຕາຜູ້ນຸ່ງສິ້ນຝ້າຍຮັດເອິກລອຍວົນວຽນຢູ່ຝັ່ງນ້ຳ ຜ່ອງຫວີດຢອກເຍົ້າຂ້າພະເຈົ້າຢ່າງລົ້ງເຄີຍແກມສຳອອຍ ບັດນີ້ຈະມີກໍ່ຄົງແມ່ນເດັກນ້ອຍໂຕແຫລ້ ໆ ຮ່າງຈ່ອຍໂຊ ຊຶ່ງໂຕນລອຍໃນນ້ຳທີ່ກິ່ນເໝັນສະເອືອນ ເພາະນ້ຳຢຸ່ອ່າວ

ແຊ່ກົກໄມ້ເນົ່າເປື່ອຍຢູ່ພ້າເຂື່ອນ ເປັນເວລາຫລາຍເດືອນເຂົ້າມາແລ້ວ.... ກໍ່ມມັ້ນຂຈອນໄກດາວພົ້ງ ສຸດທີ່ຂ້າພະເຈົ້າຫລືໃຜຜູ້ໃດຈະໄປນັ້ງຊົມຢູ່ໄດ້ອີກແລ້ວ !

"ຖ້າອີກກ່ອນ ໃຜຜູ່ນຶ່ງອະທິບາຍໃຫ້ໄທບ້ານຟັ້ງ" ຖ້າອີກຈັກປີຫລືສອງປີແລ້ວນ້ຳກໍຈະໃສສະອາດຄືນ ຝູງຄົນຈະຫລັ້ງໄຫລມາທ່ຽວຊົມທິວທັດຂອງເຂື່ອນ ໄຟຟ້າຈະຮຸ່ງທົ່ວທົ່ງວຽງຈັນ ຫົນທາງຈະຮາບພຽງປູຢາງ ປາສຈາກຂີ້ໄງ່ດິນແດງ !

ຂ້າພະເຈົ້າຢາກຕື່ມໃສ່ອີກວ່າ *ໃນເວລານັ້ນ ແຄມນ້ຳລຶກນ້ຳງື່ມ ຈະມີບັງກາໂລຂຶ້ນເປັນດອກເຫັດ* ມີສາວລາວແລະຕ່າງປະເທດນຸ່ງສົ້ງອາບນ້ຳ ຮ່ຮັດແຕ່ສ່ວນພ້ອຍຂອງຮ່າງກາຍ ມີ ບາຣ໌ກິນເຫລົ້າ ເຕັ້ນລຳ ກອດກັນ... ມີ...

ຂ້າພະເຈົ້າບໍ່ຢາກເວົ້າຣອດບຸນຕາ... ບຸນຕາຊຶ່ງດຽວນີ້ນາຍຊ່າງໃຫຍ່ໄດ້ພາໄປຢູ່ເຮືອນຫລັງງາມໃນວຽງ ຍ່າງເຊື່ອງບັງຂ້າພະເຈົ້າບໍ່ຊິຮູ້ວ່ານາງຢູ່ໃນອັນດັບທີທີ່ໃດ... ນາຍຊ່າງເພິ່ນທັງມີຄວາມຮູ້ທ່າທາງດີແລະເງິນຫລາຍ.... ຂ້າພະເຈົ້າຜິດຫລືບໍ່ ທີ່ບໍ່ໄດ້ປົກປ້ອງດວງຈ່ອງບຸນຕາໜີຈາກພັຍສັງຄົມອັນເປັນພະຍາດຊໍາເຮື້ອນີ້?

ຕອນນັ້ນຂ້າພະເຈົ້າລືມໄປແທ້ ໆ ວ່າທັມຊາດງົດງາມອື່ນ ໆ ໃນໝູ່ບ້ານ ຍັງ *ຄືກວິທຍາສາດ ກິນກິນໄດ້* ຄົນງາມ ໆ ຄືບຸນຕາ... ບໍຣິສຸດຄືບຸນຕາ.... ຊື່ຕໍ່ໂລກຄືບຸນຕາ... ຍ່ອມຖືກສັງຄົມຊູບຍ້ອມສີປອມ ໆ ໃສ່ໄດ້ງ່າຍ.... ອະນິດຈາ !.... ບຸນຕາຜູ່ປຽບປະດຸດແສງຮຸ່ງ ເບັ່ນປະທີບໃນດວງໃຈຂ້າພະເຈົ້າມາດົນແສນດົນ

ບັດນີ້.... ໄດ້ລັບເລື່ອນເຂົ້າໄປໃນວົງສັງຄົມອັນມົວມືດ ບ່ອນຂ້າພະເຈົ້າສຸດຈະຢັ້ຈ່ອງເອົາມາໄດ້ເສັຽແລ້ວ... ຄິດຮອກັບ *ດວງຕາເວັນທີ່ລັບຫລ່ຽມພູໃນຍາມແລງ ຢູ່ຝັ່ງນ້ຳອັນແສນຮັກໃນອະດີດ... ທາງຟາກສັນພູເບື້ອງພຸ້ນ ດວງຕາເວັນຈະມີແສງຢູ່ຢ່າງໃດ... ຂ້າພະເຈົ້າເດົາບໍ່ອອກ.... ໄດ້ແຕ່ເສັຽດາຍ ແລະເສັຽດາຍ !*

□ □ □

# ລາວ ແປເປັ່ນ ລາວ

❋

*ເງິນ:* ເມື່ອມັນແຜງອຳນາດອອກມາ ອຳນາດອື່ນ ໆ ຕ້ອງຍຸບຍອບຫລອບຕົວໄປໝົດ ແຕ່ວ່າດອລລາຣ໌ນຶ່ງ ກໍຕ້ອງມີອຳນາດກວ່ານຶ່ງກີບ ຮອດຫົກຮ້ອຍຕໍ່

*ເຈຣະຈາ:* ວ່ານໃຫ້ເປັ່ນການເມືອງ ແປຫລືບໍ່ແປກໍໄດ້ຄວາມໝາຍຄືເກົ່າວ່າ ແຜນການທີ່ຝ່າຍຮາໂມຍບັງຄັບໃຫ້ລາວດ່າລາວ

*ສັງຄົມ:* ວ່ານຕາມໃຈມັກ ການອອກສຽງຫລືສຳນຽງບໍ່ບັງຄັບ ແປວ່າ ອະນຸໂລມໃຫ້ແມ່ຈ້າງກັບຍາແມ່ມີສັກສິດກັນໃນວົງໄພ້

*ສິລທັມ:* ວ່ານວ່າ ສິນລະທຳ ເປັ້ນສະພາວະທັມອຸປໂລກແບບນຶ່ງ ຊຶ່ງເຖິງໃຜ ໆ ບໍ່ມີ ຫລືຂາດບົກຕົກເຮັ່ຽໄປໝົດແລ້ວ ກໍຍັງອ້າງວ່າຕົນມີໄດ້ ໂດຍບໍ່ຕ້ອງອາຍໃຜ

# ບິດຣຽນແສນແສບ

★ *ໂດຍ...ປາໃນ* ★

..ໃນທັມຊາດແທ້ຂອງສັດໂລກມີຕັນຫາຄືຄວາມຢາກ ເປັ້ນອຳນາດຝ່າຍຕ່ຳ ຄອຍປົ່ດເຂັ້ຽສັດມະນຸດໃຫ້ແລ່ນລ໊ອລົງສູ່ເຫວຊີວິດ....

*"ຫລ່າ...ລ່າ...ລ໊າ...ລ່າ..ໆ..ໆ..ໆ..ໆ.."*

*ສຽງເພງປົນສຽງເສບກີຕາຣ໌ໄຟຟ້າ ຈັງຫວະໂຈລພ໋ອຸ່ນ ໆ ດັງກ້ອງສນັ່ນຢູ່ຄັບທີບ*

ສຽງນັ້ນຄືຊິຟົດມັນໄປຮອດໂສດປະສາດ ຂອງຜູ້ທີ່ຢາກຟັງແຕ່ບໍ່ໄດ້ມາ ແລະຂອງຜູ້ທີ່ບໍ່ໄດ້ມາຍ້ອນບໍ່ຢາກຟັງ

ຫລືລາງຄົນອາດຈະກຳລັງຄິດບ້ອຍແຊ່ງສຽງອຶກກະທຶກນັ້ນແຈວແສບອາຣົມນີ້ຢູ່ໃນໃຈກະບໍ່ຮູ້...

ກະບໍ່ຮູ້ອີກຄືກັນວ່າ ພວກອັບປີຂີ້ໂກະຜູ້ນັ້ນກໍ່ງຶດຮ້ອງເພງພາສາເມລິກາ–ລິແຮ້ງຈົນດໍາແຕກນີ້ ມັນພາກັນເຂົ້າໃຈສໍານວນພາສາວາຈາຖ້ອຍຄວາມຂອງເພງເຂົາຫລືບໍ່ ?

ຫລືວ່າພວກມັນຊິຈັດຢູ່ໃນປະເພດຈົກເມື່ອເພງພາສາອັງກິດເປັນພາສາລາວມາແອບຮ້ອງ ເມື່ອຍເກືອບລົ້ມເກືອບຕາຍມັນກໍ່ບໍ່ຮູ້ຄືກັນ...ອັນນີ້ໄດ້ຍິນແຕ່ເຂົາວ່າ

ໄດ້ຍິນເຂົາຫລາຍຄົນວ່າພວມຮິບປີ້ອັງກິດ ເມລິກາ ບັນດາສິງອົມຄວັນ ມັກນິຍົມກັນຊາຢາຝິ່ນ ສເວີຍກາເນແບບນອກຄອກຢູ່ເມືອງເຮົາຫລາຍຄົນ ພັ້ງນັກຮ້ອງຈໍາພວກທີ່ຄົ້ນຫາສັນຊາດແລະສັນດານບໍ່ຄ່ອຍພໍ ນີ້ຂັບຮ້ອງແຫກປາກເປັນເພງພາສາຂອງເມລິກາ-ອັງກິດແລ້ວບໍ່ອາດຊຶມຊາບໄດ້ກໍມີ ວ່າມັນແປວ່າຫຍັງ...ກໍ່ຊ່າງ

ວ່າມີ

ຊ່າງວ່າມີ ໃຜອີກໃນໂລກນີ້ທີ່ສາມາດອາດຫານຕົບແຕ່ງແປງໂສມຈິ່ງຜົມຍາວ ໆ ແສນໃສໂຄກແລະເປື້ອນຄວາມຮູ້ສຶກເມື່ອສັມຜັດກັບຈັກຂຸວິນຍານໄດ້ຄັກເຕັມມັກທີ່ພວກສາມສີ່ໂຕ ຊຶ່ງກຳລັງດີດກີຕາຣ໌ຊັກແຫງະຊັກແງ້ນຢູ່ເທິງເວທີດຽວນີ້ໄດ້.

ບໍ່ຮູ້ອີກຄືກັນວ່າພວກສາມສີ່ໂຕນີ້ ມັນພາກັນໄດ້ແບບຢ່າງປະເພນີມາແຕ່ຫ້ອຍຮ່ອມພູຜາບ່າດົງພົງໃດ ກໍຈຶ່ງວ່າຕົບແຕ່ງແປງໂສມໄດ້ຄັກພິລຶກ ຂນາດວ່າເມື່ອພິຈາຣະນາແລ້ວຈະເຫັນໄດ້ຢ່າງແຈ່ມແຈ້ງວ່າ ພວກມັນນັ້ນມີຮູບຮ່າງໜ້າຕາພ້ອມດ້ວຍລັກສະນະທ່າທາງອີກກະມົລສັນດານຄືກັນປານວ່າພິມດຽວກັນເລີຍ ກັບເດັຽຣະສານບຸດຊອດຣະຫວ່າງສຸນັກກັບວານອນ

ຂໍດ່າພວກມັນຄັກ ໆ ຈັກເທື່ອກ່ອນເທາະ!! ໃຜຢ່າພ້າວທັກທ້ວງຂວາງຂັດອາຣົມຍາມນີ້ເລີຍ.

ເຈັບໃຈພວກມັນຍັງບໍ່ແລ້ວ....

ແລ້ວເປັນຫຍັງຊິບໍ່ເຈັບໃຈ ໃນເມື່ອວ່າ....

“ອີ່ແບ”

ຜູ່ສາວແກວນ້ອຍພວມພໍດີ ມີຖິ່ນຖານຮ້ານຄ້າຢູ່ຄຸ້ມຕລາດເກົ່າ ຊຶ່ງມີຫລາຍຄົນຜີປອງຈ້ອງແນມຫາໂອກາດບໍ່ຂາດສາຍ

ເພື່ອເຂົ້າປະຊິດຫາບທາມ ຖາມຍົກຕຳແໜ່ງຮອງຜູ້ບັງຄັບແຂງໃຫ້ບໍ່ອຶດບໍ່ຢາກ

ກະແມ່ນພວກນີ້ແຫລະ ທີ່ເອົາໄປເຂົ້າໂຮງຮຽນສົ່ງເສີມອາຊີບ

ຣາຍງານຂ່າວຕໍ່ມາຊາບວ່າ ດຽວນີ້ຕອນກາງຄືນ....
"ອີແບ"

ປະຈຳການຢູ່ແຖວ ໆ ຄຸ້ມສີເມືອງວ່າຊັ້ນເດ້ !

ສ່ວນກາງເວັນຈະພົບພໍ້ "ອີແບ" ໄດ້ຢູ່ມາໄຮ່ດຽວຄຸ້ມທົ່ງ ໃກ້ ໆ ກັບທົ່ງສ້າງນາງ ຢູ່ບ່ອນເຮືອນສອງຊັ້ນໝາຍເລກ...
(ອຸ໊ຍ ! ບໍ່ບອກຊ້ຳດອກ ຈັກໜ່ອຍຄົນຮູ້ຈັກຮັກແພງກັນຫລອນຮູ້ຊື່ດວ່າເຮົາເຄີຍ....)

ມີແມ່ຍິງຫລາຍຊາດອີກຫລາຍຄົນ ທີ່ພວກມັນຫລອກພາໄປເຂົ້າໂຮງຮຽນສົ່ງເສີມອາຊີບຄື "ອີແບ" ແລະໃນການຕໍ່ມາແມ່ຍິງພວກນັ້ນກໍ່ມີອາຊີບຄື "ອີແບ" ໄປຕາມລຳດັບ ຄື ມີອາຊີບ "ແບໃຫ້" ໃນຣາຄາຕ່າງ ໆ ກັນຕາມແຕ່ຮູບໂສມໂນມພັນ ແລະປີການໃໝ່ເກົ່າ

ພວກມັນເບີ່ນມານສັງຄົມ

ແຕ່ວ່າສັງຄົມຊ້ຳເບີ່ນຜູ້ອຸປການະ ອູ້ມຊູພວກມັນໄວ້

ໃຫ້ມີໂອກາດມີກຳລັງຢຽບຍ່ຳແລະຊັກຊວນຄົນໂງ່ໃຫ້ຊ່ອຍພວກມັນ ຢຽບຍ່ຳທຳລາຍຣິດຄອງອັທມະທັມ ແລ້ວພໍ່ຮອດມື້ງາມຍາມດີພວກມັນກໍເວົ້າຄ່ອຍ ໆ ພໍໄດ້ຍິນຫລາຍຄົນເກືອບທົ່ວເມືອງໃຫ້ຟັງວ່າ

"ສູ ໆ....ສູຮູ້ບໍ່ ? ລູກສາວທ່ານ....ກູຮຽບຮ້ອຍແລ້ວຕັ້ງແຕ່ມັນພວມນົມຕຸ່ມພຸ້ນ"

ເວົ້າມາທໍ່ໃດແຮ່ງເຈັບໃຈຂົ້ນທໍ່ນັ້ນ

ຣະວັງມຶງເທາະ ! ບັກລູກຊອດໝາປົ້ນລິງ

ບັກດິດກິຕາຣ໌ເບສທັ້ນແຫລະໂຕການ

ມຶງລະໂຕການຍົວະກູວ່າຊິພາໄປເບິ່ງເພີ່ມສ້າງ "ພຣະພຸທຮູບປາງສັຍຍາດ" ຢູ່ບ້ານຊຽງຄວນ....ມຶງຫລອກກູໄປກູຍັງເຈັບໃຈບໍ່ລືມ....ເຈັບໃຈຈົນບໍ່ຮູ້ວ່າຊິດ່າມຶງວ່າບັກຈັ່ງໃດ ຈັ່ງຊິສົມເຈັບສົມແຄ້ນ....

ຖ້າຊອມເບິ່ງ ລອງພໍ່ກູຫລົງວາງປືນນ້ອຍບອກນັ້ນໄວ້ເຮືອນມື້ໃດເທາະ....ຄັນໜັງສືພິມບໍ່ໄດ້ລົງຂ່າວ

"ສາວນ້ອຍຂ້າລ້າງແຄ້ນບ່າວຂີ້ໂກະນັກເສບ ປະຈຳວົງດົນຕຣີ...."

ໂລດນ່ະ....ມຶງຖ້າຊອມເບິ່ງ !

ມຶງຫລອກກູວ່າຊິພາໄປເບິ່ງພຣະພຸທຮູບໃຫຍ່ປາງສັຍ-

ຍາດ ກູຮູ້ວ່າຄວາມນີ້ແປວ່າພຣະເຈົ້ານອນ....ຂາດໄປແລ້ວມັນບໍ່ແມ່ນພຣະເຈົ້ານອນ

ມັນແມ່ນກູ "ອີບຸສບາ" ນີ້ຕ່າງຫາກ ທີ່ມຶງເອົາໄປນອນຢູ່ກາງບ່ຳເລີກໃນມື້ອັນທີດຫວ່າງປາຍເດືອນແລ້ວນີ້

ມຶງບອກກູວ່າຊິພາໄປບ້ານຊຽງດອນ ແຕ່ວ່າພໍໄປຮອດແລ້ວກັບມາ ຈຳແມ່ນກູພີ່ຕ່າງຫາກທີ່ຕ້ອງມາດອນຄາງຮ້ອງໄຫ້ຮ່ຳໄຮ....ບໍ່ແມ່ນຊຽງ

ຕໍ່ຈາກນັ້ນມາອີກ....

ໂອຍກູບໍ່ຢາກບັນທຶກລົງໄປໃຫ້ມັນເປັນຣາຄີແກ່ເຈັ້ຍຂາວບໍຣິສຸດແຜ່ນນີ້ເລີຍ...

ຕໍ່ມາອີກສອງອາທິດ....

ຢູ່ເຮືອນສອງຊັ້ນມາໄຮ່ດຽວຄຸ້ມທັງມື້ມັນ

ບຸນວາສນາກູຍັງດີ

ເທວະດາເພີ່ນຍັງເມດຕາດົນບັນດານ ໃຫ້ມຶງພາກູໄປພົກັບ "ອີແບ"

ແລ້ວອີແບກໍຜະເອີນປິດເບື້ອງຫລັງແຜນການອຸບາດຂອງມຶງໃຫ້ກູຟັງກ່ອນ......ກ່ອນທີ່ມຶງຊິເອົາກູໄປລ້າຍເຂົ້າຫ້ອງ ກັບເຖົ້າແກ່ຕັນຫາໜ້າມືດ ຈຶ່ງມຶງຕິດຕໍ່ໃຫ້ມາເບິ່ງໂຕກູຢູ່ເຮືອນອີນາຍ

ແມ່ໃປ່ມີ້ນັ້ນ

ພອກພ້າຊາດໝ....

ຂໍໃຫ້ກູດ່າມຶງດັກ ໆ ສາເທາະ ເກີນວ່າກູເຈັບໃຈ

ແຮງຊະ !

ພອກບໍ່ມີສາສນາໃນສັນດານ....ມຶງຊື່ວຂນາດວ່າອ້າງ

ອີງເອົາພຣະພຸທຮູບມາລ້ມາອ່ອຍເພື່ອຈິໄດ້ໃນສິ່ງທີ່ມຶງຢາກ ຍ້ອນຕົນ

ທາພ້າມືດ

ກູບໍ່ວ່າດອກ ຖ້າແມນວ່າກູພໍໃຈເມັດນຶ່ງແດ່ກະແດນ

ຊາດນີ້ກູຍັງບໍ່ຄິດວ່າຊິຕັສຮູ້ເປັນອໍຣະຫັນເທື່ອ ແຕ່

ວ່າກູກະຢາກມີຜົວຢ່າງສົມກຽດ ບໍ່ແມ່ນໄປໄດ້ກັນຢູ່ໂຮງແຮມ

"*ປອກ*" ດີມຶງພາກູໄປມື້ນັ້ນ....

ຄິດພໍ່ມື້ໄປເບິ່ງພຣະເຈົ້ານອນຢູ່ບ້ານຊຽງຄວນ ຍັງບໍ່

ລືມ "ອ້າຍສອນ"

ມື້ອັນທິດນັ້ນ ອ້າຍສອນກະມັດໄວ້ແລ້ວເປັນດິບດີ

ວ່າໃຫ້ໄປພົ້ງໂຕ້ອາທິຢູ່ສຖານີວິທຍຸນຳກັນ ໄປນຳເລົາແລ້ວກະແລ້ວ

ໄປນຳເລົາແລ້ວກໍດຶງບໍ່ຕ້ອງມານັ່ງຂຽນບັນທຶກເທິງນ້ຳຕາແນວນີ້

"ອ້າຍສອນ"

ກະຮູ້ຢູ່ພໍແຮງວ່າ ເລົາເຂົາ ອ.ສ.ພ.

ກະຮູ້ຢູ່ພໍແຮງວ່າເລົາຮຽນທັມມະທັມໂມ

ເລົາບໍ່...ບໍ່ມີສັມດານດີບັກອັນນີ້

ແລ້ວຖ້າແມມໄປນຳເລົາກະໝູ່ເບັ້ນຝູງລ້ອນແຕ່ມີນິ-ສັຍດີ ໆ ຈັນຍາມາຣະຍາດຮຽບຮ້ອຍເວົ້ານົວທົວມ່ອນ

ສົມນ້ຳໜ້າຢາກເສືອກຫລົບລີ້ໜີນັດອ້າຍສອນ ສົມນ້ຳໜ້າອີບຸສບາ

ກັບອ້າຍສອນນີ້ຮູ້ຈັກຮັກແພງກັນມາກະດົນ

ໄວ້ວາງໃຈເລົາໄດ້ຕູ່ແມວ

ຍັງເສືອກບໍ່ໄປພັ້ງໂຕ້ວາທີຢູ່ວິທຍຸ

ກະເລີຍໄດ້ໄປເບັ້ນນາງສັຍຍາດ ກັບບັກໝາລູກຊອດລິງຢູ່ໂຮງແຮມປອກ

ໝົດແລ້ວຄວາມສາວ

ໝົດສ້ຽງແລ້ວພົຣົມຈາຣີ ຊຶ່ງຍິງນຶ່ງມີໄດ້ເທື່ອດຽວໃນຊີວິດ

ໝົດແລ້ວຄວາມບໍຣິສຸດ

ແລ້ວກໍຕ້ອງມານັ່ງຂຽນບັນທຶກເສັຽນ້ຳຕາໃນຄືນນີ້

ສຽງເພງຮ້ອນ ໆ ກຳລັງເສບກ່ອມອາຣົມຜົ້ນອັນລາມົກຂອງພວກສັມດານຕ່ຳຕໍ່ໄປ

247 VII ห้ามจำหน่าย

ພວກມັນຍັງມີກຽດມີໜ້າ ໄດ້ມາເສບຢູ່ເຮືອນດອງຂ້າງເຮືອນເຮົານີ້ຢ່າງທ້າທາຍສິລທັມ

ເບິ່ງຊົງສັງຄົມຄືຊິນິຍົມມັນ ຈຶ່ງຍິນຍອມພ້ອມໃຈໃຫ້ພວກມັນມາຊ່ອຍເສບກ່ອນ ເພື່ອພອກພູນກິເລດ....ເພື່ອຫລໍ່ລ້ຽງຕັນຫາໃຫ້ໜາແໜ້ນແລະຖາວອນ

ຄິດພໍ້ອ້າຍສອນ ເມື່ອປາສຈາກແລ້ວຊຶ່ງຄ່າຂອງຍິງ

ຄິດພໍ້ ບົດຣຽນຕອນນຶ່ງໃນຢົ້ມຣຽນທັມມະຂອງ ອ. ສ.ພ.

ບົດນັ້ນອະທິບາຍວ່າ

*“ໃນທັມຊາດແທ້ຂອງສັດໂລກ ມີຕັນຫາຄືຄວາມຢາກເປັນອຳນາດຝ່າຍຕ່ຳຄອຍປົດເຊັ້ຽສັດ-ມະນຸດໃຫ້ແລ່ນລົ້ວລົງສູ່ເຫວຊີວິດ.....ຫົນທາງພາໄປຍັງເຫວເລິກແລະມືດມົນນີ້ ໄດ້ແກ່ກາມາຣົມ ຄວາມໃຄ່ທີ່ແຝງກາຍມານຳຄວາມຮັກປະກອບດ້ວຍຄວາມຂາດສະຕິ “ສິລ” ເປັນກຳແພງຮອບນອກ ຈຶ່ງກັ້ນກາງຕັນຫາຝ່າຍຕ່ຳໄວ້ບໍ່ໃຫ້ມາກໍ່ກວນດຶງຈ່ອງຈິດມະນຸດໃຫ້ໄຜ່ຄະນຶງໃນ “ຮັກທີ່ເຈືອປົນດ້ວຍກາມາ” ອັນເປັນຫົນທາງດຳເນີນສູ່ຄວາມມືດມົນແຫ່ງຕັນຫາ...”*

ຄິດພໍ້ອ້າຍສອນ....

ຄິດພໍ້ ບົດຮຽນຂອງອ້າຍສອນ....

ຄິດເສັ້ຽດາຍໄປພົ້ງໂຕ້ອາທິ....

ຄິດ....ຄິດ....

ຄິດຢາກສາຣະພາບຄວາມໃນໃຈອັນຕຶບຕັນບົ່ມຣ້ອນ ສູ່ອ້າຍສອນພົ້ງ

ຄິດຢາກຕັ້ງຕົ້ນຊີວິດໃໝ່ ໃນອ້ອມແຂນອັນອົບອຸ່ນ ຂອງ ອ.ສ.ພ.

ຄິດຢາກຂ້າບັກຊາດໝາລູກຊອດລີ່ງ ຊຶ່ງເຄີຍອ້າງຄວາມ "ຮັກຮ້ອນແຮງ" ເພື່ອພຽງແຕ່ຢາກ ປິດເປື້ອງຕັນຫາຂອງມັນພຽງຊົ່ວຫວ່າງຊົ່ວຍາມ....

ຄິດຢາກປະຈານບັກສັນດານບໍ່ມີສາສນາ ຊຶ່ງເຄີຍອ້າງອິງເອົາພຣະບຸທຮູບນອນເພື່ອແປງທາງເອົາຜູ້ສາວໄປນອນ..

ຄິດຢາກ....

*"ສາທຸ !"*

*ຂໍໃຫ້ຍົມມະບານ ອ້າແຂນຕ້ອນຮັບມັນດ້ວຍຄວາມເຕັມໃຈ ແລະຂໍໃຫ້ອະເວຈີຈົ່ງເປັນທີ່ເພິ່ງຂອງມັນໃນທີ່ສຸດແຫ່ງຊີວິດ....* ■ ■ ■

## " ລາວເກົ່າ "

ອສັຈັນ ໃຈກຸ້ງ ກຸມກິນປາບຶກໃຫຍ່
ປາຊິວ ໄລ່ສວາບແຂ້ ພິໄປຊຸ້ມຢູ່ຫລິບຫິນ
ອສັຈັນ ໃຈໂອ້ ເຂົ້າສາມຢູ່ໃນໂອຍໍຄໍຕອດໄກ່
ປາຍໍ້າງ ຢູ່ຫ໊ງ ທະຍານເຕັ້ນຄຸບແມວຯລຯ

ສ. ວິຣະວົງສ໌

## *ລາວ ແປເປັນ ລາວ*

*

*ໂຊກລາບ:* ເຮົາຕ້ອງເຊື່ອເຣື່ອງໂຊກລາບນີ້ຢູ່ແດ່ ຢ່າງໜ້ອຍກໍພໍໃຫ້ມີເຣື່ອງເວົ້າໃນກໍຣະນີທີ່ຜູ້ເຮົາຊັງໜັງໜ້າ ເກີດໄດ້ດີມີມັ່ງຂຶ້ນມາພາຍລຸນ

*ດັດຈະຣິດ:* ແມ່ຍິງຈະຕ້ອງບອກວ່າ "ນ້ອງບໍ່ເຄີຍວ່າ ຊິມີຜູ້ຊາຍກ້າມາຈັບມືຖືແຂນຄືອ້າຍນີ້ຈັກເທື່ອ !" ກ່ອນທີ່ຊິໂມ່ນຢາຄຸມກຳເນີດເມັດທີ 24 ເຂົ້າປາກ ເພື່ອປ້ອງກັນບໍ່ໃຫ້ເປັນໂຣກໃສ້ຕິ່ງອັກເສບ

*ຕາຍ:* (ດັບແນວ) ຊາດອື່ນຕາຍກະຊ່າງຫົວມັນ ບໍ່ແມ່ນຊາດເຮົາ ຄົນຊາດເຮົາຕາຍກະບໍ່ເປັນຫຍັງ ບໍ່ແມ່ນຄົນບ້ານເຮົາ ຄົນບ້ານເຮົາຕາຍກະແຄນຢູ່ ບໍ່ແມ່ນຄົນເຮືອນເຮົາ ຄົນເຮືອນເຮົາຕາຍກະຈົມໃຈຢູ່ ແຕ່ກໍຍັງດີບໍ່ແມ່ນໂຕເຮົາເອງຕາຍ...

# ສ່ຳນັ້ນແຫລະຜູ່ຊາຍ!

* *ໂດຍ ດວງຈ່ຳປາ* *

☆ ອ້າຍບ່ໄດ້ມິເຈຕນາເລິຍ ອ້າຍເມົາຂມາດໝັກ... ອ້າຍໝົດຄວາມອົດທົນຕ່ການຍົວະເຍົ້າຂອງເຂົາ.... ອ້າຍຕົກເປັນທາດຂອງອາຣົມຊົ່ວອູບນຶ່ງ !!!

*ວັນນາ ມີເຫດຜົນສ່ວນຕົວພໍສົມຄວນ ໃນການປະພຶດຕົນເປັນຄົນໜ່າຍໂລກ* ຈົນເຖິງກັບເອົາຊີວິດອັນສົດໃສຂອງວັຍສາວ ໄປຖິ້ມໄວ້ນະທີ່ພັກນັກຮຽນຍິງຢູ່ສະຖາບັນການສຶກສານີ້ແຫ່ງນຶ່ງໃນນະຄອນຫລວງ ໃຜ ໆ ກໍຮູ້ເຫັນວ່າ ວັນນາແພງໝ່າຍສັງຄົມຢ່າງບໍ່ຍອມຫລຽວຄືນຫລັງ ນາງສລະວິຊາຄວາມຮູ້ ແລະຕັ້ງໜ້າເອົາຈິດໃສ່ໃຈເສັງຕໍ່ວຽກການຂອງນາງ ຈົນວ່າພາຍໃນປີດຽວທີ່ໄປເປັນຜູ້ດູແລປະຈຳຫໍພັກແຫ່ງນັ້ນ ລູກສິດຍິງເປັນຮ້ອຍ ໆ ແລະຄູບາອາຈານທົ່ວໂຮງຮຽນຕ່າງກໍນິຍົມຍົກຍ້ອງ ແລະໄວ້ວາງໃຈນາງດູຜູ່ນັກສຽນຜູ່ນີ້

ນາງເປັນຄົນປາກເຊໂດຍກຳເນີດ ຂນະນີ້ອັຍເຕັມຊາວທີ່ນັ້ນ ແຕ່ທ່າທາງສຸຂຸມ ປາກໜ້ອຍ ຫົວຍາກ ເພດບໍ່ແຕ່ງຫາກຈະຖາມນາງວ່າ ເຫດໃດຈິ່ງອ່າຍຫລັງໃສ່ຄວາມເບີກບານຂອງຊີວິດວັຍສາວ ແນ່ນອນນາງຄົງຢາກຕອບຢ່າງບໍ່ອັດອໍາວ່າ

ຜູ່ຊາຍເຮັດໃຫ້ນາງເຂັດຫລາບ...

ມີຄົນນິນທາລັບຫລັງວ່າ ວັນນາເຄີຍມີຄວາມຮັກສລັກຈິດຢູ່ກັບຊາຍຜູ່ນຶ່ງໃນອະດີດ ແຕ່ຕາວວັນນາຍັງອາຍຸ ໑໕ ປີທີ່ນັ້ນ !

*ອຸ່ນເຮືອນ* ຊາຍຜູ່ນັ້ນ ລາງທ່ານອາດຈະຮູ້ຈັກ

ກັບເຂົາດີ ອຸ່ນເຮືອນເປັນຊາຍທີ່ຊົ່ວຊ້າສາມານບໍ ຫລືຫາກວ່າທັງສອງຖືກກີດກັນບໍ່ໃຫ້ຮັກ...? ວັນນາຈຶ່ງໝອງໄໝ້ຢູ່ກັບອະດີດ ຈົນບໍ່ຍອມຍິ້ມແຍ້ມໃສ່ປັດຈຸບັນຊຶ່ງປາສຈາກອຸ່ນເຮືອນດັ່ງນີ້ ? ບໍ່ເລີຍ ທຸກຄົນທີ່ຮູ້ຈັກອຸ່ນເຮືອນຍ່ອມຈະຍົກຍ້ອງສເມີວ່າ ເຂົາເປັນຜູ້ຊາຍລາວທີ່ມີຄຸນສົມບັດຂອງຜູ້ຊາຍຂັ້ນມາຕຖານສາກົນ ກ່າວຄືເປັນຜູ້ຊາຍຊນິດໃນຝັນຂອງຜູ້ຍິງທຸກຄົນ ສຸພາບ ອ່ອນຫວານ ແຕ່ສລາດສຸຂຸມ ມີວິຊາຄວາມຮູ້ຂັ້ນດີ ຄືເປັນນັກສຶກສາຈາກປະເທດນອກຮັບຕຳແໜ່ງທີ່ເໝາະສົມໃນກະຊວງການທີ່ກ້າວໜ້າທີ່ສຸດ ຊາຍຜູ້ນີ້ດຳເນີນຊີວິດຢ່າງມີຣະບຽບແບບແຜນ ອະນາຄົດຂອງລາວສົດໃສ ໝູ່ຝູງຮັກຫອມ ຍາດພີ່ນ້ອງບໍ່ມີຫລາຍ ແຕ່ຕຳແໜ່ງອະທິບໍດີໃຫຍ່ຢູ່ບໍ່ໄກເກີນຢື້ເລີຍ ທັ້ງນີ້ອຸ່ນເຮືອນຍ່ອມບໍ່ຕ້ອງການ "ແລ່ນ" ທາງອ້ອມດອກ ຫາກແຕ່ຜູ້ໃຫຍ່ຈະເຫັນດີເຫັນງາມໃຫ້ລາວເອງ ໂຮມຄວາມແລ້ວອຸ່ນເຮືອນບໍ່ມີຫຍັງເປັນຕາຕິເລີຍ ຜູ້ຊາຍຂນາດນີ້ສົມແລ້ວທີ່ຜູ້ຍິງຈະຢາກໄດ້ເປັນຄູ່ຊີວິດ

ປີນັ້ນວັນນາຮຽນຢູ່ປີສຸດທ້າຍ ຂອງມັທຍົມພາກຕົ້ນອາສັຍຢູ່ກັບອາແລະອາວເຂີຍ ນາງເປັນກຳພ້າ ໃຊ້ຊີວິດທັມດາ ໆ ຮຽນໜັງສືແດ່ ລ້ຽງຫລານຊ່ອຍອາແດ່ ແອບເຮັດຢູ່ເຮັດກິນຈົນຊຳນານແດ່ ເປັນທີ່ຮັກຫອມຂອງຜູ້ອຸປກາຣະ ວັນນາຫາກໍ່ຍ້າຍມາ

ແຕ່ປາກເຊເມື່ອແມ່ໝົດອາຍຸ ການຮຽນໃນຕົ້ນປີຈຶ່ງຝືດ ເພາະວິຊາຕົນອ່ອນກວ່າພວກວິທຍາລັຍວຽງຈັນ

*ອຸ່ນເຮືອນກ້າວເຂົ້າມາໃນວົງຊີວິດ ຢ່າງມິດ ໆ*

ເຂົາກັບຈາກປະເທດນອກ ດ້ວຍປະລິນຍາອັນສູງຄ່າ ພໍມາຮອດກໍມີຕຳແໜ່ງດີໆຄອງຖ້າມີເຮືອນຫລວງຢູ່ ຣົດຫລວງຂີ່ ແລ້ວມາຮູ້ຈັກກັບອັນນາຢ່າງທັນດາ ເພາະເຂົາເປັນຜູ້ຮັກແພງກັບພັນໂທເພົ້າ ອາເຂີຍຂອງອັນນາ ຫລາຍມື້ຫລາຍວັນກໍຖືກເຊີນກິນແລງນຳ ແລະຫລາຍມື້ຫລາຍວັນໄປ ພັນໂທເພົ້າກໍຄິດພໍ້ວ່າອຸ່ນເຮືອນສຳເຣັດປະລິນຍາຝ່າຍວິສວະກັມໂຍທາ ຕ້ອງເປັນຄູສອນວິຊາຈຳພວກເລກໄດ້ດີ ຈຶ່ງອອກປາກບອກໃຫ້ສອນຫລານແດ່

ຫລານ ! ແມ່ນແລ້ວ ທຳອິດອັນນາກໍເປັນຫລານເອີ້ນອຸ່ນເຮືອນວ່າ:

"ອາວເຮືອນ"

ສອນເລກໃຫ້ຍາມແລງ ຫລັງຈາກກິນເຂົ້າແລ້ວ

ຕໍ່ມາກໍພາຫລານນ້ອຍ ໆ ແລະອັນນາ ຊຶ່ງປຽບຄືພີ່ລ້ຽງໄປກິນນ້ຳ ເບິ່ງຊີເນ ໄປທ່ຽວທ່າເດື່ອ ຯລຯ

ແລະແລ້ວບໍ່ພໍເທົ່າເດືອນ ໃນແລງກ່ອນມື້ອັນນາຈະ

ໄປປາກເຊເພື່ອຢາມບ້ານເກີດໃນໂອກາດກຸດສົງການ... ອຸ່ນເຮືອນກໍບໍ່ຍອມລົງເຮືອນຈາກໄປງ່າຍ ໆ ດີເດີຍທຸກຄືນ

"ພໍ່ເຮືອນບອກເອື້ອຍມາອອກໄປຫາ" ຫລານນ້ອຍອັຍ ໙ ຂວບເຂົ້າມາບອກ ອັນມາພ້າວວາງທີບທີ່ຈັດແຈງຢູ່ ແລະອອກໄປຫາ "ອາວເຮືອນ" ຢ່າງບໍ່ຮູ້ສົນອີກຝ່າຍນຶ່ງເລີຍ

"ມາຊິໄປແຫ້ ໆ ຫວ໊ະພີ້ ?"

"ໂດຍ ພວມແຕ່ງທີບຂນ້ອຍ" ອັນມາບອກຕາມຊື່

"ນັ່ງລົມກັນຈັກບຶດກ່ອນຕິອັນມາ"

ຜູ່ອາວຸໂສກ່າວເຊີນຊວນ ອັນມານັ່ງລົງສົ້ນຕັ່ງນວມຍາວ ອຸ່ນເຮືອນຢ່າງອ້ອມມານັ່ງຊື່ໜ້ານີໂຕະເຕັ້ຽຂັ້ນກາງ ຂນະນັ້ນພັນໂທເພົ້າແລະພັນຣະຍາພາລູກຂຶ້ນເມືອນອນແລ້ວ ພາຍໃນຫ້ອງຮັບແຂກກິນເຂົ້າທີ່ກວ້າງ ຈຶ່ງມີແຕ່ຂະເຈົ້າສອງຄົນ

"ມາ !" ສຽງຂອງອຸ່ນເຮືອນຕ່ຳເສົ້າ ຄືມີອາຣົມອັນປລາດກົດດັນຢູ່ພາຍໃນ

"ພັ່ງອ້າຍເວົ້າກ່ອນ ແລະເຊົາເອີ້ນອາວເຮືອນເທາະ *ເຮົາມີສິດທີ່ຈິຮັກກັນໄດ້* ບໍ່ແມ່ນບໍ ຫລືມາເຫັນອ້າຍເຖົ້າເກີນໄປ?" ທັງເວົ້າທັງຈ້ອງເບິ່ງຕາຂອງຍິງສາວຈົນທາງນ້ອຍ ພ່າວຫລົບລົງເບິ່ງພື້ນເຮືອນ ຫົວໃຈເຕັ້ນຕຶກ ໆ ຂຶ້ນມາ ຈົນຊິຫລຸດ

ຈາກເອີກ !

"ຫື ນາຕອບອ້າຍແມ້ ອ້າຍເຖົ້າເກີນໄປບໍ່ ດຽວນີ້ ອ້າຍຢາກບອກໃຫ້ນາຮູ້ວ່າອ້າຍຮັກນາ ເອົ້າ–ຮັກຫລາຍ ນາຈິຕອບ ໄດ້ບໍ່ ?

"ຂນ້ອຍບໍ່ຮູ້ ອາວເຮືອນ.... ເອີ... ຖາມ ໆ ອາ ແກ້ວ...."

ອັນນາຖິ້ມໃສ່ອາ ຍ້ອນຕົກໃຈທີ່ຖືກໂຈມຕີເອົາຄຳ ຕອບ ຢ່າງບໍ່ໄດ້ຄາດຄິດມາກ່ອນ

"ຖາມແລ້ວ ອ້າຍຖາມນາງແກ້ວແລ້ວນາຍເພົ້າກໍບໍ່ ໄດ້ຂັດຂ້ອງດອກ ອ້າຍບອກຂະເຈົ້າວ່າ ອ້າຍລັກມັກອັນນາມາແຕ່ ດົນແຕ່ບໍ່ກ້າປາກ ນີ້ກໍ່ຈອນມາຢູ່ມິດ ໆ ວ່າຈີມີຜູ້ອື່ນບໍ່ ຜາກົດວ່າ ນາບໍ່ມີໃຜແມ່ນບໍ່ ນອກຈາກວ່າຈີມີຢູ່ທາງປາກເຊພຸ້ນບໍ ?" ອຸ່ນ ເຮືອນເວົ້າລ່ຽນໄຫລເພາະນ້ຳສຽງເປັ້ນປົກຕິດີຂຶ້ນ ພາຍຫລັງທີ່ໄດ້ ຖ່າຍເທຄວາມໃນໃຈອອກແດ່ແລ້ວ

"ບໍ່ມີ ຂນ້ອຍບໍ່ມີໃຜ" ອັນນາພ້ຳວປະຕິເສດສຽງ ແຂງຢ່າງເພີໂຕ

"ແໝ–ຄັນບໍ່ມີແລ້ວ ນາລັງກຽດອ້າຍຫຍັງຈັ້ນ ?

"ບໍ່ລັງກຽດ ຂນ້ອຍບໍ່ໄດ້ລັງກຽດ !"

"ບໍ່ລັງກຽດຄິດຮັກແຕ່ບໍ່ລະ ?"

ທີ່ນັ້ນເອງອັນນາກໍ່ປູ້ນຍາ ຈົນຕາແຈບໍ່ຮູ້ຈະຕອບ ເປັນອັນວ່າຕ່າງຄົນຕ່າງກໍ່ລັກພໍໃຈກັນມາແຕ່ດົນ ເຣື່ອງຈຶ່ງຕົກລົງກັນງ່າຍ ໆ

ຄືນນັ້ນກວ່າອຸ່ນເຮືອນຈະລາເມືອ ກໍ່ເດີກຈົນໄກ່ຂັນເທື່ອນຶ່ງສອງເທື່ອ.... ທັງສອງລົມກັນດ້ວຍພາສາຮັກ ຢ່າງບໍ່ພໍເປັນ ຕົກລົງກັນວ່າໃຫ້ອັນນາເມືອຢາມບ້ານແລະພ້າວກັບມາ ເພາະດຽວນີ້ກາຍເປັນຂວັນໃຈຂອງ "ອາວເຮືອນ" ເສັຽແລ້ວ

"ອ້າຍເປັນຫ່ວງບໍ່ຢາກໃຫ້ຢູ່ໄກຕາດົນ ນີ້ຖ້າໄປນຳໄດ້ອ້າຍໄປແລ້ວ ແຕ່ເວລານີ້ອຽກພອມຄາມີ ປະໄປບໍ່ໄດ້ແທ້ ໆ"

ອັນນາຮູ້ສຶກອົບອຸ່ນໃຈຢ່າງແປກປລາດ ເຖິງແມ່ນໄປຢາມບ້ານທີ່ປາກເຊ ກໍ່ບໍ່ຄິດມ່ວນຍິນທີ່ບາດມາພໍ້ໜ້າອຸ່ນເຮືອນ ! ຕໍ່ຈາກນັ້ນທັງສອງກໍ່ເຕັມໄປດ້ວຍໂຄງການອັນງົດງາມ ສຳລັບອະນາຄົດ ອີກສອງສາມເດືອນອັນນາກໍ່ຈະເສັງດີປໂລມ ແລະຍຸຕິການຮຽນ *ທັງສອງຈະເຂົ້າສູ່ພິທີວິວາ ອັນສົມກຽດ ແລະສ້າງຊີວິດຄູ່ອັນດູດດື່ມຕໍ່ໄປ*

ທ້າຍປີການຮຽນນັ້ນ ປະກາສໄຊຍະບັດມັທຍົມພາກຕົ້ນຂອງອັນນາຢູ່ໃນກຳມືຢ່າງງ່າຍດາຍ ເປັນທັນດາຍິງສາວທີ່ມີ

ຄວາມຮັກອັນເຕັມບໍ່ຮູມໃນຫົວໃຈ ມີຄູ່ພາຍຜູ້ສະອາດທັງກາຍໃຈ ບໍ່ຫວັງຕົນທຳລາຍຫລິ້ນ ກໍ່ຍ່ອມດຳເນີນໜ້າທີ່ການຮຽນໄປໂດຍສະດວກ ຕ່າງຈາກຄູ່ທີ່ຫລົງມົວເມົາໃນເພດຊຶ່ງກັນແລະກັນ ແລ້ວພາກັນຫລົ້ມມ່ອນຈົມເສັຽອະນາຄົດ

ແຕ່ *ພັນສາ* ປີນັ້ນ ກໍ່ມາຂວາງຂັ້ນອັນວິວາຂອງເຂືອເຈົ້າໄວ້ພໍດີ ອາແກ້ວກໍ່ເອີ້ນວ່າ "ໄວ້ເດືອນສິບສອງເທາະອ້າຍເຮືອນ ພໍດີອັນມາຊິຈຸ ໑໗ ປີເຕັມແດ່ ນີ້ກໍ່ຍັງນ້ອຍກາຍ"

× × ×

*ແລ້ວໃຜແດ່ໄດ້ໄປກິນດອງວັນນາ ກັບອຸ່ນເຮືອນ* ໃນເດືອນສິບສອງປີນັ້ນ ?

ໂຫ້- ຖ້າວ່າອຸ່ນເຮືອນຈະເປັນຜູ້ຊາຍພ້ອຍກວ່ານີ້ຈັກພ້ອຍ ເຫດການກໍ່ຄົງເປັນໄປຕາມຄາດໝາຍແລ້ວລະ ! ພັ້ງເບິ່ງແມ້ ຄຳສາຣະພາບຂອງຜູ້ຊາຍທີ່ເປັນຜູ້ຊາຍເຕັມໂຕ

"ອ້າຍບໍ່ໄດ້ມີເຈຕນາເລີຍນາ ສາບານໃຫ້ກໍ່ໄດ້ ອ້າຍບໍ່ຮູ້ເມື່ອດຶງ ອ້າຍເມົາຂນາດໜັກ... ໝູ່ມັນພາກັນຊູໃຫ້ອ້າຍກິນ.... ວ່າອ້າຍມໍ່ຊິສລະໂສດແລ້ວ... ອ້າຍເກືອບຊິຂັບຣົດກັບເມືອບໍ່ໄດ້...ນາ ນີ້ມັນຖ້ານ້ອງໄປນຳອ້າຍກໍ່ຄົງບໍ່ມີຫຍັງເກີດຂຶ້ນໄດ້... ພັ້ງອ້າຍ... ຂໍໃຫ້ເຂົ້າໃຈອ້າຍ.... ນີ້ມັນມີແຕ່ຄົນມະໂຮງການກຸມມອມເຫລົ້າກັນ

ສາວ "ອ້ານ" (Anne) ເຮັດການເປັ້ນຄົນຕິຈັກ ຢູ່ໂຮງການພັ້ນ ອ້າຍກໍຮູ້ກໍເຫັນວ່າເຂົາເປັ້ນຄົນຈັ່ງຊັ້ນ.... ໄປນຳໃຜບໍ່ເລືອກ... ຈຶ່ງບໍ່ມາ ອ້າຍຍັງເຄີຍເວົ້າໃຫ້ມາຟັ້ງວ່າ ຖ້າສາວອ້ານແມ່ນນ້ອງຄືງ ໆ ອ້າຍຈະຂນາບເຂົາໃຫ້ເຂົາເປັ້ນຄົນຮູ້ຜູ່ດີ.... ອ້າຍເຄີຍຖືຖືກເຂົາສເມີວ່າເປັ່ນຍິງມັກສນຸກ ບໍ່ຮັກນວນສງວນສັກສີ.... ແຕ່ຄືນນັ້ນ ອ້າຍເມົາຂນາດ ແລະສາວອ້ານຂໍໃຫ້ອ້າຍໄປສົ່ງ.... ວັນນາ.... ຟັ້ງອ້າຍ.... ສາວອ້ານຢາກໃຫ້ອ້າຍສວ່າຍພ້າ ແລະກິນຢາແກ້ປວດຫົວສາກ່ອນຈັ່ງກັບເມືອ ລາວວ່າອ້າຍເມົາຫລາຍຊິຂັບຣົດຕົກຮ່ອງໄປ *ອ້າຍໝົດຄວາມອົດທົນ ຕໍ່ການຍົ້ວະເຍົ້າຂອງເຂົາ*.... ນາ... ອ້າຍຊື່ອແທ້ ໆ ຖ້າອ້າຍຈະເປັ້ນຜູ່ຊາຍທີ່ອ່ອນແຮງກວ່ານັ້ນຈັກໜ້ອຍໃນຍາມເມົາ ອ້າຍຄົງຈະບໍ່ເຫັນຜິດເປັ່ນຊອບໄດ້ດອກ... ແຕ່ຫລາຍເດືອນມາແລ້ວອ້າຍຄອຍຖ້າແຕ່ນາຜູ່ດຽວບໍ່ຍອມອອກຫ່ຽວ ອ້າຍຈຶ່ງຕົກເປັ່ນທາດຂອງອາຣົມຊົ່ວວູບນຶ່ງ.... ນາອະພັຍໃຫ້ອ້າຍເທາະ ບົດຮຽນເທື່ອນີ້ແພງຫລາຍແລ້ວ ສຳລັບອ້າຍ...."

ອຸ່ນເຮືອນເສົ່າທອບຄືດົນແລ່ນມາເນື່ອຍ ໆ... ແມ່ນອນລາວຕ້ອງຕໍ່ສູ້ກັບຄວາມຮັບຜິດຊອບນາ ໆ ປະການ ເມື່ອເກີດເຫດດັ່ງນີ້ຂຶ້ນ

"ແຕ່ອ້າຍບອກວ່າ ລູກທີ່ລາວມີຢູ່ນີ້ເກີດແຕ່ອ້າຍເຮືອນຜູ້ດຽວ ລາວວ່າລາວມັກອ້າຍເຮືອນມາແຕ່ດົນ ເບິ່ນໄປບໍ່ໄດ້ທີ່ວ່າ *ອ້າຍ "ເສັງໂຕ" ໃຫ້ສາວອ້ານ* ດ້ານເທື່ອດຽວແລ້ວຈະມີລູກໄດ້ ພອກອ້າຍເຮັດການຢູ່ນຳກັນ ຫລັງຈາກນີ້ມັນມາພອກອ້າຍຕິດຕໍ່ກັນອີກເລື້ອຍແມ່ນບໍ່ ?

ບ່າວອັຍ ນ້ອ ສະທ້ານໃຈ ທີ່ດົນຮັກອັຍຍັງບໍ່ເຖິງຊາວຕັ້ງບັນຫາຖາມອອກມາຢ່າງກົງ ໆ ໄດ້ປານນີ້ ອະນິຈາເຮົາຈະຕອບນາງວ່າຈັ່ງໃດດີ ?

"ແຕ່ອ້າຍສາມາດສລະອ້ານກັບລູກໄດ້ ນາ! ອະນາຄົດຂອງເຮົາສຳຄັນກວ່າ ອ້າຍຈະໃຫ້ເງິນອ້ານກ້ອນນຶ່ງ ໃຫ້ມັນພີໄປຢູ່ແຂວງອື່ນໄກຫູໄກຕາເຮົາ.... ອ້ານມັນມີຄວາມຮູ້ພໍຫາກິນໄດ້ດອກ ມັນຄວນຊິເປັນຜູ້ຮັບບາບຜູ້ດຽວເພາະມັນກໍ່ຂຶ້ນເອງ ເຂົາເອງຢາກໄດ້ອ້າຍມາແຕ່ດົນ ອ້າຍຜິດໄປເພາະຖືກເລ່ກົນເຂົາ ເທັນບໍ່ລະ ນາຊິຍົກໂທດໃຫ້ອ້າຍແມ່ນບໍ່ ?

ຂນະທີ່ເວົ້າ ອຸ່ນເຮືອນນັ່ງລົງກັບພື້ນເຮືອນຕໍ່ໜ້າຍິງສາວ ແລະກຸມຈັບມືນາງມາແນບໄວ້ກັບແກ້ມ ທັງຈູບລູບຄຳຢ່າງຄົນທີ່ສຳອອຍຫລັງຈາກທຳຜິດ

"ອ້າຍເຮືອນເຮັດຜິດແລ້ວ !" ສຽງຂອງອັນມາກ້ອງ

ທົ່ວທ້ອງ ນາງລຸກຂຶ້ນຢືນບັງຄັບທ່າທາງໃຫ້ເຂັ້ມແຂງ ແມ່ນວ່າທາງໃນຈະສະອຶ້ນ ຈົນເອີ້ນໄດ້ວ່ານ້າຕາຢາກໄຫລອອກມາເປັ່ນສາຍເລືອດ ນາງກ່າວຕໍ່ໄປວ່າ:

"ອ້າຍເຮັດຜິດຢ່າງມະຫາສານແລ້ວ ຍັງຊິຢາກບັ່ດໄປໃສ່ຄົນອື່ນ ນຶ່ງ–ໃນເມື່ອອ້າຍຍອມຮັບຢູ່ແລ້ວວ່າ ອ້າຍກັບອ້ານໄດ້ຕິດຕໍ່ກັນອີກຫລັງຈາກຄືນທີ່ເມົາຫລາຍນັ້ນ ກໍ່ສະແດງວ່າອ້າຍເຈຕນາແລະພໍໃຈໄປຫາອ້ານເພື່ອຄວາມສຸກທາງກາຍ ສອງມາອ້າຍກ້າອອກປາກວ່າລູກນັ້ນອ້າຍກໍຕັດໄດ້ ຕັດທັງເມັຽທັງລູກເພື່ອເມັຽອີກຜູ່ໃໝ່ ນ້າໃຈອ້າຍຈັ້ງແມ່ນດຳອັມຫິດ ຂໍໂທດ–ນ້ອງມີເວລາໜ້ອຍເຂົ້າແລ້ວລະ ເມື່ອຮູ້ວ່າອ້າຍເປັ່ນຜູ່ຊາຍຫັມດາ ບໍ່ມີຫຍັງພິເສດ ນ້ອງກໍໝົດຫ່ວງລະ ອ້າຍຈົ່ງຮັບເອົາອ້ານເປັ້ນເມັຽ ແລະລ້ຽງລູກຂອງອ້າຍເທາະ ເຣື່ອງຣະຫວ່າງເຮົາບໍ່ມີຫຍັງສຳຄັນດອກນ້ອງຈະອະທິບາຍໃຫ້ອາວເພົ້າເຂົ້າໃຈເອງ ຂໍໃຫ້ຮັກກັນເປັ້ນໝູ່ກັນຕໍ່ໄປ ສຳຫລັບນ້ອງແທ້ອ້າຍເຮືອນບໍ່ຕ້ອງເປັ່ນຫ່ວງ ຮູ້ແລ້ວບາດນີ້ວ່າ *ຜູ່ຊາຍຫນີ້ ພໍ່ສ່ານີ້ແຫລະ !*

ແມ່ນວ່າອາແລະອາວ ຈະອ້ອນວອນໃຫ້ອັມນາອະພັຍໃຫ້ຊາຍຄູ່ໝັ້ນໝາຍ ຊຶ່ງຮັກກັນມາເກືອບປີນັ້ນທໍ່ໃດນາງກໍບໍ່ຍອມ

"ເພີ່ນເຮັດຜິດຕໍ່ມາແລ້ວບໍ່ພໍບໍ ຍັງຊິຕ້ອງຜິດຕໍ່ສາວ

ອ້ານ ແລະລູກຂອງເພິ່ນອີກ"

ຜາກົດວ່າອຸ່ນເຮືອນເສັຽໃຈໃຫ້ໂຕເອງ ເກືອບເປັ່ນບ້າ ເຂົາບໍ່ຍອມຮັບຮູ້ເອົາອ້ານເປັ່ນເມັຽ ຈົນເທົ້າສາວນັ້ນກັນລູກ ໝູ່ດູ ແລະ ເຈົ້ານາຍທາງໂຮງການກໍອິ່ນອອຍໃຫ້ເຊົາຄິດຫາຊ່ອງທາງຄືນດີກັບອັນນາສາ ເພາະທາງນັ້ນປົ່ນຫລັງໃສ່ຄັກແລ້ວ ເມື່ອອ້ານໄດ້ລູກຊາຍໜ້າຕາເປັ່ນຕາຮັກ ອຸ່ນເຮືອນກໍໃຈອ່ອນເລີຍໄດ້ຢູ່ກິນກັບສາວລູກຊອດເລຂານຸການ ຢູ່ກະຊວງດຽວກັນນັ້ນສືບມາ

ໝູ່ທຸກຄົນກໍຍັງສົງສັຍວ່າ ອັນນາມີເຫດຜົນສົມຄວນບໍ່ ໃນການປະຕິເສດການແຕ່ງດອງກັບອຸ່ນເຮືອນໃນຄັ້ງນັ້ນ ? ແລ້ວສມັກເຂົ້າເປັ່ນຄູເຝົ້າຫໍພັກແຕ່ນັ້ນມາ ທຸກວັນນີ້ນາງຍັງມັກໝົກຕົວຢູ່ໂຮງຮຽນ ອອກມາຢາມຍາດພີ່ນ້ອງແຕ່ຫ່າງ ໆ ບໍ່ໝັ້ນໄປໃສເພື່ອສັງສັນພົບພໍ້ເພື່ອນຊາຍ

ໝູ່ດູທຸກຄົນຍັງຢາກຮູ້ວ່າ ອັນນາຈະຢູ່ຫລີກລີ້ສັງຄົມຈັ້ງຊີ້ໄປອີກດົນປານໃດ ຈະບໍ່ມີຊາຍຄົນໃດອີກແລ້ວບໍ ທີ່ສາມາດສ້າງຄວາມໄວ້ເນື້ອເຊື່ອໃຈແກ່ອັນນາ ແລະເຮັດໃຫ້ອັນນາຍິ້ມຮັບໂລກອັນສົດໃສງາມຕານີ້ອີກເທື່ອໃໝ່ ໃຫ້ອັນນາໄດ້ປົງຕົກເສັຽວ່າ

*ຜູ້ຊາຍກະຄືຜູ້ຊາຍ ກະສ່ຳນີ້ແຫລະຊິໃຫ້ສ່ຳໃດ໋ ?*

# "ລາວກະເທີນ"

(ເກົ້າໝາງ)

ເພິ່ນວ່າ ໝາບໍ່ຂີ້ ໃນທີ່ບໍ່ມີຝອຍ
ບໍ່ເຄີຍ ຂໍຢືມເງິນ ທ່ອນຖາມທອງໝີ້
ຊາດທີ່ ນາຍບໍ່ເຄີຍສ້ ສັນໃດປະຊາຣາສ
ລິທ່ອນ ກ້າທັກທ້ວງ ເອີນທ້າດ່າປະຈານ

– ປາໄມ –

## *ຕົວຢ່າງ....?*

■ ເພິ່ນວ່າ ຍິງຫ່າງຮ້າງ ຊາຍບ່ອຍເປັ່ນໝອຍ (ເປັ່ນແມ່ຮ້າງຜົວປະ)
ຢ່າອວດ ມິມົນສເນ ຝາກສອນສາວເຊື້ອ(ຢ່າບອກຢາສເນ)
ຄິດູ່ ເຮົາຊົນຊັ້ນ ປັ່ນຍາຄອງຮາສ (ດຣ)
ຄັນວ່າ ກິນໂລບລ້ຽວ (ຢູ່ຈັ້ງຊີ້) ຊິເປັ່ນຢ້ຽງຢ່າງດີ ດັ່ງລື

■ ອັນນຶ່ງ ໂສມໜຸ່ມເໜົ້າ ນ້ອຍພໍ່ເຍົາວະຊົນ ກໍດີ
ເຂົາກໍ ແຍງເປັ່ນສິດ ຜູ່ໃຫຍ່ນຳທາງກ້າວ
ຄັນວ່າ ອາຈານ–ນາຍໝາລ້ອ ກິນ–ເມົາ–ເຕັ້ນ–ກອດ
ການປະຊາໂຈ່ງແຈ້ງ ເຂົານັ້ນຊິເຮັດນຳ ບໍ່ຢ່າແລ້ວ

*– ດວງຈຳປາ –*

# ນ້ຳໃຈ ---

■ *ໂດຍ ອິນທິຣາ* ■

■ ສາຍຄຳເຂົ້າໃຈດີວ່າ ອ້າຍໂພມີນ້ຳໃຈຕໍ່ນາງຈັ່ງໃດ.... ແຕ່ຍາພໍ່ຍາແມ່ຫລືຈະຍອມ... ເພິ່ນຍ້ານຂາຍໜ້າຂາຍຕາເພິ່ນ... ເພິ່ນຕ້ອງການໃຫ້ສາຍຄຳເບີ່ນລາວຄືນຄືເກົ່າ....

*ສາຍຄຳຍ່າງໄປຜູ້ດຽວ ດ້ວຍຄວາມຄິດ ສັບສົນ* ມັນຍາກຫຍຸ້ງສົນລະວົນ ຈົນຫົວສມອງທີ່ຍັງອ່ອນປະສົບການຂອງນາງບໍ່ສາມາດຈະຕັດສິນຊີ້ຂາດໄດ້ ວ່ານາງຄວນຈະຕັດສິນໃຈແບບໃດ

ຄັນແດງໝູ່ຂອງນາງບໍ່ມາຫາຫວ່າງເຊົ້ານີ້ ເຣື່ອງມັນອາດຈະຖືກປົກປິດໄປອີກດົນ ແຕ່ວ່າຈັກຊິດົນປານໃດ ຖ້າວ່າມັນຖືກປົກປິດໄວ້ຍ້ອນຄວາມຮູ້ເທົ່າບໍ່ເຖິງການທີ່ນັ້ນ ສາຍຄຳຍ່າງຕໍ່ໄປເລື້ອຍ ໆ ແລະບໍ່ຮູ້ວ່າຈະໄປໃສດີ ຄິດທົບທວນເຖິງອະດີດຂອງໂຕເອງ ຄິດຄືນໄປຫາເຫດການທີ່ຜ່ານມາມື້ເຊົ້ານີ້.

ມື້ເຊົ້າຊຶ່ງສາຍຄຳຂັງໂຕເອງຢູ່ໃນຫ້ອງຊັ້ນເທິງ ບໍ່ຍອມລົງລ່າງເທື່ອ ໄດ້ຍິນສຽງຣົຖຍາແມ່ເຂົ້າມາ ເພິ່ນກຳລັງບອກອ້າຍໂພໄປຂັດລ້າງຣົຖ ສາຍຄຳຄິດວ່າ ເພິ່ນເປັນຫຍັງບໍ່ເຮັດ "ວຽກ" ຂອງເພິ່ນມື້ນີ້ ແລະນາງກໍມີຄວາມຍ້ານໄວ້ຖ້າແລ້ວ ພໍດີແດງເຂົ້າປະຕູຮົ້ວມາ.

— ໂອ້ ! ລູກຄືມາແຕ່ເຊົ້າແທ້–ແດງ ?" ຍາແມ່ຖາມພໍເປັນພິທີພ້ອມ ໆ ກັບອັດປະຕູຣົຖເຂົ້າ ແລະຕໍ່ຄວາມລົມໂດຍບໍ່ຟັງສຽງຕອບຈາກຜູ້ຖືກຖາມອີກວ່າ "ສາຍຄຳຄືຊິຢູ່ໃນພຸ້ນແຫລະ ເຂົ້າໄປຫາໂລດ"

ຍາແມ່ບອກຍ່າງກັນເອງ ເພາະແດງເປັນຄົນລຶ້ງເຄີຍກັນແລ້ວ ເປັນໝູ່ສນິດກັບສາຍຄຳ ແລະຮຽນໜັງສືຢູ່ຫ້ອງດຽວກັນ ໃນຂນະທີ່ຍ່າງນຳກັນເຂົ້າໄປໃນເຮືອນ ຍາແມ່ຖາມລອຍ ໆ ຂຶ້ນວ່າ

"ພອກລູກຮຽນຮອດໃສແລ້ວຫື ?"

ແດງວ່າຈະອ້າປາກຟ້າວຕອບເພິ່ນ ວ່າຢູ່ "ກາດຕຮຽມ" ຍາແມ່ກໍເວົ້າຂຶ້ນກ່ອນອີກ

"ຍັງອີກຈັກປີຈຶ່ງຊິເສັງອອກ ລູກ ?"

ເພິ່ນຮູ້ແຕ່ພຽງວ່າການຮຽນຫັ້ນມັນມີເສັງອອກແລະບໍ່ຮູ້ຫຍັງເລີກແລບໄປກວ່ານັ້ນ ແດງຄິດຮູ້ແລ້ວຈຶ່ງຟ້າວຕອບອອກໄປວ່າ ຍັງອີກປີດຽວກໍຈະເສັງເອົາ "ດີໂປລມ" ແລະນາງກໍທັນໄອປາກຖາມອອກໄປຕື່ມວ່າ

– ສາຍຄຳບໍ່ສບາຍບໍ່ຂນ້ອຍ ຄືບໍ່ເຫັນໄປໂຮງຮຽນ...?"

ຍາແມ່ຕອບວ່າ

– ທຶ ! ບໍ່ມາ... ມື້ນເພິ່ນເຂົ້າສວຍ ໆ ບໍ ຍັງບໍ່ທັນໄປເທື່ອຕີ໋...." ຍາແມ່ເວົ້າຮອດການໄປໂຮງຮຽນຂອງລູກໄດ້ທີ່ນັ້ນກໍສັ່ງສຽງເອີ້ນສາຍຄຳໂລດ ສາຍຄຳແລ່ນລົງມາຕາມສຽງຮ້ອງ

ຜົມຍໍ່ຫຍຸ້ງແລະຍັງບໍ່ທັນນຸ່ງເຄື່ອງໄປໂຮງຮຽນຊ້າ... ພໍ້ກັບແດງຊຶ່ງພວມຊິຂຶ້ນໄປຢູ່ຂັ້ນໃດ ເລີຍລົງມານຳກັນ.

ຍາແມ່ຕື່ນທີ່ເຫັນລູກສາວ ຍັງບໍ່ທັນກຽມໂຕໄປໂຮງຮຽນເທື່ອ ເທິງ ໆ ທີ່ສວຍແລ້ວ.

"ອ້າວບໍ່ໄປໂຮງຮຽນຫວາລູກ ?"

"ບໍ່ ຂນ້ອຍຮູ້ສຶກປວດຫົວ ວ່າຊິບໍ່ໄປມື້ນີ້...."

"ວ່າແລ້ວ ເຮົາວ່າໂຕຕ້ອງບໍ່ສະບາຍ ເຮົາບໍ່ເຫັນໂຕຫລາຍມື້" ແດງວ່າອອກໄປຄືເຄີຍເຫັນສາຍຄຳຂາດໂຮງຮຽນແບບນີ້ເລື້ອຍ ໂດຍບໍ່ທັນໄດ້ສັງເກດສາຍຕາຂອງສາຍຄຳຊຶ່ງກົ້ງໃສ່ໝາຍເຕືອນຫ້າມ ແລະພ້າວດຶງແຂນໝູ່ໃຫ້ຂຶ້ນເທິງເຮືອນ.

ແຕ່ຍາແມ່ໄດ້ຍິນຄຳວ່າ"*ເຮົາບໍ່ເຫັນໂຕຫລາຍມື້...*" ນັ້ນແລ້ວຈຶ່ງຂຶ້ນສຽງວ່າ:

"ແມ່ນຫຍັງຫລາຍມື້ ! ຂາດໂຮງຮຽນຫລາຍມື້ແລ້ວຫວ່ະພີ້ ?" ຍາແມ່ຖາມຢ່າງປລາດໃຈ ແລ້ວເອີ້ນໃຫ້ທັງສອງລົງມາຄືເກົ່າ ສາຍຄຳຢາກຍິກແດງບໍ່ໃຫ້ເວົ້າຫຍັງ ແຕ່ໂຕເອງກະຕົກໃຈສຸດຂີດຄືກັນ ເມື່ອໄດ້ຍິນສຽງຂຶງຂັງຂອງຍາແມ່ ຍາແມ່ສໍ້ອີກ ສາຍຄຳເລີຍໄດ້ບອກເພີ່ນວ່າ ບໍ່ໄດ້ໄປໂຮງຮຽນອາທິດນຶ່ງແລ້ວ

126

ສາຍຄຳຮູ້ວ່າແມ່ນາງມັກໂວຍວາຍ ວ່າແຕ່ມີເຣື່ອງນ້ອຍນຶ່ງກໍເປັ່ນເຣື່ອງໃຫຍ່ ເພິ່ນມັກເປັ່ນລົມລົງໂລດ ທັງຍາພໍ່ແລະໃຜ ໆ ກະຕ້ອງໄດ້ເອົາໃຈເພິ່ນສເມີ ຈົນສາຍຄຳເອງບໍ່ຢາກເວົ້າຫຍັງທີ່ຄິດວ່າເປັ່ນເຣື່ອງໜ້າວິຕົກແດ່ໃຫ້ແມ່ຟັງ ນາງເລີຍກາຍເປັ່ນຄົນມິດ ເປັ່ນເດັກທີ່ເບິ່ງຊົງບໍ່ມີບັນຫາຫຍັງຈັກເທື່ອ.

ຍາແມ່ແຮ່ງດີໃຈ ແລະຄິດວ່າລູກສາວເປັ່ນຄົນຫົວອ່ອນ ໄປມາຄ່ຽມຄົນ ບອກໄປໃສຈັ່ງໄປ ເວົ້າຫຍັງກໍຟັ່ງຄວາມ ບອກບໍ່ໃຫ້ມີໝູ່ຜູ່ຊາຍຫລາຍ ໃຫ້ເລືອກລົມແຕ່ຜູ່ມີພໍ່ມີແມ່ ມີເຊື້ອສາຍໃຫຍ່ ໆ ນາງກໍຟັ່ງຄວາມ ຈົນໝູ່ຜູ່ຊາຍລາງຄົນວ່າໃຫ້ນາງວ່າຂີ້ອົ່ງ ຖືຖືກເຂົາ ຍາແມ່ບໍ່ເຫັນສາຍຄຳໄປທ່ຽວຫລິ້ນ "ລົ້ວ" ນຳໝູ່ ມີແຕ່ຢູ່ກັບເຮືອນເປັ່ນຕາໄວ້ວາງໃຈໄດ້....

ຍາແມ່ອາດບໍ່ໄດ້ຄຳນຶງເຖິງຄວາມຈະເຣີນເຕີບໃຫຍ່ຂອງຮ່າງກາຍລູກສາວ ຊຶ່ງດຽວນີ້ມີເອິກອາງເຕັມຕຶງເຫັນສ່ວນໄດ້ຄັກແນ່ ສາຍຄຳອາຍຸໄດ້ ໑໗ ປີເຕັມພໍດີ.... ຄອບຄົວຂອງຍາແມ່ຢູ່ມຸ ໆ ສີ ໆ ຄືບໍ່ຄ່ອຍມີບັ່ນຫາອັນໃດໜັກ ແລະຕາມທັມມະດາແລ້ວຕ່າງຄົນກໍຕ່າງໄປ ບໍ່ມີໃຜສົນໃຈໃຜຫລາຍເປັ່ນພິເສດ ຕື່ນຂຶ້ນມາສາຍຄຳກໍມີຣົຖໄປສົ່ງໂຮງຮຽນຄູ່ມື້ ອ້າຍຂອງນາງມີຣົຖຈັກເອງຄັນນຶ່ງຕ່າງຫາກ ມີແຕ່ຍາແມ່ແລະສາຍຄຳທີ່ໃຊ້ຣົຖຫລວງຄັນ

ດຽວກັນ ມີອ້າຍໂພເປັ່ນຄົນຂັບຊຶ່ງທາງກະຊວງຂອງຍາພໍ່ເພິ່ນຈ້າງໃຫ້ ໃນເຮືອນມີຄົນໃຊ້ໄປຕລາດເຮັດກິນ ຍາແມ່ໄປ "ວຽກເພິ່ນ" ຈົນໃກ້ຮອດໂມງເລີກການຈຶ່ງມາ(ກິນເຂົ້າຮ່ວມພາກັນບໍ່ໃຫ້ຂາດ ເພາະຍາແມ່ເພິ່ນຖືເຣື່ອງນີ້ແທ້ ໆ) ແລ້ວອ້າຍໂພຈຶ່ງເອົາຣົຖເລີຍໄປຮັບສາຍຄຳຢູ່ໂຮງຮຽນ ນີ້ເປັ່ນກິຈປະຈຳວັນຂອງຄອບຄົວ

ມື້ເຊົ້ານີ້ສຽງຍາແມ່ດັງຂຶ້ນຫລາຍ ແດງເລີຍພີເມືອ ພໍຍາແມ່ໄດ້ຍິນວ່າລູກບໍ່ສບາຍ ກໍໂອຍອາຍສະແດງຄວາມເປັ່ນຫ່ວງຫລາຍຂຶ້ນອີກ ແລ້ວຄຸມສາຍຄຳໄປຫານາຍໝໍໃນດຽວນັ້ນ ຍາແມ່ຮ້ອງໃສ່ອ້າຍໂພບໍ່ໃຫ້ເອົາຣົຖໄປລ້າງ ອ້າຍໂພຄົນຂັບຣົຖທີ່ຊື່ສັດກໍນຳຣົຖມາ ສອງແມ່ລູກຂຶ້ນນັ່ງທາງຫລັງແລະອອກຣົຖໄປຫາຄລີນິກປະຈຳຂອງຍາແມ່ ສາຍຄຳນັ່ງໃນຣົຖຫົວໃຈເຕັ້ນເໝື່ອຍອິງອຽນ ນາງຄິດຍ້ານແຕ່ບໍ່ຮູ້ວ່າໂຕຍ້ານຫຍັງ ລາງເທື່ອນາງຕ້ອງຫລັບຕາລົງ ແລ້ວເອົາຫົວອີງໃສ່ເບາະຣົຖ ອ້າຍໂພຫລຽວເບິ່ງອາການຂອງສາຍຄຳໃນກະຈົກຣົຖດ້ວຍສາຍຕາເປັ່ນຫ່ວງ

ຈາກຄລີນິກ ໄດ້ຄວາມວ່າສາຍຄຳມີລູກໄດ້ສາມເດືອນແລ້ວ !

ຍາແມ່ບໍ່ໄດ້ເປັ່ນລົມດັ່ງທີ່ສາຍຄຳຄິດຍ້ານ ເພິ່ນກັບໜ້າແດງດ້ວຍຄວາມຄຽດຄວາມຊັງຕໍ່ສາຍຄຳ ເພິ່ນດ່ານາງວ່າເປັ່ນ

ລູກຊື່ວ—ບໍ່ຮັກວົງຕະກຸນ-ຂາຍໜ້າພໍ່ໜ້າແມ່ "ອີລູກບໍ່ມັກດີ...." ຫລາຍ ໆ ແນວແຕ່ຊິດ່າມາໃນຣົຖ—ຈົນຮອດເຮືອນ ກໍຍັງບໍ່ເຊົາຄວາມດ່າ... ສາຍຄຳກົ້ມໜ້າໃຫ້ຍາແມ່ດ່າເອົາ ດ່າເອົາ ບໍ່ປາກແຕ່ກໍບໍ່ໄດ້ຮ້ອງໄຫ້ ຜູ້ຂັບຣົຖຈົນເກີດຄວາມອິດູຕົນ ທີ່ມີແຕ່ຜ່າຍດຽວຮ້າຍ ຍາແມ່ເວົ້າຂົ້ມກູຂົ້ມມຶງດ້ວຍຄວາມໂມໂຫ

"ມຶງເຮັດໃຫ້ກູເຈັບແສບນໍ້— ມຶງເຮັດຄືກູບໍ່ແມ່ນແມ່ມຶງພໍ້ ! ມຶງຢາກໄດ້ຫຍັງກູກໍ່ຊິໃຫ້ມຶງໝົດ ຢາກໄປຫລິ້ນເມືອງນອກມຶງກໍໄດ້ໄປ ມຶງໄດ້ສນຸກສຸກສະບາຍ ມຶງຍັງບໍ່ຄິດເຫັນ—ມຶງຂາຍໜ້າກູ !"

ສາຍຄຳຊິແລ່ນຂຶ້ນເທິງເຮືອນ ແຕ່ຍາແມ່ເອີ້ນບອກໃຫ້ນັ່ງລົງ *ວາລົງ* ຫັ້ນ ເພິ່ນຖາມແກມດ່າອີກວ່າ.

"*ແມ່ນໃຜຫລິ້ນມຶງອີຄຳ*" ສາຍຄຳແຮ່ງບໍ່ຢາກບອກ ນາງຮູ້ດີວ່າແມ່ຂອງນາງຈະບໍ່ພໍໃຈຕື່ມຂຶ້ນອີກ ແລະຄຳທີ່ຍາແມ່ເປັ່ງອອກມາແຕ່ລະຄຳມັນແສນຊິຫຍາບຄາຍ ເປັນພາສາຊັ້ນຕ່ຳເອົາແທ້ ໆ ! ນາງບໍ່ເຄີຍໄດ້ຍິນຈັກເທື່ອ.... ມີແຕ່ "*ອີ–ກູ–ມຶງ*".... ເພິ່ນຮ້າຍຕໍ່ໄປວ່າ "ບັກໃດມັນຫລິ້ນມຶງໃຫ້ມັນມາເອົາມຶງໂລດ ! ກູບໍ່ເອົາມຶງໄວ້ເຮືອນອີກຕໍ່ໄປ ຄັນມັນບໍ່ມາເອົາມຶງກູຊິຟ້ອງມັນ ! ມຶງມັນລູກຈັ່ງໄຣມີແຕ່ຊິຂາຍໜ້າກູ ! ທີ ?

ບອກກູແມ້ແມ່ນໃຜເປັນຜົວມຶງ ?"

ສາຍຄຳຮ້ອງໄຫ້ຂື້ນດ້ວຍຄວາມເສັຽໃຈ ໃນຄຳເວົ້າດ່າອັນຮຸນແຮງຂອງແມ່ ແມ່ທີ່ນາງຄຶດວ່າ *ຮັກນາງເຫລືອທີ່ສຸດ* ບາດນີ້ເພິ່ນຮອດໄລ່ໜີ ຕັດລູກຕັດແມ່ ! ນາງບໍ່ຄຶດວ່າເພິ່ນຈະໂຫດຮ້າຍປານນີ້ ! ເພິ່ນຄືວ່າຮັກນາງ—ຊິທຸກສິ່ງທຸກຢ່າງໃຫ້ທະແນມວ່ານາງເອີຍປາກຂໍ ແລ້ວບາດນີ້ນາງຊິຫັນໜ້າໄປຫາຜູ້ໃດໃຫ້ຊ່ອຍແກ້ບັນຫານີ້ ? ມັນຊ່າງມືດແປດດ້ານເອົາແທ້ ໆ... ແມ່ກະເອົາແຕ່ດ່າກັບດ່າ....

ຍາພໍ່ມາພໍດີ ເພິ່ນຈະວ່າຢ່າງໃດນໍ້ ? ຍາແມ່ພ້າວສເນີເຣື່ອງຂາຍໜ້າໃຫ້ຟັງ ເພິ່ນເນັ້ນວ່າມັນເປັນຄວາມຊົ່ວອັນຮ້າຍແຮງແທ້ ໆ ບໍ່ຄວນຈະອະໄພໃຫ້ລູກໄດ້ ! ຍາພໍ່ແລະຍາແມ່ພາກັນສໍ້ຫາຊາຍຊູ້ຂອງສາຍຄຳອີກດົນຈຶ່ງໄດ້ຄວາມວ່າ ແມ່ນ *ອ້າຍໂພ ຄົນຂັບຣົຖນັ້ນເອງ !*

"ໂທ້....ບັກໂພ...." ຍາແມ່ຮ້ອງ, (ຕອນນີ້ອ້າຍໂພຢູ່ເຮືອນດົວ ແຕ່ຍາແມ່ບໍ່ສົນໃຈເອີ້ນລາວມາ) "ບັກໂພມັນມີດີຫຍັງ ? ໄດ້ແຊກ ? ເປັນໂຊເຟີ່ມຶງ ມຶງມັນໃຜ່ຕ່ຳແທ້ ໆ ຕວ່າ ພີ້ ອິ້ນີ້ !

"ກູບໍ່ໃຫ້ມຶງເອົາກັບບັກໂພ ! ຍາພໍ່ຕ້ອງໄລ່ມັນ

ອອກການບັກໜ້າຂ້ອຍນັ້ນ ມັນກ້າຂີ້ຣົດຫົວເຮົາປານນີ້ຫວະ ? ອີ່ດຳມຶງຕ້ອງໄປເອົາລູກອອກ ! ຕ້ອງໄປເອົາອອກ ມຶງຊິມີລູກກັບບັກຄົນຊັ້ນຕ່ຳນີ້ບໍ່ໄດ້ເດັດຂາດ ຂາຍໜ້າກູທົ່ວວຽງ ! ກູຊິໃຫ້ມຶງໄປເອົາອອກຢູ່ກຸງເທບ”

ຍາແມ່ເວົ້າລຸດ ໆ ອອກມາ ພໍ່ກໍ່ເຫັນດີນຳເພິ່ນທີ່ສຸດ ເວົ້າສນັບສນຸນວ່າ “ເອີ...ຕິຕາງວ່າໄປພັກຜ່ອນ ແຕ່ຕ້ອງໄປເອົາມັນອອກແທ້ ໆ ໃດສາຍຄຳ ມັນຊິຂາຍໜ້າເຮົາໝົດເມືອງ ເຮົາເຊື້ອໃຫຍ່ ເຈົ້າຕ້ອງເຊື່ອແມ່ເຈົ້າໃດ໋”

## *ເຂົ້າເຜນມື້ນີ້ບໍ່ມີຜູ້ຕ້ອງຈັກຄຳ !*

ສາຍຄຳບໍ່ຮູ້ຈະຄິດຫຍັງ ! ແລ່ນຂຶ້ນເທິງເຮືອນອັດປະຕູຫ້ອງ.... ຫົວໃຈເຕັ້ນບໍ່ເປັນຈັງຫວະ—ສາຍຄຳມີແຕ່ເໝື່ອຍຄືໃຈຊິຂາດໄປດຽວນັ້ນ ນາງນັ່ງລົງເທິງຕຽງ.... ເອນໂຕລົງນອນຄ່ອຍ ໆ.... ນາງນອນໃນທ່ານັ້ນດົນເຕີບຈິດໃຈຄ່ອຍສງົບລົງແຕ່ເຮືອນທັງຫລັງຮູ້ສຶກວ່າມິດ.... ຍາພໍ່ກັບຍາແມ່ອອກໄປນອກ ເພິ່ນຊິໄປໃສກະບໍ່ຮູ້...

ບາດນີ້ສາຍຄຳຄິດຍ້ຳການເອົາລູກອອກ— ນາງຫວາດຫວັ່ນຂຶ້ນມາ ມັນຊິເຈັບບໍ່ ? ນາງຄິດຕາມປະສາເດັກນ້ອຍທີ່ບໍ່ທັນເຂົ້າໃຈໂລກກວ້າງ... ເຄີຍໄດ້ຍິນແຕ່ຄົນວ່າຫລຸລູກ ແລ້ວ

ຕ້ອງມານອນໂຮງໝໍ ມັນຈະຕ້ອງເຈັບປວດຫລາຍ ນາງຄິດໄປອີກວ່າ ຖ້າມັນເຈັບພໍ່ແມ່ເພິ່ນຈະໃຫ້ເຮັດບໍ ? ເພິ່ນຮັກເຮົາ ຫລືວ່າເພິ່ນເຊົາຮັກເຮົາແລ້ວບໍ ? ເຈັບຕາຍກໍຊ່າງ.... ເພິ່ນຊິຢ້ຳນເຮົາເຈັບບໍ່ນໍ ?.... ສາຍຄຳບ່ຽມເຣື່ອງຄິດສັບສົນ ລຳດັບເຣື່ອງທີ່ຜ່ານມາບໍ່ໄດ້ຊ້ຳ ຄິດຫາເຫດການທີ່ຜ່ານມາກັບອ້າຍໂພ–ບ່າວອາຍຸ ໔໕ ປີ ເບິ່ງຊົງລາວເປັນຄົນຊ້າ ໆ ຊື່ ໆ ຂັບຣົຖເກັ່ງ ມາຣະຍາດດີ ຮູບຮ່າງກະສົມຊາຍ ແຕ່ຄວາມຮູ້ລາວຮອດແຕ່ຂັ້ນແຊກ ລາວມີຄວາມຮູ້ທາງເຄື່ອງຈັກນີ້ຫລາຍ ຣົຖໃນເຮືອນເພກໍແມ່ນລາວນັ້ນລະແປງ ລາງເທື່ອຮອດຕັດຫຍ້າ ບົວຣະບັດສວນດອກໄມ້ໃຫ້ ລາງເທື່ອສາຍຄຳກັບໝູ່ໄປກິນເຂົ້າບ່າກະແມ່ນລາວ (ອ້າຍໂພ) ຂັບຣົຖຫລວງຄັນນີ້ພາໄປ ລາວຮັບໃຊ້ທຸກຢ່າງຕລອດຈົນຮອດກະຕ່າແມວກິນລາວກະຫີ້ອໃຫ້ ຫາຟືນມາປີ້ງຊີ້ນ ເກັບຖ້ວຍເກັບຈານເຂົ້າກະຕ່າ ຯລຯ.... ສາຍຄຳຮູ້ສຶກວ່າລາວພໍໃຈເຮັດວຽກທຸກຢ່າງບໍ່ອິບໍ່ປາກຈັກເທື່ອ.... ລາງເທື່ອສາຍຄຳເອງຄິດນັບຖືລາວ *ບໍ່ຄິດຊ້ຳວ່າລາວດ້ອຍການສຶກສາ* ມີຫລາຍ ໆ ເທື່ອທີ່ສາຍຄຳໄປກິນລ້ຽງ ຍາແມ່ສົ່ງຣົຖໄປຮັບ ໃຫ້ອ້າຍໂພໄປຄອຍຖ້າຮັບເມືອບໍ່ໃຫ້ຢູ່ເດິກກາຍ ໑໐.໓໐ ໂມງຈັກເທື່ອ ສາຍຄຳກັບມາໃນຣົຖສອງຕໍ່ສອງກັບອ້າຍໂພເລື້ອຍ ໆ ໃນຕອນເດິກ ລາງເທື່ອອ້າຍໂພຖາມ

ວ່າມ່ອນບໍ່ ? ສາຍຄຳກໍໄດ້ເອົາໄດ້ລົມມານຳທາງ ການມາ ໑໐.໓໐ ໂມງຕາມແມ່ສັ່ງນັ້ນ ກໍເປັນຄວາມພໍໃຈຂອງສາຍຄຳ ເພາະຢູ່ໄດ້ກໍບໍ່ມ່ອນ ສາຍຄຳບໍ່ມີໝູ່ຜູ້ຊາຍ ແລະລາວເອງກໍເລືອກໝູ່ອີກ ລາງເທື່ອສາຍຄຳໄດ້ລະບາຍຄວາມໃນໃຈລາງອັນໃຫ້ອ້າຍໂພຟັງ ເຊັ່ນສາຍຄຳອຸກໃຈວ່າໝູ່ເບີດໃສ່ ເວົ້າວ່າສາຍຄຳຂີ້ອັ່ງຕ່າງ ໆ ນາ ໆ... ຊຶ່ງອ້າຍໂພກໍເວົ້າອອຍໃຈສເມີວ່າ ສາຍຄຳເປັນເດັກດີທັງງາມແລະໜ້າຮັກ ລາງເທື່ອສາຍຄຳເຄີຍບອກໃຫ້ອ້າຍໂພມາຮັບກ່ອນໂມງເລີກຮຽນ ມື້ໃດນາງຄິດຄ້ານຫລືໝຸດໝິດໃຈ ອ້າຍໂພຂັບຣົຖພາເລາະໄປກິນເຝີແລ້ວກໍເມືອ *ຄວາມຮັກແລະຄວາມຕ້ອງການຂອງຮ່າງກາຍ* ເກີດຂຶ້ນເວລາໃດນັ້ນສາຍຄຳຈື່ບໍ່ໄດ້ ແຕ່ຮູ້ວ່າມັນບໍ່ໄດ້ເກີດຂຶ້ນບຶດນຶ່ງຍາມດຽວ ມັນບໍ່ໄດ້ເກີດຂຶ້ນຍ້ອນຄາຣົມຄົມຄາຍຂອງອ້າຍໂພແຕ່ຢ່າງໃດ.... ລາວເປັນຄົນບໍ່ມັກປາກແຕ່ເຮັດວຽກເກັ່ງ ການຕິດຕໍ່ຣະຫວ່າງອ້າຍໂພແລະສາຍຄຳ ເປັນໄປດ້ວຍທ່າທາງ ສາຍຕາທີ່ສະແດງອອກເຖິງຄວາມເປັນຫ່ວງ ສິ່ງເຫລົ່ານີ້ເຮັດໃຫ້ສາຍຄຳເຊື່ອແລະໄວ້ວາງໃຈອ້າຍໂພ ແລ້ວມັນກໍກາຍເປັນຄວາມຮັກຊນິດນຶ່ງ ຊຶ່ງໄດ້ພື້ນຖານມາຈາກການເອົາອົກເອົາໃຈຂອງອ້າຍໂພ ຈະວ່າ *ສາຍຄຳໄດ້ໃກ້ຊິດກັບອ້າຍໂພຫລາຍກວ່າບ່າວອື່ນ ໆ ກໍແມ່ນ* ສາຍຄຳສະບາຍໃຈທີ່ໄດ້

ໄປໃສມາໃສກັບອ້າຍໂພ.

ແຕ່ດຽວນີ້ສາຍຄຳກຳລັງອຸກ... ເພື່ອຍອິນ.... ກິນເຂົ້າບໍ່ແຊບຫລາຍມື້ແລ້ວ ມື້ນີ້ກໍຍັງບໍ່ມີເຂົ້າຢູ່ທ້ອງຈັກເມັດຊ້ຳ.... ຍາແມ່ກໍຕັດທາງບ່ອຍ.... ບອກນາງໄປຣີດລູກອອກ... ຫົວໃຈເຕັ້ນນຸບ ໆ ແຮງຂຶ້ນຍາມໃດ ທີ່ສາຍຄຳຄຶດວ່າມັນຄົງຈະເຈັບປວດ ສາຍຄຳຈະໄປເວົ້ານຳໃຜ ໃຫ້ລົ້ມຄວາມຕັ້ງໃຈຂອງຍາແມ່ໄດ້ ທັງພໍ່ທັງແມ່ເຫັນພ້ອມກັນຂັ້ນ ໆ ສາຍຄຳຊິຕ້ອງເຈັບປວດທີ່ສຸດ ນາງບໍ່ຢາກໄປເຮັດແນວນັ້ນ... ແຕ່ນາງກໍຢ້ານບໍ່ໄດ້ເປັນລູກເພີ່ມຕໍ່ໄປ... ເພາະເທົ່າທີ່ເປັນມາແລ້ວ ເພິ່ນແຮ່ງວ່ານາງຜິດແລະຊົ່ວ ເປັນລູກເນຣະຄຸນວ່າຊັ້ນ ສາຍຄຳບໍ່ໄດ້ຄຶດຈະເຮັດຂາຍໜ້າເນຣະຄຸນເລີຍ ມັນເປັນຍ້ອນຫຍັງນາງເອງກໍຄຶດບໍ່ພໍ້... ແຕ່ເຣື່ອງນີ້ນາງຈະອວ່າຍໜ້າໄປປຶກສາໃຜໄດ້...

× × ×

ສາຍຄຳຄຶດຢາກໄປຖາມຄວາມເຫັນ ຂອງອ້າຍໂພເບິ່ງ... ຄົນໃຊ້ບອກວ່າອ້າຍໂພເມືອບ້ານແລ້ວ ສາຍຄຳຕັດສິນໃຈນຳລາວໄປ ນັບວ່າເປັນເທື່ອທຳອິດທີ່ສາຍຄຳອອກເຮືອນໄປ ໂດຍບໍ່ໄດ້ຮັບອະນຸຍາດຈາກພໍ່ແມ່ ແລະໄປຜູ້ດຽວບໍ່ມີຣົຖພາໄປ ນາງລັກໄປຫາຜູ້ຊາຍ ຜູ້ທີ່ຈະໃຫ້ຄວາມປຶກສາຫາລືແກ່ນາງໄດ້....

ແຕ່ອະນິດຈາ ! ຄວາມເວົ້າຂອງອ້າຍໂພ ທີ່ນາງດັ້ນດົ້ນໄປຫາຫວ່າງບ່າຍນັ້ນ.... ຊ້ຳແຮງເຮັດໃຫ້ສາຍຄຳຕັດສິນໃຈຍາກຕື່ມອີກຊັກໄຊ້.... ອ້າຍໂພເວົ້າວ່າ

"ອ້າຍ...."

"ອ້າຍໄດ້ຍິນໝົດແລ້ວ ຍາແມ່ເພິ່ນຢາກຈັດການແນວໃດກັບລູກຂອງອ້າຍ ! ອ້າຍຟ້າວຟີມາ ເພາະຖ້າເພິ່ນເຫັນເພິ່ນຈະຍິ່ງໂມໂຫຂຶ້ນອີກ ຂໍໃຫ້ຟັງອ້າຍດີ ໆ... ສາຍຄຳ" ສາຍຄຳງຶກຫົວກົ້ມໜ້າ "ອ້າຍເອງເປັນຄົນບໍ່ມີຍົດຖາບັນດາສັກຫຍັງມີຄວາມຮູ້ນ້ອຍ ເປັນຄົນຊັ້ນກັມມະກອນກະວ່າແມ່ນ... ແຕ່ອ້າຍມີກຳລັງກາຍ ກຳລັງຕໍ່ສູ້ ຫາກິນດ້ວຍຄວາມຊື່ສັດ... ອ້າຍຈະບໍ່ຂໍຮ້ອງໃຫ້ນ້ອງມາເອົາກັບອ້າຍດອກ *ເພາະບໍ່ມີສິດຈະດຶງນ້ອງອອກຈາກກອງມໍຣະດົກ ແລະຄອບຄົວອັນມີກຽດ...* ອ້າຍເຂົ້າໃຈດີທີ່ສຸດວ່າອ້າຍບໍ່ມີສິດ ແຕ່ອ້າຍຂໍນຳນ້ອງຢ່າງນຶ່ງ... *ຢ່າໄປເອົາລູກອອກ* ອ້າຍຢ້ານນ້ອງຈະໄດ້ຮັບຄວາມເຈັບປວດຫລາຍ ເຣື່ອງແບບນີ້ອ້າຍໄດ້ຍິນມາຫລາຍແລ້ວ... *ຜູ້ຍິງໄປເອົາລູກອອກນັ້ນ ມີແນວເສັຽຫາຍຫລາຍເຖິງໃນດ້ານຮ່າງກາຍແລະດ້ານຈິດໃຈ....* ບາງທີເຖິງກັບເປັນອັນຕຣາຍຕໍ່ຊີວິດຕລອດໄປ.... ອ້າຍບໍ່ຢາກໃຫ້ນ້ອງທໍຣະ

ມານໂຕເອງດ້ວຍການຣີດລູກອອກ ອ້າຍບໍ່ຢາກເຫັນນ້ອງບ່ອຍໃຈ ຍ້ອນຄວາມຜິດພາດອັນນີ້.... ອ້າຍເອງກໍບໍ່ຮູ້ຊ້ຳວ່າລູກຂອງເຮົາໃນທ້ອງ ມັນຊິມີປໂຍດແກ່ສັງຄົມໄດ້ຫລາຍໜ້ອຍປານໃດ... ແຕ່ອ້າຍເປັນຫ່ວງ ອ້າຍຫ່ວງນ້ອງ ບໍ່ຢາກໃຫ້ນ້ອງໄດ້ຮັບຄວາມເຈັບປວດ ອ້າຍຢາກໃຫ້ນ້ອງປະໃຫ້ລູກໃຫຍ່ ແລ້ວອອກມາຄືບ້ານຄືເມືອງເພິ່ນ ນ້ອງອາດຈະມີທາງໄປຢູ່ບ່ອນໃດບ່ອນນຶ່ງຊົ່ວຄາວຈົນໃຫ້ລູກອອກ ແລ້ວກັບມາຢູ່ນຳຄອບຄົວຂອງນ້ອງຕໍ່ໄປກະໄດ້... ຄັນນ້ອງຕ້ອງການ... ສ່ວນອ້າຍຊິຂໍເອົາລູກໄປລ້ຽງເອງ ອ້າຍຈະລ້ຽງເອົາເອງໂດຍບໍ່ຕ້ອງໃຫ້ນ້ອງເດືອດຮ້ອນ *ບໍ່ໃຫ້ກັງວົນວ່າເຄີຍມີລູກແລ້ວ*.... ອ້າຍຈະບໍ່ບອກໃຜຊ້ຳ! ອ້າຍຈະຮັກເອົາລ້ຽງເອົາ.... ດັ່ງນ້ອງເຫັນນີ້ລະເຮືອນອ້າຍກະດາຍ ເຖິງບໍ່ກວ້າງຂວາງໃຫຍ່ໂຕ ແຕ່ກໍມີຫລັງຄາມຸງມີຝາແອ້ມກັນແດດກັນຝົນພໍທີ່ຊິເປັນບ່ອນລ້ຽງລູກເຮົາຈົນໃຫຍ່ກ້າໜ້າບານໄດ້ຢູ່"

"ອ້າຍຂໍນຳນ້ອງພຽງທີ່ນີ້ ອ້າຍຍອມຮັບຜິດທຸກຢ່າງທີ່ເຮັດໃຫ້ນ້ອງຂາຍໜ້າ...."

ອ້າຍໂພເວົ້າຊ່ຳນີ້ສາຍຄຳກໍເຂົ້າໃຈແລ້ວ ເຂົ້າໃຈວ່າອ້າຍໂພ *ມີນ້ຳໃຈ* ຕໍ່ນາງຈັ່ງໃດ... ສາຍຄຳອຸ່ນໃຈນຳຄຳເວົ້ານັ້ນແລະເຊື່ອວ່າອ້າຍໂພຕ້ອງເຮັດແທ້ທຳຈິງ... ແຕ່.... ນາງຈະເຮັດ

ນຳຄວາມລາວໄດ້ບໍ່... ຍາພໍ່ຍາແມ່ຫລືຈະຍອມປະໃຫ້ທ້ອງໃດ່ໃຫຍ່ຂຶ້ນ.... ເພິ່ນຍ້ານຂາຍໜ້າຂາຍຕາເພິ່ນ.... ເພິ່ນຕ້ອງການແຕ່ຈະໃຫ້ນາງ *ຂ້າລູກ... ເພື່ອເປັນສາວຄືນຄືເກົ່າ...* ເພິ່ນບໍ່ໄດ້ຫ່ວງໃຍວ່າ ສາຍຄຳຈະເຈັບປວດ ຫລືອາດຈະຕາຍຍ້ອນ...

ສາຍຄຳໜີຈາກອ້າຍໂພມາໂດຍໄວ ຕົ້ນຕັນໃຈຈົນບໍ່ສາມາດຈະເວົ້າຫຍັງນຳລາວຕໍ່ໄປໄດ້ ນາງຂໍເວລາຄິດເສັຽກ່ອນ

ນາງຍ່າງມາສູ່ທີ່ແຫ່ງນີ້ ຂົວຫາດດອນຈັນ.... ບ່ອນປ່ຽວເພື່ອຄິດຫາຄຳຕອບໃຫ້ແກ່ຕົນເອງ... ນາງມາຈົມຢູ່ກັບຄວາມທຸກໝອງໄໝ້ໃນຫົວອົກເປັນເວລາຫລາຍຊົ່ວໂມງແລ້ວ.... ແຕ່ຕາເວັນບ່າຍຈົນຄ້ອຍແລງ.... ຫລຽວລົງຫລຸ່ມຂົວທີ່ສູງເປັນຕາຍ້ານເຮັດໃຫ້ໃຈສັ່ນເຊັນຂຶ້ນມາ ໃນທີ່ປອດຄົນເຊັ່ນນີ້ຫົວຄິດນຶ່ງແວບອອກມາ ເຮັດໃຫ້ສາຍຄຳຢາກຕັດບັນຫາໂດຍວິທີ *ລາໂລກນີ້ໄປເສັຽ*.... ແຕ່ນາງກໍລັງເລໃຈ ເພາະເບິ່ງຄືວ່າ ນາງບໍ່ທັນໝົດຫົນທາງເທື່ອ ຍ່າງນ້ອຍກະມີ *ອ້າຍໂພທີ່ຕ້ອງການໃຫ້ນາງມີຊີວິດ ໃຫ້ລູກໃນທ້ອງມີຊີວິດ !*

ແຕ່ຈະຢູ່ກັບຍາພໍ່ຍາແມ່ຕໍ່ໄປ ໂດຍບໍ່ເອົາລູກອອກເພິ່ນກໍຄົງບໍ່ຍອມເດັດຂາດ... ຈະໜີຈາກພໍ່ແມ່ໄປສູ່ອ້ອມແຂນຂອງອ້າຍໂພ ລາວກໍຄົງລ້ຽງສາຍຄຳກຸ້ມຢູ່... ແຕ່ນາງຈະຕ້ອງຖືກຕັດ

ຂາດຈາກພໍ່ແມ່.... ພໍ່ແມ່ຈຶ່ງມີລູກສາວຜູ້ດຽວແຕ່ສາຍຄຳທີ່ມັນເພີ່ນເອງຈະມີຊີວິດຢູ່ຕໍ່ໄປໂດຍປາສຈາກນາງໄດ້ບໍ່....? ແຕ່ຄັນຈະຣິດລູກອອກຄືຄຳພໍ່ແມ່ບອກ... ນາງກໍຄືຈະເບັ່ນຕາຕກອນຊີວິດນ້ອຍ ໆ ຈຶ່ງເກີດຈາກການກະທຳອັນຮູ້ເທົ່າບໍ່ເຖິງການຂອງນາງ.... ນາງຄົງຈະຕ້ອງທໍຣະມານທາງໃຈໄປຕລອດຊີວິດ !

*ສາຍຄຳຢືນຄິດຢູ່ທັ້ນ ດ້ວຍຄວາມສົລວົນຈົນໃຈສຸດທີ່ຍິ່ງ ແຕ່ບ່າຍຈົນຄ່ຳ.... ນາງຈະຕ້ອງຫາຄຳຕອບຕາຍໂຕໃຫ້ໄດ້.... ຄຳຕອບທີ່ບໍ່ມີໃຜຈະໃຫ້ນາງໄດ້.... ນອກຈາກໂຕສາຍຄຳເອງ....*



## *ໃຜ່ສູງເກີນສັກ*

■ ໃຜ່ຜົ້ນປອງດອກຟ້າ ຢ໊ຍ່ອງປອງໝາຍ

ສູງສົ່ງເບັ້ນດາວລອຍ ເລື່ອນບົນດົນຫ້ອງ

ເກີນກວ່າກຳລັງອ້າຍ ຊາຍໝອຍເອື້ອມຮອດ

ສັກດີມາຕ່ຳຕ້ອຍ ກາກ້າບໍ່ເກິ່ງທົງ ແທ້ແລ້ວ

■ ປອງຢາກ ຮຽງຮ່ວມນ້ອງ ນ້ອງບໍ່ຫລ່າຕາຫລຽວ

ຮັກບໍ່ ສົມພົງພັນ ວາສນາມາງຟ້າ

ເກີນກ່າຍ ປອງປີນຂຶ້ນ ໝາກເຂືອເຄືອຄ້າງໝາກຖົ່ວ

ຕົວບໍ່ເຄີຍໄຕ່ຄ້າງ ຈົ່ງຄາງໂອ້ໂອ່ລະນໍ

*— ປາໄມ —*

■ ຄົນມີເງິນ ຈຶ່ງບໍຣິຈາກເງິນໄດ້

ຄົນມີເມດຕາຈິດ ຈຶ່ງຮູ້ຈັກເຜື່ອແຜ່ເມດຕາແກ່ສັດຜູ່ຍາກ

ຄົນມີມະນຸສຍະທັມ ຈຶ່ງໃຫ້ຄວາມເປັ່ນທັມແກ່ຜູ່ອື່ນ

ຄົນມີຈິດໃຈສູງ ຈຶ່ງເຜື່ອເຫລືອນ້ຳໃຈເພື່ອຄົນທີ່ມີສະພາບ

ຈິດຕ່ຳຊາມ...

# ທາງເລືອກ

## — ຂອງ —

# ສິດທິເດດ

□ *ໂດຍ ດອກເກດ* □

■ ມັກທັງສອງສາວທີ່ ໆ ກັນ ຈົນບໍ່ອາດຕັດສິນ ໃຈເລືອກໃຜໄດ້... ທາງຜູ່ສາວກໍ່ຊື່ແສນຊື່ມ໌ ໝູ່ບອກຖ້າ ກໍຖ້າມາຫລາຍປີ....

*ປິ່ນແກ້ວ ສາວຮຸ່ນນ້ອງຮ່ວມໂຮງຮຽນ ແລ່ນມາຫາເຮົາຢູ່ເຮືອນ ເຊົ້າມື້ນີ້* ຂນະທີ່ຝົນກຳລັງຕົກລິນຍັບ ໆ ຕາມພາສາຣະດູຝົນໃນເມືອງລາວ.

"ໂອ້ຍ ຈັ່ງແມ່ນມາຍາກມາຊານ໌ ມາຫາເອື້ອຍສິນີ້ ເບິ່ງສົ້ນເສື້ອດີ ໆ ເປື້ອນເປິະພົດ ລຸຍຕົມປານຊິໄປດຳນາເອົາຊິ້ ໆ"

"ບໍ່ແມ່ນຄວາມຜິດຂອງປະຊາຣາສດອນ ບ້ານນີ້ດອກນ້ອງ ເຫັນໃຈເທສບານແດ່ ຝົນຕົກຈັກ ໆ ຊິໃຫ້ພູ່ມາຂຸດຮ່ອງໂກຍດິນຄູນຫົນທາງໃຫ້ຢູ່ກະໂພດໄປ ຍາມແລ້ງເພິ່ນກໍຊ້ຳນ້ຳວຸຕັດຫົນທາງໃຫຍ່ ໆ ໃຫ້ສົມໜ້າສົມຕາບ້ານເມືອງ ທາງເລັກທາງນ້ອຍຈັ່ງຊີ້ ລາວກັນເອງບໍ່ຕ້ອງສ້າງຕ້ອງສາກະໄດ້"

ປິ່ນແກ້ວລ້າງຫູເອົາຂີ້ຕົມອອກຈາກຕີນ ຢູ່ຊານເຮືອນ ໃນມືຖືເກີບຢ່ອງດູ່ງາມຈົ່ມມຸບ ໆ ມິບ ໆ ຕາມພາສາຊາວບ້ານທີ່ບໍ່ພໍໃຈນຳສະພາບຫົນທາງ ທີ່ຕີນທ່ຽວຢ່າທຸກອັນຢ່າງລຳບາກ. ເຮົາພາລາວຍ່າງເລີຍເຂົ້າມາ ໃນຫ້ອງນອນສ່ວນໂຕ

—ເຂົ້າມາລົມກັນໃນຫ້ອງພີ້ນ໌ ເອື້ອຍຍັງບໍ່ໄດ້ແຕ່ງໜ້າແຕ່ງຕາຊ້ຳ ຫາກໍ່ລຸກຈາກບ່ອນ ຝົນຕົກລິນແບບນີ້ນອນດີພິລຶກ, ນ້ອງບໍ່ເລີຍໄປໃສຕວ່າ ?

"ບໍ່ ໆ ນ້ອງມາຫລິ້ນນຳເອື້ອຍ ມີເຣື່ອງຢາກປຶກສາແດ່"

"ເຣື່ອງຫຍັງລະ ເຣື່ອງຊູ້ ເຣື່ອງສາວ ພວກເຈົ້ານັ້ນຕິ"

ເຮົາເດົາ ເພາະຮູ້ວ່າຂ່າວສາວສມັຍນີ້ ບໍ່ວ່າໜ້າໃດ ຍິ່ງສາວງາມ ໆ ແດ່ແລ້ວຕ້ອງມີບັ້ນທາຫລາຍຊູ້ ຫລາຍແຟນ ກັນທັງນັ້ນ.

"ເຣື່ອງຊູ້ເຣື່ອງສາວນີ້ແລ້ວເອື້ອຍເອີ້ຍ ແຕ່ບໍ່ແມ່ນເຣື່ອງຂອງນ້ອງດອກ ເຣື່ອງຂອງໝູ່.... ສິດທິເດດຫັ້ນນະ ເອື້ອຍຈື່ບໍ່ ?"

"ໂອ.... ກະຈື່ລະຕິ ໄປກິນລ້ຽງຢູ່ໃສກັບນ້ອງກະພ້ລາວທຸກເທື່ອ ທ່າທາງເບັ່ນຂ່າວມີໄອໃຈຮ້ອນບໍ່ໜ້ອຍ ເບັ່ນຈັ້ງໃດ ມາຮ້ອນໃສ່ນ້ອງຫວ໊ະ ?"

"ອຸ້ຍ ! ບໍ່ດອກ ກັບນ້ອງລາວບໍ່ເບັ່ນດອກ ລົ້ງເຄີຍກັນມາແຕ່ດົນ ຕົບຫົວເຕະກົ້ນກັນມາແຕ່ມັທຍົມປີທີນຶ່ງພຸ້ນ ອັນມີໄອໃຈຮ້ອນນັ້ນລາວກະເບັ່ນແທ້ຫັ້ນລະ ຈັ້ງວ່າມັນມາຫຍຸ້ງຢູ່ຫົວນ້ອງນີ້ໝົດ ເອື້ອຍກະຮູ້ຕວ່າ ພວກນ້ອງຈະໄປຝຶກງານເມືອງຝຣັ່ງໃນອາທິດໜ້ານີ້ ດຽວນີ້ກຳລັງແລ່ນເຮັດໜັງສື ສິດທິເດດນີ້

ລະ *ລາວມີຊູ້ສອງຄົນ* ລາວບໍ່ຈັກຈະເຮັດຈັ່ງໃດ ?"

—ສອງຄົນ ? ເຮົາຖາມດ້ວຍຄວາມປລາດໃຈ ເພາະໄດ້ຍິນແຕ່ຜູ້ສາວມີຜູ້ບ່າວຫລາຍ ບໍ່ຈັກຈະເລືອກໃຜ ບາດນີ້ຊ້ຳແມ່ນຜູ້ຊາຍ ເອີນໍ—ໂລກນີ້ ກະມີແນວເບັ່ນຕາເບິ່ງຢູ່ຫລາຍເດ້ຊັ້ນ

— ໂອ້ຍ ກະສອງຄົນແທ້ສອງຄົນວ່າ ໃຜກະຮູ້ທົ່ວເມືອງ ນາງຈັນດາຣາ ລູກຍາ... ກັບນາງພອນສວັນ ສາວງາມດຸ້ມດຽວກັນທັງສອງ ນ້ອງກະຮູ້ຈັກຂະເຈົ້າພົດ ຈັ່ງຊີ້ເຣື່ອງມັນກໍສິດທິເດດເປັ່ນຜູ້ກັບອ້າຍຂອງຈັນດາຣາ ຕອນໜໍ່ໄປຫາອ້າຍຫັ້ນໂລດຖືກແຕ່ນ້ອງສາວຢູ່ເລີຍລົງເລີຍແກ່ນກັນ ແຕ່ເວລານັ້ນເດດມັກຢູ່ກັບພອນສວັນແລ້ວ ຈັນດາຣາກະຮູ້ຢູ່ ແຕ່ກະຍັງມັກເດດຄືນຄືກັນ ໃຜກະຕິກະຕຽນພໍແຮງ ເດດເລີຍແຫ່ງອີຕົນຈັນດາຣາແລ້ວກະເລີຍບໍ່ວາງເລີຍໄປມາບໍ່ຂາດ ທາງພອນສວັນກໍໄປອ້ອນອອຍແລະສັນຍານັ້ນ ໆ ນີ້ ໆ ຜູ້ສາວເຂົາພໍ່ແມ່ແພງ ມີຄົນມາມັກເຕັມກໍບໍ່ຍອມເອົາ ຍ້ອນທ້າວນີ້ໄປໃຫ້ສັນຍານຳພໍ່ແມ່ເຂົາ ວ່າຂໍຮຽນສຸດກ່ອນ"

—ເອີ້ ແລ້ວເປັ່ນຫຍັງລະຈັ່ງຫຍຸ້ງກັນອື້ນ ! ເຮົາອົດຂັດບໍ່ໄດ້ ທັງ ໆ ທີ່ມືຍັງຈັບເຄື່ອງສຳອາງອື້ນລູບໜ້າຢູ່ ມັກພັ້ງແທ້ ໆ ເຣື່ອງຜູ້ອື່ນນີ້ກໍ້

—ອ້າວ ກະນາງຈັນດາຣາລາວກະຫວັງບໍ່ໜ້ອຍຄືກັນ ຍັງວ່າມື້ກ່ອນຫັ້ນ ແລ່ນມາຫານ້ອງຂໍໃຫ້ເອົ້າເດດຊ່ອຍ ລາວຢາກເຮັດໜັງສືຜົວເມັຽໄວ້ກ່ອນ ບໍ່ເອົາລາວໄປເມືອງຝຣັ່ງນຳກໍຢ່າ ນ້ອງກະໄດ້ຮັບຄຳລາວວ່າຊິເອົ້າ ຟາດມື້ວານນີ້ພອນສວັນເຂັ້ນຮ້ອງເຂັ້ນໄຫ້ມາ ວ່າຄັນເດດເຮັດໜັງສືເອົາກັບຈັນດາຣາ ລາວຊິຂ້າໂຕຕາຍ ບໍ່ຢູ່ໃຫ້ໂລກຢຽດຫຍາມດອກ ໃຫ້ໝູ່ຍາດເອົາຊູ້ແລ້ວໄປເມືອງນອກນຳກັນ ເອົ້າໃຫ້ນ້ອງປາກບໍ່ອອກອີກ ເພາະຮູ້ຢູ່ເຕັມເອິກວ່າ ພອນສວັນນັ້ນແມ່ນຊູ້ຜູ້ທຳອິດແທ້ ໆ ຈະໄປເອົ້າຊ່ອຍຈັນດາຣາ ກໍຄືເຈຕນາຈະຂ້າພອນສວັນໂພດ, ເອື້ອຍວ່າຊິໃຫ້ນ້ອງເຮັດຈັ່ງໃດ ?

—ພໍ່າວກ່ອນ ໆ.... ເອື້ອຍຖາມແດ່ວ່າ ເຂັ້ນຫຍັງພວກຜູ້ສາວທ້າວເດດ ຈຶ່ງແລ່ນມາຫານ້ອງທັງສອງຄົນ ?

—ໂອ໊ ເອື້ອຍຍັງບໍ່ຮູ້ ເດດກັບນ້ອງນັ້ນລົງແກ່ນກັນຫລາຍ ໝໍເລີຍຖືເອົາເຂັ້ນຜູ້ປຶກສາ ແປວ່າລາວມີບັ້ນຫາຫຍັງ ກໍແລ່ນມາຫານ້ອງໝົດ ທັງຈັນດາຣາແລະພອນສວັນ ກະຮູ້ວ່າຖ້ານ້ອງວ່າຫຍັງ ເດດມັກເຮັດນຳສເມີ„

—ແລ້ວເຣື່ອງນີ້ ນ້ອງເຊື່ອວ່າເດດ ຈະເຮັດຕາມຄວາມນ້ອງບໍ່ ?

–ຍັງວ່າ ນ້ອງເອົາບໍ່ໄດ້ ນ້ອງຮອດບໍ່ຮູ້ວ່າຈະເອົາກັບລາວຈັ່ງໃດ ມື້ນີ້ລາວຊິມາຫາ ນ້ອງຢາກຮ້າຍເລີຍເປີດມາຫາເອື້ອຍນີ້ລະ !

– ເອີ ຈັ່ງແມ່ນຍາກຄິເພິ່ນວ່ານໍ້ ຄວາຍຫລາຍໂຕດຶງຈ່ອງນີ້, ຕາມຄວາມຄິດຂອງນ້ອງແລ້ວ ນ້ອງວ່າລາວມັກໃຜຫລາຍທີ່ ?"

– ນ້ອງເບິ່ງບໍ່ອອກບອກບໍ່ຖືກຄືກັນ ລາວດີນໍາເຂົາເຈົ້າທັງສອງເທົ່າ ໆ ກັນ ນ້ອງເຄີຍຖາມຫລາຍເທື່ອວ່າ "ຊິເອົາໃຜແທ້ເດ້ເດດເອື້ອຍ ໃຫ້ເຈົ້າເລືອກເຈົ້າຊັ່ງຢູ່ຫັ້ນ ຈັກພ້ອຍຊິບໍ່ໄດ້ຈັກຄົນຊ້າດອກ" ເອື້ອຍຮູ້ບໍ່ວ່າລາວຕອບນ້ອງຈັ່ງໃດ ? ລາວວ່າຍາກຫລາຍ ເຮົາບໍ່ເອົາຈັກຄົກຊ້າດອກ ໄປ *ຫາເອົາມືທີສາມດີກວ່າ* ນໍ້ ແກ້ວນໍ້"

– ມືທີສາມ ?"

– ບໍ່ມີດອກ ລາວເວົ້າໄປຊື່ ໆ ນີ້ແລ້ວ..." ປິ່ນແກ້ວພ້າວປະຕິເສດ

– ແຕ່ເອື້ອຍວ່າ ມືທີສາມຢູ່ໃກ້ບໍ່ໃກ່ນໍ່າ"

– ເອື້ອຍຊິຄິດໂລ ໆ ເລ ໆ ໃຫ້ນ້ອງແລ້ວໃດຫັ້ນ" ປິ່ນແກ້ວພ້າແດງຮິດຮັດຂຶ້ນ

– ບໍ່ແມ່ນໂລ ໆ ເລ ໆ ນ່າ  ແກ້ວຟັ່ງເອື້ອຍດີ ໆ

ເດດລາວເຊື່ອວ່າ  ລາວຣັກມັກຈັນດາຣາກັບພອນສວັນທໍ່ ໆ ກັນ ຈົນບໍ່ສາມາດຕັດສິນໃຈເລືອກໃຜໄດ້  ລາວໄປຫາຜູ້ນຶ່ງລາວກໍ່ຕົວະໃຫ້ຖ້າ  ໄປຫາຜູ້ທີສອງກໍ່ຍົວະເອົາໃຈໄວ້  ບໍ່ໃຫ້ເຂົາເອົາໃຈອອກຫ່າງລາວ  ຜູ້ສາວທັງສອງກໍ່ຊື່ແສນຊື່ນ  ໝູ່ບອກຖ້າກໍຖ້າມາຫລາຍປີດີນ້ອງວ່າ  ແຕ່ກັບນ້ອງລາວຊ້ຳເວົ້າໃຫ້ຟັ່ງຕາມຊື່  ບໍ່ໄດ້ຕົວະຫລອກໃຫ້ດີໃຈ  ແປວ່າລາວມີຄວາມຈິງໃຈຕໍ່ນ້ອງ  ແລ້ວນ້ອງລະເອື້ອຍວ່ານ້ອງກະມີຄວາມຫ່ວງໃຍ  ເຂົ້າໃຈເຫັນໃຈລາວຫລາຍກວ່າພວກສອງຄົນນັ້ນອີກຊ້ຳ  ສິ່ງເຫລົ່ານີ້ໃດ໋ເອື້ອຍວ່າ  ມັນເປັນ *ຣາກຖານຂອງຄວາມຣັກທີ່ແທ້ຈິງ* ນ້ອງຄຶດເບິ່ງວ່າ  ສິ່ງທີ່ເອື້ອຍເວົ້າມາພີ້  ມີສ່ວນຖືກຫລືຜິດຫລາຍກວ່າກັນ"

ປິ່ນແກ້ວຫລົບສາຍຕາເຮົາ  ພວງແກ້ມທັງສອງເປັ່ນສີແດງເຣື່ອຂຶ້ນ.

– ເດດເວົ້າຫລິ້ນ ໆ  ນ້ອງບໍ່ຖືລາວຈັກເທື່ອ"

– ເວົ້າຫລິ້ນແບບໃດ  ສອນໃຫ້ເອື້ອຍຟັ່ງເບິ່ງ ?"

ປິ່ນແກ້ວສິອິດ ໆ ເອື້ອນ ໆ ແດ່  ຕາມພາສາຍິງສາວ

–ຫວ່າງຮູ້ວ່າ  ຈະໄດ້ໄປຝຶກງານໃໝ່ ໆ ນັ້ນ  ເດດ

ຟ້າວມາບອກນ້ອງກ່ອນໝູ່ ທັງວ່າ "ເຮົາຂໍຢູ່ເມືອງດຽວກັບແກ້ວດອກ ບໍ່ໄວ້ໃຈພວກດັງໂມຕາອຸ້ມ ທັງພວກໝູ່ໄປນຳກັນນີ້ອີກ" ນ້ອງກະດ່າຫົວເອົາ "ເຈົ້າເວົ້າຕາຍ ໆ ຈັ່ງຊີ້ລະ ຈ້າງຂ້ອຍກະບໍ່ຢູ່ເມືອງດຽວກັບເຈົ້າ ຂີ້ດ້ານຟັງເຣື່ອງສາວນັ້ນສາວນີ້" ແລ້ວນ້ອງເລີຍຖາມລາວວ່າ "ເຈົ້າຊິເອົາໃຜໄປນຳ ຫລືວ່າຊິໄປເອົາສາວຝຣັ່ງຢູ່ພຸ້ນ ຢ່າໃຫ້ຂ້ອຍຫຍຸ້ງນຳຫລາຍເດີ້" ເພິ່ນຕອບວ່າ "ບໍ່ເອົາໄປຈັກຄົນດອກ" ນ້ອງເລີຍວ່າ "ເກີນເຮົາຊັງ ຄົນຂີ້ຕົວະຫລອກລວງຊ໊ະ ຕົວະຜູ້ນຶ່ງບໍ່ພໍໄປຕົວະຕັ້ງສອງ ໃຈຄໍເຈົ້າຊິໃຫ້ໝູ່ຖ້າຢູ່ອີກຈັກປີ *ຄັນບໍ່ເອົາກະມີຄວາມກ້າຫານບອກເຂົາແມ້* ອັນນີ້ໂລດຕົວະນີ້ຕົວະເວັ້ນໄປ" ນີ້ນັ້ນລາວຈົ່ມພ້ອຍດຽວວ່າ "ຕາຍແລ້ວບາດນີ້ ໝູ່ຊັງປານນີ້ພິໄປຕາຍຊ້ຳດອກ, ເກີນວ່າບໍ່ມີໃຜເຫັນໃຈຊ໊ະ" ນ້ອງບໍ່ຕໍ່ຄວາມທັງເຮັດໜ້າໃຄ່ໃສ່ ເດດເລີຍລົງເຮືອນໄປຊື່ ໆ ນ້ອງກໍ່ຄິດວ່າຊິແລ້ວໄປຄືແຕ່ກ່ອນຕີ ຊິໃດ່ໄດ້ນີ້ຕໍ່ມາ ຍາແມ່ເພິ່ນພໍ້ນ້ອງຢູ່ຕລາດ ຟາດຖາມຂຶ້ນຕໍ່ໜ້າຍາແມ່ນ້ອງເລີຍວ່າ "ພວກລູກຜິດໃຈກັນບໍ້ ເດດມາຈົ່ມກັບແມ່ ?" ນ້ອງອາຍແມ່ກະຜ່ອງມັ້ນ ຢ້ານເພິ່ນເຂົ້າໃຈຜິດ, ຢາກມຸດລົງກັບພື້ນດິນ ເລີຍຕອບໃຫ້ແລ້ວ ໆ ໄປວ່າ "ໂດຍ" ແລ້ວກໍແກ່ແຂນແມ່ພີ, ປານນັ້ນເພິ່ນຍັງຮ້ອງນຳວ່າ "ນີ້ແລງແມ່ຊິບອກເດດໄປຫາ"

ນີ້ແລງມາເພິ່ນກໍແລ່ນໜ້າບານມາອີຫລີ   ນ້ອງດ່າຫົວເອົາອີກວ່າ “ເຣື່ອງຫຍັງຈຶ່ງໄປສ່ຮອດຜູ້ໃຫຍ່ໃຫ້ເພິ່ນເຂົ້າໃຈຜິດ   ຂອຍບໍ່ວ່າຊິ ເປັນຜູ້ທີ່ສາມໃຫ້ເຈົ້າເລືອກໄດ໋ ! ມີສອງຊູ້ຫັ້ນກະມາຫຍຸ້ງຫົວກັນໝໍ່ ແຮງແລ້ວ ! ເດດໜ້າເສົ້າຈົ່ມເສັຽໃຈ ແລະຂໍໂທດຂໍໂພຍນໍານ້ອງ ເປັນການໃຫຍ່ ເວົ້າສຽດ ໆ ວ່າ “ດີວ່າຫັ້ນແລ້ວ ເຮົາມັນຄົນ ຊົ່ວຫລາຍໃຈ ເລີຍບໍ່ມີໃຜເອົາອີ່ຕົນແທ້ ໆ ຈັກຄົນ”   ນ້ອງເລີຍ ວ່າ “ກະໄປຫາເອົາເທາະແມ້ ໄປຖາມເບິ່ງ ໃຜອີ່ຕົນເຈົ້າຫລາຍ ກວ່າໃຜ ອັນຈັນດາຣາກັບພອນສວັນນັ້ນນ໋ະ ແລ້ວກະເລືອກເອົາ ຊັ້ນຕ໋ວ່າ ຊິມາຈົ່ມຕາຍຫຍັງຢູ່ນີ້” ເວົ້າຮອດເຣື່ອງນີ້ມາ ເພິ່ນກະ ເຊົາໜ້າໝອງ ລົມກັນໄປຫລາຍແນວ ບາດຊິລົງເຮືອນລະວ່າ “ເຮົາ ຍ້ານພວກມັນບໍ່ອີ່ຕົນເຮົາຫລາຍສ່າແກ້ວຊ້ຳ”   ເວົ້າແນວນີ້ແລ້ວ ນ້ອງເລີຍບໍ່ຖືຊາ”.

– ເອື້ອຍວ່າ ເປັນຕາຄິດຢູ່ໄດ໋”

– ໂອ້ຍເອື້ອຍສິ ຂໍທານນໍາເທາະ ຢ່າເວົ້າໃຫ້ນ້ອງ ຂົມຫົວລຸກເລີຍ ນ້ອງເຂົ້າໃຈເຫັນໃຈເດດ ໃນຖານະໝູ່ແທ້ ໆ....

*ແຕ່ວ່າເຣື່ອງນີ້ນ້ອງຈິບອກລາວຈັ່ງໃດດີ ?”*

ບໍ່ທັນທີ່ເຮົາຈະຖຽງປົ່ນແກ້ວຕໍ່   ສຽງຮ້ອງເຫວີກ ຫວາກຂອງຊາຍຜູ້ນຶ່ງ ກໍດັງຂັດຈັງຫວະຂຶ້ນ

– ແກ້ວ–ແກ້ວ ໂອ້ຍ... ຈັ່ງແມ່ນເຮັດທໍຣະມານກັນນໍ້ ໂອ ! ສະບາຍດີເອີ້ອຍສີ''

ເຮົາພາປິ່ນແກ້ວອອກມາສ່ອງເບິ່ງປາຍຊານຝົນ

– ເດດນໍາມາຣອດອິຫລີ'' ປິ່ນແກ້ວຈົ່ມພຶມພໍາ ແຕ່ສີໜ້າກໍບອກຄວາມຍິນດີ ອາດໃດອາດນຶ່ງ

– ຂຶ້ນມາລ້າງຕີນເທິງເຮືອນພີ້ ທ້າວເດດ... ປິ່ນແກ້ວພອມຈົ່ມຣອດເຈົ້າພໍດີ''

– ຈົ່ມຫຍັ້ງເອີ້ອຍ.... ບໍ່ແມ່ນຂາຍໜ້າພໍແຮງແລ້ວບໍ ?''

ສິດທິເດດລ້າງຕີນແລ້ວ ກໍເຂົ້າມານັ່ງຕັ່ງຊາລົງໃກ້ໆກັບປິ່ນແກ້ວ ດຶງຊອງເຈັ້ຽຂາວ ໆ ອອກມາຈາກຖົງສົ້ງ ແບລົງໃສ່ໂຕະ

– ແກ້ວ ເບິ່ງຊອຍເຮົາແດ່ ຈັນກັບພອມສວັນເອົາມາສົ່ງວ່າຂໍລາຍເຊັນ.... ໂອ້ຍ–ເຮົາໂລດເອົ້າເອົາໂລດ ຈັກຊິເຊັນໃບໃດດີ''

ເຮົາກົ້ມລົງສ່ອງເບິ່ງໜັງສືທີ່ເປັນຕົ້ນເຫດ *ມັນແມ່ນໃບຫນັງສືຜົວເມັຽ ຂຽນເຕັມທຸກຕາຫມ້ອງ* ຍັງແຕ່ບ່ອນວ່າງລາຍເຊັນ ຂອງຜູ່ວ່າຈະເປັນເຈົ້າຂອງທີ່ມັນ.

– ເຮົາວ່າເດດເມືອນອນຄຶດເອງດີ ໆ ຫລືປຶກສາພໍ່ແມ່ອ້າຍນ້ອງເບິ່ງດີຈະດີກວ່າ"

– ພໍ່ແມ່ອ້າຍນ້ອງເຮົາບໍ່ມີໃຜຮູ້ເຫັນ ຈັນກັບພອນສວັນດີທີ່ແທ້ ແລະໂຕກະຮູ້ໃຈເຮົາດີກວ່າທຸກຄົນອີກ, ນໍແກ້ວນໍ ຊ່ອຍເຮົາໄວ້ເທາະ ບອກໂລກວ່າເຮົາຈະເລືອກໃຜ ຫລືບໍ່ເລືອກເລີຍ".

ສິດທິເດດ ອ້ອນວອນທັງສຽງທັງແສງຕາ ເບັ້ນຕາອິ່ຕົນອິ່ຫລີ ເຮົາກໍຫາມາໄດ້ຍິນໄດ້ເຫັນແບບນີ້ ກໍເລີຍມ່ອນໄປນຳປິ່ນແກ້ວຫລຽວເບິ່ງເຮົາຢ່າງຂໍຄວາມເຫັນ ເຮົາງຶກຫົວໃຫ້.

–ເຮົາຄຶດວ່າ ເດດໄປເມືອງຝຣັ່ງໃນນາມຊາຍໂສດຄືຊິດີກວ່າ ?

– ຊາຍໂສດ ? ຊັ້ນໝັງສືນີ້ເດ້ ?"

– ເອົາໄປສົ່ງຫລືເກັບມ້ຽນໄວ້ ບາດໂຕກັບມາ ແຕ່ໂຕຕ້ອງອະທິບາຍໃຫ້ຂະເຈົ້າຟັ່ງຕາມຊື່ ວ່າໂຕຕັດສິນໃຈຍັງບໍ່ໄດ້ຂໍເວລາອີກ.... ເອີ້–ເຮົາບໍ່ໄດ້ເວົ້າໃຫ້ເດດຟັ່ງວ່າ ພອນສວັນກໍມາຫາເຮົາ.... ລາວວ່າຖ້າໂຕເອົາກັບຈັນດາຣາ ລາວຈະຂ້າໂຕຕາຍທັນທີ"

ສິດທິເດດມິດໄປ ແສງຕາຕົກຕ່ຳ ມີບິດກັນຄືຄົນ

ໃຊ້ຄວາມຄິດພັກ ບຶດນຶ່ງກໍລຸກຂຶ້ນຢືນ

— ຕົກລົງແກ້ວ... ຊັ້ນເຮົາຂໍຝາກໜັງສືນີ້ໄວ້ ໃນ ຄວາມອາຣັກຂາຂອງໂຕ ຈົນກວ່າເຮົາຈະຕັດສິນໃຈ"

ແລ້ວສິດທິເດດກໍລາຈາກໄປ ກາງຝາຍ ຝົນທີ່ມ່າລົງ ມາ ແລະເທິງຫົນທາງທີ່ເບັ້ນບອກ ປິ່ນແກ້ວແນມນຳຫລັງລາວໄປ ນິດ ໆ ມື້ນັ້ນເຮົາກໍເລີຍຊວນປິ່ນແກ້ວຢູ່ກິນເຂົ້າເພນ ແລ້ວລົມ ເຣື່ອງເມືອງຝຣັ່ງກັນ ໃນນາມເຮົາເຄີຍຜ່ານແດນສວັນນີ້ມາແລ້ວ ສັ່ງສອນລາວເລັກນ້ອຍ ເຣື່ອງໄປມາແລະການຄົບຄ້າສະມາຄົມກັບ ເພື່ອນຕ່າງເພດ ຈົນສົມຄວນແກ່ເວລາ.

ປິ່ນແກ້ວພ້ອມດ້ວຍໝູ່ຮ່ວມສຳນັກສຶກສາ ບິນຈາກ ວຽງຈັນໄປແລ້ວ, ມື້ຂະເຈົ້າອອກເດີນທາງນັ້ນ ເຮົາກໍໄປສົ່ງທີ່ເດີ່ນ ຍົນວັດໄຕ, ຈັນດາຣາແລະພອນສວັນພາໝອງທັງສອງ ແຕ່ກໍມີ ພວງມະລັຍ ດອກສາມປີ (ກໍບໍ່ທ່ຽວ) ມາຄ້ອງຄໍສິດທິເດດຄືກັນ.

× × × ×

*ຣະດູຝົນຢູ່ບ້ານເຮົາຜ່ານໄປແລ້ວ* ເຮົາ ເດົາເອົາຕາມພາສາຄົນເຄີຍຜ່ານເມືອງຝຣັ່ງມາແລ້ວວ່າ ເວລາດຽວ ກັນນີ້ ທາງປະເທດທ່ານພຸ້ນ ກໍພວມກ້າວເຂົ້າສູ່ຣະດູໃບໄມ້ຫລົ່ນ ປ່າໄມ້ໃບຫຍ້າທັງຫລາຍ ຈະຫລ່າເຫລືອງແດງແຫ້ງທ່ຽວລົງເທື່ອລະ

ພ້ອຍ ຄືຈິຕກອນຄ່ອຍ ໆ ຟາດສີຕ່າງ ໆ ເຫລົ່ານັ້ນ ລົງເທິງແຜ່ນຜ້າຂອງລາວ, ອາກາດຈະໜາວເຢັ້ນ ທັງລົມແຮງກໍຈະພັດເປົ່າປິວເອົາໃບໄມ້ຕາຍຫລົ່ນອອກຈາກງ່າ ປ່າທັງປ່າຈະເຫລືອແຕ່ຕົ້ນໄມ້ສີດຳງ່ອມເຫງົາ ໄຮ້ສຽງຮ້ອງຂອງນົກໜູ...ພວກນັກສຶກສາໄປໃໝ່ ໆ ເບິ່ງແລ້ວຄົງຫວັ່ງເວ ຄິດຮອດສຽງຈ໊ອກ ໆ ແຈ໊ກ ໆ ຂອງນົກນ້ອຍໃນພຸ່ມໄມ້ສີຂຽວ ແລະແສງແດດອັນອົບອຸ່ນຂອງບ້ານເກີດເມືອງນອນ ແລະບໍ່ດົນຫິມະສີຂາວກໍຈະຮອຍຮຳລົງມາ... ໝາຍຄວາມວ່າເວລານັ້ນ ຄວາມໜາວເຢັ່ນເຂົ້າໄປຮອດໃນກະດູກ ກໍຈະແຜ່ຄຸມໄປທົ່ວພິພົບ.... ເຮົາຄິດຫ່ວງປິ່ນແກ້ວ ແຕ່ກໍໄດ້ແຕ່ຫວັງໃຫ້ຫົວໃຈອັນໂດດດ່ຽວແລະເຂັ້ມແຂງຂອງເລົາ *ບໍ່ສລາຍຫມົດຄວາມອົດທົນລົງ ຄືຫິມະເປື່ອຍລະລາຍ* ເມື່ອຖືກຄວາມຮ້ອນເອົ້າ ພຽງບຶດນຶ່ງຍາມດຽວ.

ເຮົາໄດ້ຮັບຈົດໝາຍປຶກບັກໃຫຍ່ຈາກປິ່ນແກ້ວ ຍາມພັກບຸນໂນແອລ ແລະຮູບຖ່າຍພິມສອດສີທັມມະຊາດງົດງາມແຜ່ນນຶ່ງ ປິ່ນແກ້ວເກົ້າຜົມໃຫຍ່ ຫົ່ມເສື້ອໃໝຄຳເຈັກ ນັ່ງຮຽງກັບສິດທິເດດໃນຊຸດສາກົນສີຊ້ຳ ທັງສອງຍິ້ມບອກຄວາມສຸກຢ່າງແທ້

ຈິງ... ເຮົາຟ້າວປີ້ນເບິ່ງທາງຫລັງຮູບທັນທີ....

“ຮູບຖ່າຍອັນທີ່.... ຄືນສລອງອັນແຕ່ງດອງ ຂອງ ພອກນ້ອງ ທີ່ ...

ຮັກແລະຄິດຮອດສເນີ

ປັ່ນແກ້ວ – ສິດທິເດດ

ນີ້ເອງທາງເລືອກຂອງສິດທິເດດ

24/VII

ຫ້າມຈຳໜ່າຍ



# ລູກເວົ້າຍາກ ພໍ່ແມ່ປາກປຽກ

■ ບູຮານວ່າ ລູກເວົ້າຍາກ ປາກປຽກມານດາ

ໜັງບໍ່ພໍປົກປາຍ ພໍ່ປາກອາຍຕາງເຈົ້າ

ກັມສຸດໂອ້ ບຸດຕາຣັບບາບ

ບາດທ່າ ທິພ່ລົ້ວ ໄປເຕົ້ອງຕູໃຜ ?

■ ສມັຍນີ້ ແມ່ມັກໄພ້ ພໍ່ທ່ຽວຣາຕຣີ

ປິຕາ ສຸຣາແຊມ ບໍ່ຫ່ວງຄືນເຮືອນຍ້າວ

ມາຕາ ເມົາມົວດ້ວຍ ອະບາຍລືມລູກ

ບຸດຕາ ປະບ່ອຍໄວ້ ຈຶ່ງດູດີ້ພ່ບໍ່ສອນ ແທ້ແລ້ວ

– ປາໄນ –

## ພິທີຮັບນ້ອງໃໝ່ ໃນສະຖາບັນການສຶກສາ

■ ຊ່າວ່າ ເປັ່ນຮີດບ້ານ ເມືອງທ່ານອັປປິຍ໌ທາງໃດ

ຫລືວ່າ ເປັ່ນປະເພນີ ພວກເຂົາຂອມຂ້າ(ສມັຍຫີນພຸ້ນ ?)

ຍາມເມື່ອ ໂຮງຮຽນເຂົ້າ ມອມເມົາແບບປລາດ

ເອີ້ນກັນວ່າ "ຮັບນ້ອງ" ເຮີງຫລີ້ນຫລື້ນສມັຍ

■ ທຳພິທີໃຫ້ດັ້ນດ້ານ ມາຂູ່ຜູ່ມາຫລັງ

ຜ່ອງກໍ ທໍຣະມານເຂົາ (ໃຫ້) ແບກດິນ–ເລືອຫຍ້າ ຯລຯ

ຮູ້ວ່າ ກາຊວງສຶກສາມີແຜນໃຫ້ ກຸມເຫັງສິດໃໝ່ ຊັ້ນບໍ?

ດຽວວ່າ ເຂົາຫາກເສັງສອບໄດ້ ຈິ່ງມາເຂົ້າຮ່າຮຽນ ທ່ານເອີຍ

– ດວງຈຳປາ –

# ດອງຈຳປາ

*( ຕອບຈິດຫມາຍທ້າຍເຫລັ້ມ )*

*....ອິກເທື່ອນຶ່ງ ທີ່ຂ້າພະເຈົ້າໄດ້ຕ່າວຄືນ ມາຮັບໃຊ້ ກ່ອມຄວາມຮູ້ສຶກຂອງທ່ານນັກອ່ານທີ່ ຮັກແພງ ດ້ວຍປາຍປາກກາຮາຄາຖືກ ໆ* ພ້ອມກັບໝູ່ ຄນະນ້ອງນຸ່ງຄົບໜ້າ ...ແຕ່ກະວ່າເທິງເຕີບແລະຍາກເຕີບ ກວ່າຊິ ໄດ້ມາພໍ້ກັນໄດ້... ຖ້າແມນແມ່ນຄົນຮັກຄົນແພງກັນແທ້ ກໍຄົງຈອບ ຖ້າຟັ່ງຂ່າວເບັ່ນຕາຍຮ້າຍດີ ດ້ວຍຄວາມເບັ່ນຫ່ວງນຳພໍແຮງ.... ສ່ວນຜູ້ບໍ່ຖືກຊາຕາກັນແຕ່ເກົ່າແດ່ ກໍຄົງຮ້ອງເພງ “ຄັກເຈົ້າແລ້ວບໍ່ ລົມໃຈເຈົ້າແລ້ວບໍ່” ຢູ່ພໍແຮງດີກັນ ຫລືລາງຄົນເຖິງກັບສູດຊັກ “ອະນິຈາວັຕສັງຂາຣາ” ໃຫ້ເບັ່ນພອນກໍບໍ່ຮູ້

...ກະເບັ່ນເຣື່ອງຂອງຄົນຮັກ–ຄົນຊັງ

ຊຸມເຮົາ ຄນະຜູ້ຂຽນໃນປຶ້ມ “*ຫມາວໃຈ*” ນີ້

ເປັນກຸ່ມຊົນຜູ້ຮັກພົງສີ ແລະຮັກແຮງກວ່າອື່ນໃດ ກໍແມ່ນພົງສີລາວ ໃຜຜູ້ໃດຮັກພົງສີລາວດີຊູມເຮົາ ເຊື່ອວ່າຕ້ອງມີໃຈຮັກຊູມເຮົາຢູ່ແດ່ ບໍ່ຫລາຍກໍພ້ອຍ

....ດັ່ນແມ່ນຮັກກັນແທ້ ຊ່ອຍຊື້ມາອ່ານພໍໃຫ້ໄດ້ທືນດືນແດ່ກໍຍັງແດມ.... ດີເທື່ອຈັດພິມໂຮມກອນ "*ກະວີຊາວບ້ານ*" ຂອງ *ປາໄນ* ນັ້ນ ຊ້ຳໃນໄປຫລາຍເຕີບ (ເຕີບນຶ່ງມີສອງກະມານ–ກະມານນຶ່ງມີສອງກະໂປະ).... ເຫັນບໍ່ລະ ຊູມເຮົາມິດຈີ່ລີ້ຈ້ອຍໄປດົນເຕີບ.... ໄປລີ້ພ້າລີ້ຕາຢູ່ໃສຮູ້ບໍ່ ?.... ໄປລີ້ພີ່ເຈົ້າຂອງໂຮງພິມເພິ່ນ ! ກະບໍ່ແມ່ນເພິ່ນຂູດເນື້ອເຖືອຫຍັງພິລຶກດອກ.... ແຕ່ວ່າ *ທ້າວຊ່າປາໄນ* ເພິ່ນກະປະມານຄ່າພິມຜິດດິດຣາຄາຖືກໄວ້ ພິມແລ້ວມາຂາຍ ໘໐໐ ຈ້ອຍກະບໍ່ເຫັນທືນ....

ພົນທີ່ສຸດ ກະເລີຍໄດ້ປະກາດຂາຍ "ກະວີຊາວບ້ານ" ຣາຄາໃໝ່ ເປັນ *໓00* ກີບ ແພງສຳລັບຜູ້ບໍ່ມັກ ແລະບໍ່ແພງເລີຍດັ່ນໃຈໃຜຢາກອ່ານ ແລະຢາກອຸດໜຸນຈຸນເຈືອກັນແທ້

ມິດຈີ່ລີ້ໄປດົນເຕີບ.... ຈັ່ງໄດ້ມາພົບກັນອີກໃນຊຸດ "ໜາວໃຈ" ນີ້ແຫລະ....

ດົນ ໆ ຈັ່ງໄດ້ພົບກັນນໍ່ ກະເລີຍຖືໂອກາດເລືອກເອົາຈົດໝາຍລາຍມື ຜູ້ຮັກຜູ້ແພງທີ່ຂຽນມາຫາຕອບ ຕາງຂອບໃຈໄວ້

ທ້າຍເຫລັ້ມນີ້ ເພື່ອເປັນໄມຕຣີສະໂມສອນກ່ອນຈາກກັນ ເພື່ອຖ້າພົບກັນໃໝ່ ເມື່ອໂອກາດມີ

× × ×

ວຽງຈັນ ທີ່ ໑໙ ກັນຍາ ໑໙໗໑

*ສບາຍ ປາໄນ ແລະ ດວງຈຳປາ*

ຈົດໝາຍສບັບທຳອິດ ທີ່ສົ່ງເຖິງພວກທ່ານນີ້ ເປັນຈົດໝາຍຈາກໃຈຈິງເພື່ອບັລຍາຍຄວາມໃນໃຈ ຄືທ່ານທຳໄດ້ດີຫລາຍ ໂດຍສະເພາະເຣື່ອງສຽດສີສັງຄົມ ຫລືຄຳກອນດີທັງນັ້ນ ອີກປະການນຶ່ງ ຂ້າພະເຈົ້າຢາກຈະໃຫ້ທ່ານຂຽນໄປຫລາຍທີ່ວ່າໃຫ້ຄົນລາວຫັນມານິຍົມໃຊ້ພາສາຂອງລາວເຮົາເອງ ການໄປອ່ານຂອງຕ່າງດ້າວ ຂ້າພະເຈົ້າໄດ້ຍິນເຂົານິນທາວ່າ: *"ຄົນລາວກໍອ່ານໜັງສືໄທ ເຫດນີ້ເປັນຫຍັງລາວບໍ່ໃຊ້ພາສາໄທເປັນພາສາຣາຊການ ?"*

*ຂ້າພະເຈົ້າໄດ້ຍິນ ແສນທີ່ຈະຊອກຊ້ຳອັບອາຍ ຍ້ອນນິສັຍຮັກຊາດ ເລືອດລາວ ຄົນລາວດ້ວຍກັນ*

ໜັງສືອອກໃໝ່ຊຸດ *"ທະເລຊີວິດ"* ທຳໄດ້ດີຫລາຍ ໂດຍສະເພາະເຣື່ອງ *"ບັນທຶກລັບຂ່າວໂສດ"* ແລະ

*"จ่อยแด่-จ่อยแด่"* อ่านแล้วข้าพะเจ้าหัวเกือบพิดนี้ (บ่แม่นหัวขวัน) เพาะเรื่องดีหลาย ตามนิสัยจิงข้าพะเจ้าบ่มักเอ้าเอาะเฉาะหลิย้อยยํ แต่ในนี้มันเป็นดวามจิงแท้ ๆ ข้าพะเจ้าขํถามว่า:

๑. แต่ละเรื่องสิ่งขายแขวงใดแด่ ? แขวงละจักหัว ?

๒. ท่านลงทืนรอมหลายปานใด ?

๓. ยากขํดวามเห็นว่า ทางการเรา *จะยุดยั้งหนังสืต่างปะเทดได้บํ ?* พังสืลาว (หลืพังลาว) เຂົາເປັ້ນທຍັງບ່ຮັບ ?

สุดท้ายขํให้พังสืลาวก้าวพ้า พ้อมมักขຽນ

จากใจจิงของ

*"ปะຊາທິປະໄຕ"*

× × ×

*ຕອບ ຜູ້ຊື່ "ປະຊາທິປະໄຕ"*

*"ດວງຈຳປາ" ຂໍບອກວ່າສບາຍດີດື່ມດີກັນ ແລະຂໍຢືນຢັນວ່າຄວາມສບາຍນັ້ນດີແທ້ ໆ*

ข้ความในจົດໝາຍມາວ່າ แต่ดวามม่วนหู ออน

ຊອນໃຈ... ກໍຍັງດີ... ເຖິງຄວາມເວົ້າບໍ່ແມ່ນເງິນຄຳກ່ຳແກ້ວ ແຕ່ວ່າຄຳຊົມເຊີຍ ກໍຍ່ອມມີຄ່າກວ່າສົມບັດເທິງປອງ ຖ້າຫາກວ່າ... ການຊົມນັ້ນ ເປັນໄປດ້ວຍນ້ຳໃສໃຈຈິງ....

ຂໍທານນ້ຳຫລາຍ ໆ ອັນເຣື່ອງໄທເວົ້າຫຍັງວ່າຫຍັງ ກໍຮູອກັບລາວເຮົານັ້ນ ຢ່ຳພາ *ດວງຈຳປາ* ເວົ້າຫລາຍ.... ເຮົາໃກ້ກັນ.... ເຂົາເຫັນເຮົາເປັນປະເທດນ້ອຍ ເລີຍສຳຄັນຜິດວ່າຕົນນັ້ນສຳຄັນຫລາຍ.... ແລ້ວສ່ວນໄທຜູ້ວ່າ ຢາກໃຫ້ເອົາພາສາໄທເປັນພາສາຣາຊການລາວເຮົານັ້ນ ກໍຄົງແມ່ນໄທມະເຂມະຂາພໍຣາວນັ້ນແລ້ວ... *ບຸກຄົນຂັ້ນທູດ ຫລືຈົນຈຸ້ນປົກຄອງຄົງບໍ່ທານເວົ້າ (ເຄິງແມ່ນໃຈຢາກເວົ້າຢູ່ພໍຕາຍ....)*

ສຳລັບຄຳຖາມຂອງ "*ປະຊາທິປະໄຕ*" ຂໍຖແລງດັ່ງນີ້:

໑. ຄິດຢາກເອົາໄປຈຳໜ່າຍຂາຍສູ່ນັກອ່ານ ໃຫ້ທົ່ວໝົດເຂດແຄວ້ນແດນດິນລາວແລະທົ່ວໂລກ ຖ້າພໍເຮັດໄດ້ ແຕ່ກໍຈົ່ນໃຈ ລາງແຂວງສົ່ງໄປແລ້ວຈ້ອຍອັບ ຈັບມືໃຜດົມກະບໍ່ໄດ້ ຜູ່ຮັກຜູ່ແພງລາງຄົນກໍດີຫລາຍຈົບຫລາຍ.... ຂາຍຊ່ອຍບໍ່ຄິດຄ່າເຫື່ອຄ່າແຮງກໍມີ.... ທາງຮ້ານຢູ່ປາກເຊເປັນຕົ້ນ ໄດ້ຣັບປຶ້ມບັ່ບ ຝາກເງິນສົດມາໃຫ້ປຸບໂລດ... ແນວນີ້ດີ !!!

໘. ເວົ້າເຣື່ອງທຶນ ເວົ້າແປນບໍ່ໄດ້—ຫລາຍຄົນມີ່ນ້ອງອອກຊ່ອຍກັນ.... ກຸດທ້ຽນໄປກໍຕື່ມໃສ່ເລື້ອຍ ດຽວນີ້ຈິເຂົ້າສອງແສນແລ້ວ ແຕ່ກໍຍັງບໍ່ເຫັນຮອມວ່າຈິພໍ

໙. ເຣື່ອງການຈະໃຫ້ຢຸດຢັ້ງໜັງສືຕ່າງປະເທດນີ້ ຂໍຕອບວ່າ *ບໍ່ເຫັນສົມຄວນແລະບໍ່ຈຳເປັ່ນ* ຖ້າຂອງເຮົາມີດີ.... ໜັງສືໄທຫລືໜັງສືຊາດອື່ນ ໆ ບໍ່ດົນກໍພັງໄປເອງ.... ດຽວນີ້ຂອງເຮົາຍັງບໍ່ດີພໍ ຂອງເພີ່ນຈຶ່ງມາຢຶນຢຽບແຜ່ນດິນເຮົາຢູ່ໄດ້ຢ່າງສງ່າຜ່າເຜີຍ.... ບ່ອຍເຂົາໄປກ່ອນ ແລ້ວຫັນມາປຸກຄວາມເປັ່ນຊາດນິຍົມພາຍໃນກຸ່ມຊົນຊາດລາວເຮົາ ໃຫ້ເຂັ້ມແຂງແຮງກ້າແລ້ວຖ້າເບິ່ງວ່າ *ຍາມນັ້ນຍາມທີ່ລາວເປັ່ນລາວແທ້ ໆ* ແລ້ວ ຫລຽວເຫັນຂອງຕ່າງປະເທດ ຍ້ຳນປານເບັ້ດເຫັນລູກໝຸ້ນລະ... ແລ້ວການໃຫ້ຄວາມສົນໃຈແກ່ໜັງສືຕ່າງປະເທດນັ້ນ ກໍບໍ່ແມ່ນຄວາມເສັຽຫາຍຫຍັງ ຖ້າເຮົາຈະສົນໃຈໃນແງ່ໄຜ່ສແວງຫາສາຣະຄວາມຮູ້ ບໍ່ແມ່ນຕິດຈົນຂນາດບໍ່ໄດ້ອ່ານແລ້ວກິນເຂົ້າບໍ່ແຊບ

ຈິງທີ່ສຸດໃນໃຈ

*ດວງຈຳປາ*

× × ×

ວຽງຈັນ ໔/໑໐/໖໑

*ສບາຍດີ ປາໄນ ແລະ ດວງຈຳປາ*

*ເຮົາບັນນາທິການ ນິຕຍະສານ "ສຽງພອນສວັນ"*

ມີຄວາມປະສົງຢາກຈະຂໍຄວາມຊ່ວຍເຫລືອຈາກພວກທ່ານດັ່ງນີ້:

໑. ເຮົາຂໍອາສັຍຄວາມຮູ້ຄວາມສາມາດ ຂອງພວກທ່ານໃນການແຕ່ງກາບກອນ ດັ່ງທີ່ທ່ານໄດ້ຂຽນໃນ *ກະວີຊາວບ້ານ* ແຕ່ໃຫ້ເປັນກະວີປະເພດສຽດສີສັງຄົມ, ການເມືອງ, ສະໝາບປະຈຸບັນ ແລະຕ່າງ ໆ ອີກຫລາຍຢ່າງ ໂດຍສະເພາະເພື່ອຕິຊົມ (Critiquer) ສັງຄົມລາວເວລານີ້ ເພື່ອຈະໄດ້ນຳມາລົງ "*ກະວີຂອງສຽງພອນສວັນ*" ຈະໄດ້ບໍ່ ?

໔. ສ່ວນກະວີທີ່ທ່ານໄດ້ນຳພິມລົງໃນ ຊຸດ *ກະວີຊາວບ້ານ* ນັ້ນ ເຮົາຂໍເອົາມາລົງໃນນິຕຍະສານ "*ສຽງພອນສວັນ*" ຈະໄດ້ບໍ່ ?

ເມື່ອພວກທ່ານເຫັນມີຄວາມຈຳເປັນຢ່າງໃດ ຈົ່ງໄດ້ກະຣຸນາແຈ້ງໃຫ້ເຮົາຊາບໃນເວລາອັນຄວນດ້ວຍ ຖ້າມີເງື່ອນໄຂຢ່າງໃດ ໃຫ້ແຈ້ງເຮົາຊາບນຳດ້ວຍ

ລົງນາມ *ລົມ ສິງສົມພອນ*

ຈັດໝາຍສົ່ງຕອບເຮົາ: *ຣ.ຕ.ທ. ລົມ ສິງສົມພອນ ທີ່ກອງບັນຊາການຕຳຣວຈສັນຕິບານ (ວຽງຈັນ)*

× × ×

*ຕອບ ທ່ານບັນນາທິການ "ສຽງພອນສວັນ"*

ຄວາມປະສົງຂອງທ່ານ *ດວງຈຳປາ* ຄິດວ່າ ບໍ່ມີສິ່ງໃດຂັດຂ້ອງ ແລະຍັງເຫັນອີກວ່າ *ເປັນສິ່ງດີມີປໂຍດແກ່ທຸກກ້ຳທຸກຝ່າຍ* ແຕ່ວ່າ...

*ດວງຈຳປາ* ຍັງບໍ່ເຄີຍພົບໜ້າຕາ *"ສຽງພອນສວັນ"* ຂອງທ່ານຈັກເທື່ອ ຊອກຊື້ຕາມຮ້ານຂາຍປຶ້ມທົ່ວວຽງກໍບໍ່ເຫັນມີ ຈຶ່ງຍອມຮັບວ່າໝົດປັນຍາແທ້ ໆ ທີ່ຈະຕົກລົງຕາມຄວາມຕ້ອງການຂອງທ່ານຍັງບໍ່ທັນໄດ້ເທື່ອ... ຂໍໃຫ້ *ດວງຈຳປາ* ໄດ້ຈັບໄດ້ບາຍເບິ່ງຈັກເທື່ອກ່ອນໄດ້ບໍ່ ວ່າ *"ສຽງພອນສວັນ"* ມີຮູບຮ່າງໜ້າຕາເປັນຈັ່ງໃດ ? ມີແລວການຂຽນເນັ້ງໄປທາງໃດ ແລະສຳຄັນທີ່ສຸດ *ເຮົາ* ຊຶ່ງໄດ້ແກ່ທ່ານ *ຣ.ຕ.ທ. ລົມ ສິງສົມພອນ* ແລະ *ດວງຈຳປາ* ເອງນັ້ນ ຮູ້ຈັກກັນເປັນທາງການແລ້ວຫລືຍັງ....

ຕອບແນວນີ້ບໍ່ແມ່ນຄິດຈອງຫອງພອງຂົນວ່າ ຕົນມີວິເສດວິໂສພິລຶກ ແຕ່ວ່າ *ດວງຈຳປາ* ກໍຢາກມີຄວາມພາກພູມ

ໃຈ.... ຢາກໄດ້ຮັບກຽດຕາມທາງທີ່ຖືກຕ້ອງ ແລະສຳຄັນທີ່ສຸດແມ່ນຢາກໄດ້ຄວາມຄັກແນ່ໃຈ

ສະນັ້ນຈຶ່ງຂໍຕອບ ທ່ານ *ຣ.ຕ.ທ. ລົມ ສິງສົມພອນ* ວ່າ ຫາກທ່ານຈະກະຣຸນາໃຫ້ເຮົາໄດ້ມີໂອກາດ ຮູ້ຈັກກັນດີກວ່ານີ້ ຄວາມສະດວກອາດຈະມີຫລາຍກວ່າທີ່ທ່ານຫວັງໄວ້ ກໍເປັນໄດ້

ຂໍສແດງຄວາມນັບຖື

*ດວງຈຳປາ*

× × ×

ປາກເຊ, ວັນທີ ໑໘/໔/໗໔

*- ເພື່ອແທນຈົດໝາຍ ແດ່ ປາໄນ*
*- ເພື່ອເປັນມິດໃໝ່ ຂອງ ປາໄນ*
*- ເຄີຍຕິດຕາມຜົນງານຕລອດເວລາ*
*- ເພື່ອຂໍສນັບສນູນຄົນລາວດ້ວຍກັນ*
*- ເພື່ອເປັນມິດຕ່າງແດນເຂດແຂວງ*
*- ຂໍສນັບສນູນຜົນງານ ດ້ວຍຄວາມຈິງໃຈ ນຳທ່ານ*

ຈາກ *ດຳຂຳ ນໍມິນ* ທີ່ ປາກເຊ

# ແດ່ ປາໄນ ແລະ ດວງຈຳປາ

■ ຮຽນໄດ້ຈົ່ງຈຳຈື້ ຕາຕ່ຳຕັ້ງຕໍ່
ອ່ານປະຈຳທຸກມື້ ຊາວບ້ານ ຍ່ານກະອີ
ມີກອນເຜັດກອນຮ້ອນ ມີຕອນຍຳຕອນຍ່ຳ
ມີທັງຕິແລະຍ້ອງ ຕຳຕ້ອງແສບກະດອງ (ໃຈຜູ້ກະທຳ)

■ ນິຍາຍໂຣມເຣື່ອງສັ້ນ ຂັ້ນບ່ອນສນຸກຫລາຍ
ມີມາກມາຍໂສກາ ບ່ອນກະສັນແສນໂອ້
ມີບ່ອນເຣຫົວຫລິ້ນ ຢັກ ແຖມ ແກມ ຢອກ
ມີທັງຊີ້ບອກແຈ້ງ ເຕືອນຕ້ານຮູ້ເນື່ອດຶງ

■ ເກີນວ່າຄັກແທ້ ໆ ຖືກບ່ອນກະໃຈຈິດ ຮຽນເດ
ຈົ່ງຂໍຍົ່ຍົງຍົກ ຕື່ມສໍ່ຣະເສີນຍ້ອງ
ສົ່ງມາເຖິງຫົນຫ້ອງ ດວງຈຳປານອນນັ້ງ
ຈູຈອດເຖິງບ່ອນບ້ານ ປາໄນໄດ້ນັ່ງນອນ

■ ຜົລງານຂອງພວກເຈົ້າ ດີເດັ່ນເຫລືອກະດັດ
ຈັດໃຫ້ເປັ່ນນຳເບີວັນ (One) ແຫ່ງລາວເໜືອໃຕ້
ເຫລືອທີ່ພັນຣະນາໄດ້ ຈົ່ມເຊີຍໃຈຊື່ນ ນຳແລ້ວ
ປີຕິງືນດີນ້ອມແມ້ງ ດອມເຈົ້າບໍ່ຂາດຍາມ ໄດ້ເດ

■ ຂໍໃຫ້ຜົລງານເຈົ້າ ຍາວນານແສນຍ່ານ
ຍາວກວ່າລຳແມ່ນ້ຳ ກະແສຊຸ້ມທີ່ວ່າຍາວ
ຂໍໃຫ້ມີຄົນຫຸ້ມ ຫອມນຳທຸກເທື່ອ
ຄັນຫອມຂໍໃຫ້ຫອມກວ່າດວງດອກໄມ້ ມາລີຊ້ອນທີ່ວ່າຫອມພຸ້ນເດີ

■ ຣຽມຜູ້ເນົານັ່ງເບື້ອງ ແດນດ່ານແສນໄກກໍດີ
ຂໍເປັ່ນແຮງຊູຈັກ ແຫ່ງການອຸດໜຸນນັ້ນ
ຂໍເປັ່ນເຮືອຫຽວຫລົ້ນ ກະແສຍາວລົງລ່ອງ
ຂໍເປັ່ນແມງຜູ້ເຜີ້ງ ຕອມເຈົ້າດອກງາມ ແທ້ແລ້ວ

ຈາກ *ດຳຂຳນໍ້ມິນ* ທີ່ປາກເຊ

× × ×

## *ຕອບກອນແທນຈົດໝາຍ ຂອງ ດຳຂຳນໍ້ມິນ*

■ ໂອນໍ ເຈົ້າຜູ້ດຳກ່ຳກັ້ງງ ມິດໃໝ່ໃຈຮັກ ຣຽມເອີຍ
ຣຽມອ່ານຄຳຍໍຍົກ ຍິ້ມໄມຕຣີພ້ອມ
ຈັ່ງແມ່ນຫວານປານອ້ອຍ ເຜົາໄຟແຊບຕື່ມ
ຕົວຣຽມເລີຍອິ່ມຕົ້ງ ກິນອ້ອຍປາກຫວານ

■ ດຳຂຳ ນິ້ມພ່ອຍເຫລືອມ ເກີນວ່າເກ່ງທາງກອນ
ນໍ້ມິນໃສໄຣງ ໆ ໂລກກະວິເຮືອງຍ້ອນ

ກອນທ່ານຂຽນມາຍ້ອງ *ປາໄນ* ໄດ້ອ່ານ
ໃຈຈຶ່ງໄກວໂຕ່ງໂຕ້ນ ຍິນຮູ້ອີ່ມຊະອອນ

■ ປາກສິ່ງສານຕອບຖ້ອຍ ບໍ່ຮູ້ທີ່ *ດຳຂຳ*
ຮູ້ທີ່ເນົາແດນເຊ ຊອກໃສຊິພານພໍ້
ຈຶ່ງລົງພິມກອນນີ້ ຕາງເບັ້ນສານຕອບ
ປາກຂອບໃຈເພື່ອຍ້ອງ ພອນພ້ອມສິ່ງແຖມ

■ ຮູ້ວ່າ (*ດຳຂຳ*) ຍັງຢູ່ຍັ້ງ ດ້າວດ່ານແດນໃດ ກໍດີ
ຮຽນໄດ່ຄອນດະນຶງດຶດ ຂອດພະມັຍມີມ້າງ
ມິດໃໝ່ໃຈຈິງໝັ້ນ ສເນີກັນກ້າເກິ່ງ
ໂລກກົມ ໆ ທີ່ພາກພ້າວ ດາວພ້າຂ່າວເຖິງ ແດ່ທ້ອນ

(ກອນນີ້ *ປາໄນ* ແຕ່ງຕອບ)



ປາໄບ

ຮ່ວມໃຈກັນກັບ

ແລງ ພູຜາເງິນ

ແຕ່ງເຣື່ອງສັ້ນໂຮມພິມເປັ່ນເຫລັ້ມ

– ຊື່ –

# "ແດດອອກທ່ຽງຄືນ"

ຊື້ອ່ານໃຫ້ໄດ້

ອອກມື້ໃດແລ້ວຊິບອກ

ພິມທີ່ *ປາກປາສັກ* ການພິມ
9–11 ຖນົນຟ້າງູ່ມ ວຽງຈັນ
[ ທາງແຄມຂອງ ]
☎ 2262
ພ.ສ. 2514 ກຸມພາ – 1/1500

ເຊີນຊອກຊື້ຊອກອ່ານ

# "ໄຜ່ໜາມ"

( ຣາຍເດືອນ )

ຫນັງສືພິມໃຫມ່ຊື່ງຈະອອກໃນບໍ່ຊ້ານີ້

*ໂຮມນັກຂຽນນັກປະພັນຊັ້ນຍອດໆ ຂອງລາວ*

*ມາເກາຫນ້າຫລາຍຕາ*

## ອາຈານມະຫາສີລາ ວີຣະວົງສ໌

*ປັ້ນຂຶ້ນມາດ້ວຍນ້ຳເຫື່ອນ້ຳແຮງ*

*ແຕ່ງ–ຂຽນ ສຸດຝີມື*

ພິມທີ່ ປະກາປາສັກ ການພິມ 9-11 ຖນົນຟ້າງຸ່ມ [ແຄນ29] ວຽງຈັນ ໂທຣ.22